# ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນ
# ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

ພະແນກວິໄຈ ແລະ ປະເມີນຜົນ
ສະຖາບັນພັດທະນາການບໍລິຫານການສຶກສາ
ກະຊວງສຶກສາທິການ ແລະ ກິລາ

## ສາລະບານ

**ບົດທີ 1 ບົດນຳ** ........ 2
1. ຄວາມເປັນມາ ແລະ ຄວາມສຳຄັນ ........ 2
2. ຄຳຖາມການວິໄຈ. ........ 3
3. ຈຸດປະສົງຂອງການວິໄຈ. ........ 3
4. ປະໂຫຍດທີ່ໄດ້ຮັບ. ........ 3
5. ຂອບແນວຄິດໃນການວິໄຈ ........ 4
6. ຂອບເຂດການວິໄຈ. ........ 4
7. ນິຍາມຄຳສັບສະເພາະ ........ 6
**ບົດທີ 2 ເອກະສານທີ່ກ່ຽວຂ້ອງ** ........ 7
1. ຄຳສັ່ງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 7
2. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 9
3. ການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 14
4. ການຈັດກິດຈະກຳ ການຮຽນທີ່ເນັ້ນການປະຕິບັດຕົວຈິງ (Active Learning) ........ 17
**ບົດທີ 3 ການດຳເນີນການວິໄຈ** ........ 21
1. ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນ. ........ 21
2. ການສ້າງເຄື່ອງມືທີ່ໃຊ້ໃນການວິໄຈ. ........ 21
3. ການເກັບລວບລວມຂໍ້ມູນ ........ 21
4. ການວິເຄາະຂໍ້ມູນ. ........ 21
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ. ........ 22
**ບົດທີ 4 ການວິເຄາະຂໍ້ມູນ** ........ 23
I. ຜົນການວິເຄາະຂໍ້ມູນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ ........ 23
II. ຜົນການວິເຄາະຂໍ້ມູນໂຮງຮຽນປະຖົມ ........ 48
III. ຜົນການວິເຄາະຂໍ້ມູນໂຮງຮຽນມັດທະຍົມ. ........ 70
**ບົດທີ 5 ສະຫຼຸບ ແລະ ອະພິປາຍຜົນ** ........ 94
ສະຫຼຸບຜົນການວິເຄາະຂໍ້ມູນ. ........ 94
I. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 94
II. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 95
III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແນວທາງພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 97
IV. ການສຳພາດຜູ້ບໍລິຫານໂຮງຮຽນ ........ 98
ອະພິປາຍຜົນ ........ 103
I. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 103
II. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 105
III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແນວທາງພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ........ 106
IV. ການສຳພາດຜູ້ບໍລິຫານໂຮງຮຽນກ່ຽວກັບຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ........ 109

# ບົດທີ 1 ບົດນຳ

## 1. ຄວາມເປັນມາ ແລະ ຄວາມສຳຄັນ.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງ ໃນໂຮງຮຽນສາມັນສຶກສາ

1. ໃຫ້ນຳໃຊ້ຮູບແບບການຮຽນການສອນ ທີ່ເນັ້ນນັກຮຽນເປັນໃຈກາງ (Student Centered) ແລະ ການຮຽນການສອນທີ່ເນັ້ນການປະຕິບັດຕົວຈິງ (Active Learning) ເຂົ້າໃນການຈັດການຮຽນການສອນ ສຳລັບໂຮງຮຽນສາມັນສຶກສາໃນຂອບເຂດທົ່ວປະເທດ.

2. ການຈັດການຮຽນການສອນຕ້ອງໃຫ້ຄຳນຶງເຖິງຜົນປະໂຫຍດຂອງຜູ້ຮຽນເປັນສຳຄັນ ໂດຍຖືວ່າຜູ້ຮຽນທຸກຄົນມີຄວາມສາມາດຮຽນ ແລະ ພັດທະນາຕົນເອງໄດ້; ການຈັດການຮຽນການສອນຕ້ອງໃຫ້ສອດຄ່ອງກັບຄວາມສາມາດ, ຄວາມຕ້ອງການ, ຄວາມສົນໃຈ ແລະ ພອນສະຫວັນຂອງຜູ້ຮຽນ.

3. ໃຫ້ນຳໃຊ້ວິທີສອນ, ເຕັກນິກການສອນ ແລະ ສື່ການຮຽນການສອນທີ່ຫຼາກຫຼາຍ ເຂົ້າໃນການຈັດກິດຈະກຳການຮຽນການສອນ ເພື່ອໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນການຮຽນ ແລະ ໄດ້ລົງມືປະຕິບັດຕົວຈິງ; ເນັ້ນການຄິດວິເຄາະ, ການແກ້ບັນຫາ, ການປະດິດສ້າງ ແລະ ຄວາມສາມາດໃນການນຳໃຊ້ຄວາມຮູ້ທີ່ຮຽນມາໄປໃຊ້ໃນຊີວິດຕົວຈິງ.

4. ໃຫ້ຈັດກິດຈະກຳການຮຽນການສອນທັງຢູ່ໃນ ແລະ ນອກຫ້ອງຮຽນ ໃນນັ້ນ ໃຫ້ເອົາໃຈໃສ່ ຈັດກິດຈະກຳການຮຽນຢູ່ນອກຫ້ອງຮຽນໃຫ້ຫຼາຍຂຶ້ນ ໂດຍການຈັດຕັ້ງການໄປທັດສະນະສຶກສາຕາມສະຖານທີ່ ຊຶ່ງເປັນມໍລະດົກ ທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດຂອງທ້ອງຖິ່ນ; ໃຫ້ຜູ້ຮຽນມີໂອກາດໄດ້ສຶກສາຄົ້ນຄວ້າຢູ່ ຫ້ອງສະໝຸດ, ຫ້ອງທົດລອງ, ຫໍພິພິທະພັນ, ສວນພຶກສາສາດ ແລະ ຕາມແຫຼ່ງການຮຽນອື່ນໆທີ່ຫຼາກຫຼາຍ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ.

5. ໃຫ້ເອົາໃຈໃສ່ຈັດກິດຈະກຳນອກຫຼັກສູດ ຫຼື ກິດຈະກຳເສີມການຮຽນຕ່າງໆ ໃຫ້ຫຼາຍຂຶ້ນ ລວມທັງການສະແດງ, ການປະກວດ, ການແຂ່ງຂັນ ແລະ ການຈັດນິທັດສະການຕ່າງໆ ເພື່ອພັດທະນາຜູ້ຮຽນໃຫ້ມີການຂະຫຍາຍຕົວຮອບດ້ານ ທາງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ ຕາມຫ້າຫຼັກມູນການສຶກສາຂອງລາວ.

6. ໃຫ້ໂຮງຮຽນແຕ່ງຕ່າງໆເອົາໃຈໃສ່ການຮຽນການສອນກ່ຽວກັບມູນເຊື້ອດ້ານສິລະປະວັນນະຄະດີຂອງຊາດ ແລະ ທ້ອງຖິ່ນ ເປັນຕົ້ນແມ່ນການຟ້ອນລຳວົງລາວ, ຂັບລຳ ແລະ ການຮຽນກ່ຽວກັບເຄື່ອງດົນຕີພື້ນເມືອງ ເຊັ່ນ: ແຄນ, ປີ່, ຊໍ່, ລະນາດ, ກະຈັບປີ່ ແລະ ອື່ນໆ ຕາມຈຸດພິເສດ, ທ່າແຮງ ແລະ ພູມປັນຍາຂອງແຕ່ລະທ້ອງຖິ່ນ.

7. ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສົມທົບກັບກົມສາມັນສຶກສາ, ກົມສ້າງຄູ ແລະ ພາກສ່ວນກ່ຽວຂ້ອງ ພັດທະນາເອກະສານແນະນຳ, ປຶ້ມຄູ່ມື ແລະ ເອກະສານທີ່ກ່ຽວຂ້ອງອື່ນໆ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດ ພ້ອມທັງຈັດຕັ້ງການຝຶກອົບຮົມການນຳໃຊ້ເອກະສານດັ່ງກ່າວ.

8. ໃຫ້ບັນດາຫ້ອງການ, ກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການ
ສຶກສາທິການ ແລະ ກິລາເມືອງ, ນະຄອນ, ສະຖານການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

9. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

(ກະຊວງສຶກສາທິການ ແລະ ກິລາ; 2019; ໜ້າ 1-2)

ໃນຖານະທີ່ເປັນຄູຈຳເປັນຕ້ອງຮູ້ວິທີການຮຽນຂອງນັກຮຽນ, ຕ້ອງພິຈາລະນາວ່ານັກຮຽນຮັບເອົາຂໍ້ມູນດ້ວຍວິທີການທີ່ແຕກຕ່າງກັນ ຂຶ້ນກັບວິທີການຂອງເຂົາເຈົ້າ. ວິທີການຮຽນອາດຈະອາໄສການເບິ່ງຮູບພາບປະຈັກຕາ, ການຟັງ ຫຼື ການສຳຜັດ. ສິ່ງເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າພວກເຮົາຈຳເປັນຕ້ອງນຳໃຊ້ວິທີການສອນທີ່ຫຼາກຫຼາຍ

ເພື່ອຮັບຮອງວິທີການຮຽນທີ່ແຕກຕ່າງກັນ ໂດຍມີເປົ້າໝາຍໃຫ້ນັກຮຽນສາມາດຮັບເອົາຂໍ້ມູນໄດ້ຢ່າງເຕັມສ່ວນ ແລະ ນໍາເອົາຂໍ້ມູນທີ່ໄດ້ຮຽນໄປໃຊ້ໄດ້ຢ່າງມີປະສິດທິພາບ ອັນຈະນໍາໄປສູ່ການປ່ຽນແປງພຶດຕິກໍາ. ການນໍາໃຊ້ວິທີການຮຽນການສອນມີຈຸດປະສົງເພື່ອບັນລຸເປົ້າໝາຍຂອງການຮຽນ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງບໍ່ສາມາດຮັບປະກັນໄດ້ວ່າຈະໄດ້ຮັບຜົນແບບດຽວກັນ. ຍ້ອນນັກຮຽນແຕ່ລະຄົນມີວິທີການຮຽນຂອງໃຜລາວ, ບາງຄົນກໍ່ຮຽນໄດ້ໄວ, ບາງຄົນກໍ່ຮຽນໄດ້ຊ້າ. ການທີ່ຈະສອນໃຫ້ມີປະສິດທິຜົນໄດ້ນັ້ນ, ຄູຕ້ອງຮູ້ວ່ານັກຮຽນຂອງຕົນມີວິທີການຮຽນຄືແນວໃດ, ນັກຮຽນມີຄວາມເຂົ້າໃຈຄືແນວໃດກ່ຽວກັບການຮຽນ. ສະນັ້ນ, ຄູຕ້ອງເນັ້ນໃສ່ການສອນແບບທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເອົານັກຮຽນມີສ່ວນຮ່ວມແທນການປ້ອນຄວາມຮູ້ໃຫ້ນັກຮຽນ. ວິທີການສອນແບບທີ່ເນັ້ນນັກຮຽນເປັນໃຈກາງແມ່ນນັກຮຽນເປັນເຈົ້າການໃນໃນການເປັນຜູ້ຄົ້ນພົບ ຫຼື ສ້າງຄວາມຮູ້, ໂດຍໜ້າທີ່ຂອງຄູແມ່ນພຽງແຕ່ອອກແບບການຮຽນການສອນທີ່ເໝາະສົມສໍາລັບນັກຮຽນ. ນັກຮຽນເຮັດວຽກຮ່ວມກັບຄູເພື່ອສ້າງຂະບວນການຮຽນຮູ້ໃຫ້ເກີດຂຶ້ນ. (ກົມມັດທະຍົມ; 2014; ໜ້າ 26-29) ການສອນແບບທີ່ເນັ້ນນັກຮຽນເປັນໃຈກາງໃນຂະບວນການຮຽນການສອນຄູຈະຕ້ອງໄດ້ເນັ້ນໃສ່ການຮຽນຂອງນັກຮຽນຫຼາຍກວ່າການສອນ. ຄູຈະຕ້ອງຊ່ວຍນັກຮຽນ ຮຽນຮູ້, ຊ່ວຍນັກຮຽນໃຫ້ເຫັນບັນຫາ, ແລະ ແກ້ໄຂບັນຫາດ້ວຍຕົນເອງໃຫ້ຫຼາຍແທນທີ່ຈະໃຫ້ຄໍາຕອບສໍາເລັດຮູບແກ່ນັກຮຽນໂດຍກົງ. (ກົມຈັດຕັ້ງ ແລະ ພະນັກງານ; ໜ້າ 75)

ຈາກບັນຫາດັ່ງກ່າວ ສະຖາບັນພັດທະນາການບໍລິຫານການສຶກສາ ຈຶ່ງມີຄວາມສົນໃຈທີ່ຈະສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

## 2. ຄໍາຖາມການວິໄຈ.

2.1. ການນໍາໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດມີຄືແນວໃດ?

2.2. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດມີຄືແນວໃດ?

2.3. ແນວທາງໃນການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດມີຄືແນວໃດ?

## 3. ຈຸດປະສົງຂອງການວິໄຈ.

3.1. ເພື່ອສຶກສາການນໍາໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

3.2. ເພື່ອສຶກສາການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

3.3. ເພື່ອສຶກສາແນວທາງໃນການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

## 4. ປະໂຫຍດທີ່ໄດ້ຮັບ.

4.1. ຮັບຮູ້ການນໍາໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

4.2. ຮັບຮູ້ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

4.3. ເປັນແນວທາງໃນການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

4.4. ເປັນຂໍ້ມູນໃນການສ້າງຫຼັກສູດ ແລະ ການຝຶກອົບຮົມ ໃຫ້ແກ່ຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

**5. ຂອບແນວຄິດໃນການວິໄຈ.**

ໃນການສຶກສາຄົ້ນຄວ້າຄັ້ງນີ້ໄດ້ສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ໂດຍອີງໃສ່ສຶກສາເນື້ອ ເອກະສານສຳລັບຄົ້ນຄວ້າ ການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ແລະ ຫຼັກສູດສາມັນສຶກສາ.




**6. ຂອບເຂດການວິໄຈ.**

ໃນການສຶກສາຄົ້ນຄວ້າຄັ້ງນີ້ມີຂອບເຂດການວິໄຈດັ່ງນີ້:

6.1. ຂອບເຂດດ້ານເນື້ອໃນ.

ການສຶກສາຄັ້ງນີ້ເພື່ອສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຕາມຄວາມຄິດເຫັນຂອງຄູສອນ ແລະ ຜູ້ບໍລິຫານໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ ໂດຍອີງໃສ່ສຶກສາເນື້ອໃນ ເອກະສານສຳລັບຄົ້ນຄວ້າ ການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ແລະ ຫຼັກສູດສາມັນສຶກສາ ດັ່ງລຸ່ມນີ້:

**ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ**




6.2. ຂອບເຂດດ້ານປະຊາກອນ ແລະ ກຸ່ມຕົວຢ່າງ.

ການສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ປະກອບດ້ວຍກຸ່ມເປົ້າໝາຍ ໃນ 9 ແຂວງ ຈາກພາກເໜືອ: ແຂວງໄຊຍະບູລີ, ແຂວງຫຼວງພະບາງ ແລະ ແຂວງອຸດົມໄຊ. ພາກກາງ: ນະຄອນຫຼວງວຽງຈັນ, ແຂວງຄ□າມ່ວນ, ແຂວງສະຫວັນນະເຂດ. ພາກໃຕ້: ແຂວງຈ□າປາສັກ, ແຂວງເຊກອງ ແລະ ແຂວງອັດຕະປື.

- ຄູສອນໂຮງຮຽນປະຖົມ ມີຈຳນວນ 114 ຄົນ.
- ຄູສອນໂຮງຮຽນມັດທະຍົມ ມີຈຳນວນ 216 ຄົນ.
- ຜູ້ບໍລິຫານໂຮງຮຽນປະຖົມ: ມີຈຳນວນ 25 ຄົນ.
- ຜູ້ບໍລິຫານໂຮງຮຽນມັດທະຍົມ: ມີຈຳນວນ 34 ຄົນ.

6.3. ຕົວປ່ຽນທີ່ສຶກສາ.

ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

1. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ
   1.1 ຄວາມຮູ້ຄວາມເຂົ້າໃຈ
   1.2 ການນຳໃຊ້
   1.3 ຄວາມຕ້ອງການຝຶກອົບຮົມ
2. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ
   2.1 ການກະກຽມຄວາມພ້ອມ
   2.2 ສື່ການຮຽນການສອນ

2.3 ການສອນ

2.4 ການພັດທະນາ

2.5 ການວັດ ແລະ ປະເມີນຜົນ

3. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ແນວທາງພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

3.1 ຂໍ້ສະດວກ

3.2 ຂໍ້ຫຍຸ້ງຍາກ

3.3 ແນວທາງພັດທະນາ

**7. ນິຍາມຄໍາສັບສະເພາະ.**

ການສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຜູ້ວິໄຈໄດ້ນິຍາມຄໍາສັບທີ່ໃຊ້ໄວ້ດັ່ງນີ້:

7.1 ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ໝາຍເຖິງ ການສອນທີ່ເນັ້ນການຈັດກິດຈະກໍາທີ່ສອດຄ່ອງກັບການດໍາລົງຊີວິດ, ເໝາະສົມກັບຄວາມສາມາດ ແລະ ຄວາມສົນໃຈຂອງນັກຮຽນ ໂດຍໃຫ້ນັກຮຽນມີສ່ວນຮ່ວມ ແລະ ລົງມືປະຕິບັດຕົວຈິງທຸກຂັ້ນຕອນຈົນເກີດການຮຽນຮູ້ດ້ວຍຕົນເອງ.

7.2 ຄວາມຮູ້ຄວາມເຂົ້າໃຈ ໝາຍເຖິງ ຄູສອນມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບວິທີການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.3 ການນໍາໃຊ້ ໝາຍເຖິງ ຄູສອນມີການນໍາໃຊ້ວິທີການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.4 ຄວາມຕ້ອງການຝຶກອົບຮົມ ໝາຍເຖິງ ຄູສອນມີຄວາມຕ້ອງການຝຶກອົບຮົມວິທີການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.5 ການປະຕິບັດ ໝາຍເຖິງ ຄູສອນມີການຈັດຕັ້ງປະຕິບັດການຮຽນການສອນກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.6 ການກະກຽມຄວາມພ້ອມ ໝາຍເຖິງ ຄູສອນມີການກະກຽມຄວາມພ້ອມກ່ອນຂຶ້ນຫ້ອງສອນກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.7 ສື່ການຮຽນການສອນ ໝາຍເຖິງ ຄູສອນມີສື່ການຮຽນການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.8 ການສອນ ໝາຍເຖິງ ຄູສອນມີການສອນກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.9 ການພັດທະນາ ໝາຍເຖິງ ຄູສອນມີການພັດທະນາກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ເຊັ່ນວ່າ: ການຍົກລະດັບ, ຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ, ແລກປ່ຽນບົດຮຽນ ແລະ ອື່ນໆ.

7.10 ການວັດ ແລະ ປະເມີນຜົນ ໝາຍເຖິງ ຄູສອນມີການວັດ ແລະ ປະເມີນຜົນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.11 ຂໍ້ສະດວກ ໝາຍເຖິງ ສິ່ງສະດວກ ຫຼື ເອື້ອອໍານວຍໃຫ້ແກ່ການຈັດການຮຽນການສອນຂອງຄູກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.12 ຂໍ້ຫຍຸ້ງຍາກ ໝາຍເຖິງ ສິ່ງທີ່ເປັນອຸປະສັກຕໍ່ການຈັດການຮຽນການສອນຂອງຄູກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

7.13 ແນວທາງພັດທະນາ ໝາຍເຖິງ ແນວທາງ ຫຼື ວິທີການຕ່າງໆ ທີ່ສາມາດເຮັດໃຫ້ຄູສອນບັນລຸການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

# ບົດທີ 2 ເອກະສານທີ່ກ່ຽວຂ້ອງ

ການວິໄຈຄັ້ງນີ້ເປັນການສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຊຶ່ງຜູ້ວິໄຈໄດ້ສຶກສາເອກະສານ ຕາມລຳດັບດັ່ງນີ້:

**1. ຄຳສັ່ງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 389 -/ສສກ -

ນະຄອນຫຼວງວຽງຈັນ, ວັນທີ 29 MAR 2019

**ຄຳສັ່ງ**

**ວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງ ໃນໂຮງຮຽນສາມັນສຶກສາ**

**ເຖິງ:** ຫົວໜ້າຫ້ອງການ, ກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ຜູ້ອຳນວຍການ ວິທະຍາໄລຄູ,ໂຮງຮຽນປະຖົມສຶກສາ ແລະ ມັດທະຍົມສຶກສາ ໃນຂອບເຂດທົ່ວປະເທດ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 3 ກຸມພາ 2017;
- ອີງຕາມ ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 222/ສວສ, ລົງວັນທີ 20 ມີນາ 2019.

ເພື່ອປັບປຸງການຈັດການຮຽນການສອນໃນໂຮງຮຽນສາມັນສຶກສາທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດໃຫ້ມີຄຸນນະພາບສູງຂຶ້ນ ແນໃສ່ເຮັດໃຫ້ຄຸນນະພາບຂອງການສຶກສາໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຄຳສັ່ງ:**

1. ໃຫ້ນຳໃຊ້ຮູບແບບການຮຽນການສອນ ທີ່ເນັ້ນນັກຮຽນເປັນໃຈກາງ (Student Centered) ແລະ ການຮຽນການສອນທີ່ເນັ້ນການປະຕິບັດຕົວຈິງ (Active Learning) ເຂົ້າໃນການຈັດການຮຽນການສອນ ສຳລັບໂຮງຮຽນສາມັນສຶກສາໃນຂອບເຂດທົ່ວປະເທດ.

2. ການຈັດການຮຽນການສອນຕ້ອງໃຫ້ຄຳນຶງເຖິງຜົນປະໂຫຍດຂອງຜູ້ຮຽນເປັນສຳຄັນ ໂດຍຖືວ່າຜູ້ຮຽນທຸກຄົນມີຄວາມສາມາດຮຽນ ແລະ ພັດທະນາຕົນເອງໄດ້; ການຈັດການຮຽນການສອນຕ້ອງໃຫ້ສອດຄ່ອງກັບຄວາມສາມາດ, ຄວາມຕ້ອງການ, ຄວາມສົນໃຈ ແລະ ພອນສະຫວັນຂອງຜູ້ຮຽນ.

3. ໃຫ້ນຳໃຊ້ວິທີສອນ, ເຕັກນິກການສອນ ແລະ ສື່ການຮຽນການສອນທີ່ຫຼາກຫຼາຍ ເຂົ້າໃນການຈັດກິດຈະກຳການຮຽນການສອນ ເພື່ອໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນການຮຽນ ແລະ ໄດ້ລົງມືປະຕິບັດຕົວຈິງ;

ເນັ້ນການຄິດ**ວິເຄາະ**, ການແກ້ບັນຫາ, ການປະດິດສ້າງ ແລະ **ຄວາມສາມາດໃນການນໍາ**ໃຊ້ຄວາມຮູ້**ທີ່**ຮຽນມາໄປໃຊ້ໃນຊີວິດຕົວຈິງ.

4. ໃຫ້ຈັດກິດຈະກໍາການຮຽນການສອນທັງຢູ່ໃນ ແລະ ນອກຫ້ອງຮຽນ ໃນນັ້ນ ໃຫ້ເອົາໃຈໃສ່ ຈັດກິດຈະກໍາການຮຽນຢູ່ນອກຫ້ອງຮຽນໃຫ້ຫຼາຍຂຶ້ນ ໂດຍການຈັດຕັ້ງການໄປທັດສະນະສຶກສາຕາມສະຖານທີ່ ຊຶ່ງເປັນມໍລະດົກທາງດ້ານປະຫວັດສາດ, ວັດທະນະທໍາ ແລະ ທໍາມະຊາດຂອງທ້ອງຖິ່ນ; ໃຫ້ຜູ້ຮຽນມີໂອກາດໄດ້ສຶກສາຄົ້ນຄວ້າຢູ່ຫ້ອງສະໝຸດ, ຫ້ອງທົດລອງ, ຫໍພິພິທະພັນ, ສວນພຶກສາສາດ ແລະ ຕາມແຫຼ່ງການຮຽນອື່ນໆທີ່ຫຼາກຫຼາຍ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ.

5. ໃຫ້ເອົາໃຈໃສ່ຈັດກິດຈະກໍານອກຫຼັກສູດ ຫຼື ກິດຈະກໍາເສີມການຮຽນຕ່າງໆ ໃຫ້ຫຼາຍຂຶ້ນ ລວມທັງການສະແດງ, ການປະກວດ, ການແຂ່ງຂັນ ແລະ ການຈັດນິທັດສະການຕ່າງໆ ເພື່ອພັດທະນາຜູ້ຮຽນໃຫ້ມີການຂະຫຍາຍຕົວຮອບດ້ານ ທາງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ ຕາມຫຼັກການພື້ນຖານການສຶກສາຂອງລາວ.

6. ໃຫ້ໂຮງຮຽນແຕ່ລະແຫ່ງເອົາໃຈໃສ່ການຮຽນການສອນກ່ຽວກັບມູນເຊື້ອດ້ານສິລະປະວັນນະຄະດີຂອງຊາດ ແລະ ທ້ອງຖິ່ນ ເປັນຕົ້ນແມ່ນການຟ້ອນລໍາວົງລາວ, ຂັບລໍາ ແລະ ການຮຽນກ່ຽວກັບເຄື່ອງດົນຕີພື້ນເມືອງ ເຊັ່ນ: ແຄນ, ປີ່, ຊໍ, ລະນາດ, ກະຈັບປີ່ ແລະ ອື່ນໆ ຕາມຈຸດພິເສດ, ທ່າແຮງ ແລະ ພູມປັນຍາຂອງແຕ່ລະທ້ອງຖິ່ນ.

7. ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສົມທົບກັບກົມສາມັນສຶກສາ, ກົມສ້າງຄູ ແລະ ພາກສ່ວນກ່ຽວຂ້ອງ ພັດທະນາເອກະສານແນະນໍາ, ປຶ້ມຄູ່ມື ແລະ ເອກະສານທີ່ກ່ຽວຂ້ອງອື່ນໆ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດ ພ້ອມທັງຈັດຕັ້ງການຝຶກອົບຮົມການນໍາໃຊ້ເອກະສານດັ່ງກ່າວ.

8. ໃຫ້ບັນດາຫ້ອງການ, ກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ສະຖານການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

9. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປ.ແສງເດືອນ ຫຼ້າຈັນທະບູນ

**2. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

**ຄວາມໝາຍຂອງການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ**

ຄໍາວ່າ ຜູ້ຮຽນເປັນໃຈກາງ ໝາຍເຖິງການດໍາເນີນການໃດໆໃນການຈັດຂະບວນການຮຽນໃຫ້ຄໍານຶງເຖິງປະໂຫຍດຂອງຜູ້ຮຽນຫຼາຍທີ່ສຸດ ໂດຍການຈັດການສຶກສາຕ້ອງຖືຫຼັກວ່າ ຜູ້ຮຽນທຸກຄົນມີຄວາມສາມາດຮຽນ ແລະ ພັດທະນາຕົນເອງໄດ້. ການຮຽນທີ່ຜູ້ຮຽນເປັນໃຈກາງມີມາດຕະຖານມາຈາກທິດສະດີແລະ ຜົນການວິໄຈທີ່ຄົ້ນ ພົບວ່າ ເປັນວິທີການທີ່ເຮັດໃຫ້ຜູ້ຮຽນມີຄຸນນະພາບຢ່າງແທ້ຈິງ ເນື່ອງຈາກຜູ້ຮຽນເປັນຜູ້ມີສ່ວນຮ່ວມ, ຮຽນດ້ວຍຕົນເອງ, ເປັນຜູ້ປະຕິບັດ ຫຼືເປັນຜູ້ກະທໍາຫຼາຍກວ່າ ຜູ້ຖືກກະທໍາ

ການຈັດຂະບວນການຮຽນທີ່ຜູ້ຮຽນເປັນໃຈກາງ ຫຼື ການຈັດການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງບໍ່ແມ່ນເລື່ອງໃໝ່, ເປັນເນື້ອໃນທີ່ມີການສອນກັນມາໃນສະບັນຖາສ້າງຄູ ແລະ ໃນການຝຶກອົບຮົມຄູປະຈໍາການມາໂດຍຕະຫຼອດ, ແຕ່ຄູ ແລະ ສະຖານການສຶກສາພ້ອມທັງສະຖາບັນສ້າງຄູສ່ວນຫຼາຍຍັງບໍ່ໄດ້ນໍາມາປະຕິບັດຢ່າງຈິງຈັງ.

ດັ່ງນັ້ນ, ເພື່ອໃຫ້ສະຖານການສຶກສາ ແລະ ຄູຜູ້ສອນສາມາດດໍາ ເນີນການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ, ຄະນະອະນຸກໍາມະການປະຕິຮູບການຮຽນໄດ້ສະຫຼຸບເປັນ 3 ລະດັບຄື: ລະດັບຜູ້ຮຽນ, ລະດັບຫ້ອງຮຽນ ແລະ ລະດັບນອກຫ້ອງຮຽນ.

**ລະດັບຜູ້ຮຽນ** ໝາຍເຖິງ ຂະບວນການຮຽນທີ່ຜູ້ຮຽນມີສ່ວນຮ່ວມໃນການກໍານົດຈຸດມຸ່ງໝາຍ, ກິດຈະກໍາ ແລະ ວິທີການຮຽນ, ໄດ້ຄິດເອງ, ປະຕິບັດເອງ, ໄດ້ຮຽນດ້ວຍຕົນເອງພ້ອມທັງຮ່ວມປະເມີນຜົນການພັດທະນາການຮຽນຕາມສັກກະຍະພາບ, ຕາມຄວາມຕ້ອງການ, ຄວາມສົນໃຈ ແລະ ຄວາມຖະໜັດຂອງແຕ່ລະຄົນ.

**ລະດັບຫ້ອງຮຽນ** ໝາຍເຖິງຂະບວນການຮຽນທີ່

**ຜູ້ຮຽນ**

- ໄດ້ຄິດເອງ, ເຮັດເອງ, ປະຕິບັດເອງ ແລະ ສ້າງຄວາມຮູ້ດ້ວຍຕົນເອງໃນເລື່ອງທີ່ສອດຄ່ອງກັບການດໍາລົງຊີວິດຈາກແຫຼ່ງ ການຮຽນທີ່ຫຼາກຫຼາຍ.
- ມີສ່ວນຮ່ວມໃນການກໍານົດຈຸດ ມຸ່ງໝາຍ, ກິດຈະກໍາ ແລະ ວິທີການຮຽນ, ສາມາດຮຽນຮ່ວມກັບຜູ້ອື່ນຢ່າງມີຄວາມສຸກ.
- ມີສ່ວນຮ່ວມໃນການປະເມີນຜົນການພັດທະນາການຮຽນ.

**ຄູ**

- ເປັນຜູ້ວາງແຜນຂັ້ນຕອນ ທັງເນື້ອໃນ ແລະ ວິທີການແກ່ຜູ້ຮຽນ.
- ຈັດບັນຍາກາດໃຫ້ເອື້ອຕໍ່ການຮຽນ.
- ຊ່ວຍຊີ້ແນະແນວທາງການສະແຫວງຫາຄວາມຮູ້ທີ່ຖືກຕ້ອງໃຫ້ແກ່ຜູ້ຮຽນ ເປັນລາຍບຸກຄົນ.

ການຈັດຂະບວນການຮຽນລະດັບຫ້ອງຮຽນນີ້ ຜູ້ມີສ່ວ ນຮ່ວ ມໃນການຈັດຂະບວນການຮຽນນອກ ຈາກຄູ ແລະ ຜູ້ຮຽນແລ້ວພາກສ່ວນອື່ນໆທີ່ຈະຕ້ອງມີສ່ວນຮ່ວມ ຄືຜູ້ບໍລິຫານໂຮງຮຽນ, ສື່ ຕ່າງໆ, ບັນຍາກາດ ແລະ ສະພາບແວດລ້ອມຮອບໆຕົວຜູ້ຮຽນ.

**ລະດັບນອກຫ້ອງຮຽນ** ໝາຍເຖິງ ຂະບວນການຈັດການຮຽນທີ່ເ ປີດໂອກາດໃຫ້ຜູ້ປົກຄອງ ແລະ ຊຸມຊົນມີສ່ວນຮ່ວມໃນການວາງແຜນການຮຽນການສອນ ໂດຍຄໍານຶງເຖິງສັກກະຍະພາບ ແລະ ຄວາມຕ້ອງການຂອງຜູ້ຮຽນ, ໃຫ້ຜູ້ຮຽນມີໂອກາດໄດ້ຮຽນຈາກແຫຼ່ງການຮຽນທີ່ຫຼາກຫຼາຍທີ່ສອດຄ່ອງກັບການດໍາລົງຊີວິດໃນຄອບຄົວ, ຊຸມ ຊົນ ແລະ ທ້ອງຖິ່ນພ້ອມທັງເປີດໂອກາດໃຫ້ຜູ້ຮຽນມີສ່ວນຮ່ວມໃນຂະບວນການຮຽນການສອນທຸກຂັ້ນຕອນ.

ການຈັດຂະບວນການຮຽນລະດັບນອກຫ້ອງຮຽນນີ້ນອກຈາກຜູ້ມີສ່ວນຮ່ວມໃນ 2 ລະດັບທີ່ກ່າວແລ້ວຍັງລວມເຖິງຝ່າຍນະໂຍບາຍ, ຜູ້ບໍລິຫານ, ພໍ່ແມ່, ຜູ້ປົກຄອງ, ຊຸມຊົນ ແລະ ຝ່າຍສະໜັບສະໜູນ ອື່ນໆ.

ສະຫຼຸບ: ການຈັດຂະບວນການຮຽນທີ່ຜູ້ຮ ຽນເປັນໃຈກາງໝາຍເຖິງການຈັດຂະບວນການຮຽນທີ່

- ທຸກຝ່າຍມີສ່ວນຮ່ວມທຸກຂັ້ນຕອນ
- ເນັ້ນປະໂຫຍດສູງສຸດແກ່ຜູ້ຮຽນ
- ຜູ້ຮຽນໄດ້ພັດທະນາເຕັມສັກກະຍະພາບ
- ຜູ້ຮຽນມີທັກສະໃນການສະແຫວງຫາຄວາມຮູ້ຈາກແຫຼ່ງການຮຽນທີ່ຫຼາກຫຼາຍ
- ຜູ້ຮຽນສາມາດນໍາຄວາມຮູ້ໄປໃຊ້ໃນຊີວິດປະຈໍາວັນໄດ້.

**ຮູບແບບຂອງການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ**

ການຈັດຂະບວນການຮຽນທີ່ເ ນັ້ນຜູ້ຮ ຽນເປັນໃຈກາງ ສາມາດຈັດໄດ້ຫຼາຍຮູບແບບດ້ວຍກັນ ແຕ່ມີຮູບແບບຫນຶ່ງ ທີ່ໄດ້ຮັບຄວາມສົນໃຈ ແລະ ງ່າຍຕໍ່ການນໍາໄປປະຕິບັດຄືຮູບແບບ ຊິບປາ (CIPPA Model) ຂອງ ດຣ ທິດສະຫນາ ແຂມມະນີຊຶ່ງມີລາຍລະອຽດດັ່ງນີ້:

**C** ມາຈາກຄໍາວ່າ Construct ເຊິ່ງ ຫມາຍເຖິງການສ້າງຄວາມຮູ້ຕ າມແນວຄິດຂອງ Constructivism ວ່າ ກິດຈະກໍາການຮຽນທີ່ດີຄວນເປັນກິດຈະກໍາທີ່ຊ່ວຍໃຫ້ຜູ້ຮຽນມີໂອກາດສ້າງຄວາມຮູ້ດ້ວຍຕົນເອງ ຊຶ່ງຈະເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈ ແລະ ເກີດການຮຽນທີ່ມີຄວາມຫມາຍຕໍ່ຕົນເອງ ການທີ່ຜູ້ຮຽນມີໂອກາດໄດ້ສ້າງຄວາມຮູ້ດ້ວຍຕົນເອງນີ້ເປັນກິດຈະກໍາທີ່ຊ່ວຍໃຫ້ຜູ້ຮຽນມີສ່ວນທາງສະຕິປັນຍາ.

**I** ມາຈາກຄໍາ ວ່າ Interaction ຊຶ່ງ ຫມາຍເຖິງການປະຕິສໍາ ພັນກັບຜູ້ອື່ນ ຫຼືສິ່ງແວດລ້ອມຮອບຕົວກິດຈະກໍາ ການຮຽນທີ່ດີຈະຕ້ອງເປີດໂອກາດໃຫ້ຜູ້ຮຽນໄດ້ມີປະຕິສໍາພັນທາງສັງຄົມກັບບຸກຄົນ ແລະ ແຫຼ່ງຄວາມຮູ້ທີ່ຫຼາກຫຼາຍ ເຊິ່ງ ເປັນການຊ່ວຍໃຫ້ຜູ້ຮຽນມີສ່ວນຮ່ວມທາງສັງຄົມ.

**P** ມາຈາກຄໍາວ່າ Physical Participation ຊຶ່ງ ຫມາຍເຖິງການໃຫ້ຜູ້ຮຽນມີໂອກາດໄດ້ເຄື່ອນໄຫວທາງດ້ານຮ່າງກາຍ ໂດຍການເຮັດກິດຈະກໍາໃນລັກສະນະຕ່າງໆ ເຊິ່ງ ເປັນການຊ່ວຍໃຫ້ຜູ້ຮຽນມີສ່ວນຮ່ວມທາງກາຍ.

**P** ມາຈາກຄໍາ ວ່າ Process Learning ຫມາຍເຖິງການຮຽນຂະບວນການ ຕ່າງໆ. ກິດຈະກໍາການຮຽນທີ່ດີຄວນເປີດໂອກາດໃຫ້ຜູ້ຮຽນໄດ້ຮຽນຂະບວນການຕ່າງໆ ເຊິ່ງ ເປັນທັກສະທີ່ຈໍາເປັນຕໍ່ການດໍາລົງຊີວິດ ເຊັ່ນ: ຂະບວນການສະແຫວງຫາຄວາມຮູ້, ຂະບວນການຄິດ, ຂະບວນການແກ້ບັນຫາ, ຂະບວນການກຸ່ມ, ຂະບວນການພັດທະນາຕົນເອງເປັນຕົ້ນ. ການຮຽນກ່ຽວກັບຂະບວນການເປັນສິ່ງ ສໍາຄັນ ເຊັ່ນດຽວກັນກັບການຮຽນເນື້ອໃນຕ່າງໆ. ການຮຽນກ່ຽວກັບຂະບວນການເປັນການຊ່ວຍໃຫ້ຜູ້ຮຽນມີການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ ສ່ວນຮ່ວມທາງດ້ານສະຕິປັນຍາອີກທາງຫນຶ່ງ.

**A** ມາຈາກຄໍາວ່າ Application ຫມາຍເຖິງການນໍາຄວາມຮູ້ທີ່ໄ ດ້ຮຽນໄປນໍາໃຊ້ ຊຶ່ງຈະຊ່ວຍໃຫ້ຜູ້ຮຽນໄດ້ຮັບປະໂຫຍດຈາກການຮຽນ ແລະ ຊ່ວຍໃຫ້ຜູ້ຮຽນເກີດການຮຽນເພີ່ມເຕີມຂຶ້ນເລື້ອຍໆ. ກິດຈະກໍາການຮຽນທີ່ ມີພຽງແຕ່ການສອນເນື້ອໃນໃຫ້ ຜູ້ຮຽນເຂົ້າໃຈ ໂດຍຂາດກິດຈະກໍາ ການນໍາ ຄວາມຮູ້ໄປນໍາໃຊ້ຈະເຮັດໃຫ້ຜູ້ຮຽນຂາດ ການເຊື່ອມໂຍງລະຫວ່າງທິດສະດີກັບການປະຕິບັດ ຊຶ່ງຈະເຮັດໃຫ້ການຮຽນບໍ່ເກີດປະໂຫຍດເທົ່າທີ່ຄວນ. ການຈັດກິດຈະກໍາທີ່ຊ່ວຍໃຫ້ຜູ້ຮຽນສາມາດນໍາຄວາມຮູ້ໄປນໍາໃຊ້ໄດ້ນີ້ເປັນການຊ່ວຍໃຫ້ຜູ້ຮຽນມີສ່ວນຮ່ວມໃນກິດຈະກໍາໃນດ້ານໃດດ້ານຫນຶ່ງ ຫຼືຫຼາຍໆ ດ້ານຂຶ້ນຢູ່ກັບລັກສະນະຂອງເນື້ອໃນ ແລະ ກິດຈະກໍາ ທີ່ຈັດ.

ແນວຄິດການຈັດຂະບວນການຮຽນທີ່ເ ນັ້ນຜູ້ຮຽນເປັນໃຈກາງແບບ ຊິບປາ (CIPPA) ດັ່ງກ່າວນີ້ອາດຈະເອີ້ນອີກຢ່າງຫນຶ່ງ ວ່າ ການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງແບບປະສານ 5 ແນວຄິດຫຼັກເນື່ອງຈາກເປັນແນວຄິດທີ່ໄດ້ມາຈາກ ການປະສານແນວຄິດຫຼັກ 5 ແນວຄິດທີ່ ເປັນພື້ນຖານຂອງການຈັດການຮຽນການສອນ ໂດຍຖືຜູ້ຮຽນເປັນໃຈກາງດັ່ງນີ້:

1. ການສ້າງຄວາມຮູ້(Construction)
2. ຂະບວນການກຸ່ມ ແລະ ການຮຽນແບບຮ່ວມມື (Group Process and Cooperative Learning)
3. ຄວາມພ້ອມໃນການຮຽນ (Learnng Readiness)

4. ການຮຽນຂະບວນການ (Process Learning)
5. ການຖ່າຍທອດຄວາມຮູ້ (Transfer of Learning).

**ຕົວຊີ້ວັດຂອງການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ**

ສູນພັດທະນາຄຸນນະພາບການຮຽນການສອນ, ສຳນັກງານຄະນະກຳມະການ ການສຶກສາແຫ່ງຊາດ ໄດ້ພັດທະນາຕົວຊີ້ວັດການຈັດຂະບວນການຮຽນທີ່ຜູ້ຮຽນເປັນໃຈກາງ ໂດຍກຳນົດ ຕົວຊີ້ວັດການຮຽນຂອງຜູ້ຮຽນຈຳນວນ 9 ຂໍ້ ແລະ ຕົວຊີ້ວັດການສອນຂອງຄູຈຳນວນ 10 ຂໍ້ເພື່ອໃຊ້ເປັນເຄື່ອງກວດສອບວ່າ ເມື່ອໃດກໍຕາມທີ່ເກີດການຮຽນ ຫຼືການສອນຕາມຕົວຊີ້ວັດເຫຼົ່ານີ້ເມື່ອນັ້ນໄດ້ເກີດການຮຽນທີ່ຜູ້ຮຽນເປັນໃຈກາງແລ້ວ ດັ່ງນີ້:

**ຕົວຊີ້ວັດການຮຽນຂອງຜູ້ຮ ຽນ**

1. ມີປະສົບການກົງສຳ ພັນກັບທຳມະຊາດ ແລະ ສິ່ງແວດລ້ອມ.
2. ຝຶກປະຕິບັດຈົນຄົ້ນພົບຄວາມຖະໜັດ ແລະ ວິທີການຂອງຕົນເອງ.
3. ເຮັດກິດຈະກຳແລກປ່ຽນການຮຽນຈາກກຸ່ມ.
4. ຝຶກຄິດຢ່າງຫຼາກຫຼາຍ ແລະ ສ້າງສັນ, ຈິນຕະນາການຕະຫຼອດຈົນໄດ້ສະແດງອອກຢ່າງຊັດເຈນ ແລະ ມີເຫດຜົນ.
5. ໄດ້ຮັບການເສີມແຮງໃຫ້ຄົ້ນຫາຄຳຕອບແກ້ບັນຫາທັງດ້ວຍຕົນເອງ ແລະ ຮ່ວມດ້ວຍຊ່ວຍກັນ.
6. ໄດ້ຝຶ ກຄົ້ນຄວ້າລວບລວມຂໍ້ມູນ ແລະ ສ້າງຄວາມຮູ້ດ້ວຍຕົນເອງ.
7. ເລືອກເຮັດກິດຈະກຳ ຕາມຄວາມສາມາດ, ຄວາມຖະໜັດ ແລະ ຄວາມສົນໃຈ ຂອງຕົນເອງຢ່າງມີຄວາມສຸກ.
8. ຝຶກຕົນເອງໃຫ້ມີວິໄນ ແລະ ຮັບຜິດຊອບໃນການເຮັດວຽກ.
9. ຝຶກປະເມີນ, ປັບປຸງຕົນເອງ ແລະ ຍອມຮັບຜູ້ອື່ນ ຕະຫຼອດຈົນສົນໃຈໃຝ່ຫາຄວາມຮູ້ຢ່າງຕໍ່ເນື່ອງ.

**ຕົວຊີ້ວັດການສອນຂອງຄູ**

1. ກຽມການສອນທັງເນື້ອໃນ ແລະ ວິທີການ.
2. ຈັດສິ່ງແວດລ້ອມ ແລະ ບັນຍາກາດທີ່ຈູງໃຈ ແລະ ເສີມສ້າງໃຫ້ຜູ້ຮຽນເກີດການຮຽນ.
3. ເອົາໃຈໃສ່ຜູ້ຮຽນເປັນລາຍບຸກຄົນ ແລະ ສະແດງຄວາມເມດຕາຕໍ່ຜູ້ຮຽນຢ່າງທົ່ວເຖິງ.
4. ຈັດກິດຈະກຳ ແລະ ສະຖານະການໃຫ້ຜູ້ຮຽນໄດ້ສະແດງອອກ ແລະ ຄິດຢ່າງສ້າງສັນ.
5. ສົ່ງເສີມໃຫ້ຜູ້ຮຽນຝຶກຄິດ, ຝຶກເຮັດ ແລະ ຝຶກປັບປຸງຕົນເອງ.
6. ສົ່ງເສີມກິດຈະກຳ ແລກປ່ຽນຮໍ່າຮຽນ ຈາກກຸ່ມ ພ້ອມທັງສັງເກດສ່ວນດີ ແລະ ປັບປຸງສ່ວນດ້ອຍຂອງຜູ້ຮຽນ.
7. ໃຊ້ສື່ການສອນເພື່ອຝຶກການຄິດການແກ້ບັນຫາ ແລະ ການຄົ້ນພົບຄວາມຮູ້.
8. ໃຊ້ແຫຼ່ງການຮຽນທີ່ຫຼາກຫຼາຍ ແລະ ເຊື່ອມໂຍງປະສານສົມທົບກັບຊີວິດຕົວຈິງ.
9. ຝຶກຝົນກິລິຍາມາລະຍາດ ແລະ ວິໄນຕາມວັດທະນະທຳ.
10. ສັງເກດ ແລະ ປະເມີນພັດທະນາການຂອງຜູ້ຮຽນຢ່າງຕໍ່ເນື່ອງ.

**ບົດບາດຂອງຄູໃນການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ**

ການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ ບໍ່ວ່າ ຈະໃຊ້ແນວຄິດໃດຈະປະສົບຜົນສຳເລັດບໍ່ໄດ້ຫາກຄູແລະ ຜູ້ຮຽນບໍ່ປ່ຽນບົດບາດຂອງຕົນ. ຄູຈຳນວນໜຶ່ງ ຍັງຊິນເຄີຍກັບບົດບາດເດີມຄືການເປັນຜູ້ບອກເລົ່າ, ຖ່າຍທອດເນື້ອໃນຄວາມຮູ້ໃຫ້ຜູ້ຮຽນ ແລະ ຜູ້ຮຽນສ່ວນໜຶ່ງ ຍັງຊິນເຄີຍກັບການເປັນຜູ້ຟັງຮັບຄວາມຮູ້ແລະ ທ່ອງຈຳຄວາມຮູ້.

ການປ່ຽນແປງດັ່ງກ່າວຈະເກີດຂຶ້ນໄດ້ກໍຕໍ່ເມື່ອຄູ ແລະ ຜູ້ຮຽນທັງ 2 ຝ່າຍຕ່າງ ກໍປ່ຽນພຶດຕິກຳ ຄືຄູປ່ຽນພຶດຕິກຳການສອນ ແລະ ຜູ້ຮຽນກໍປ່ຽນພຶດຕິກຳການຮຽນ. ເຖິງແນວໃດກໍຕາມຜູ້ທີ່ຈຳເປັນຕ້ອງເລີ່ມຕົ້ນກ່ອນຄວນຈະເປັນຄູ ເພາະຄູເປັນຜູ້ດຳເນີນການ ແລະ ຮັບຜິດຊອບການຈັດການຮຽນການສອນຢູ່ແລ້ວ . ເມື່ອສະພາບ

ການ ຮຽນການສອນປ່ຽນແປງໄປ ຜູ້ຮຽນກໍຈຳເປັນຕ້ອງປ່ຽນແປງພຶດຕິກຳໄປຕາມສະພາບທີ່ຈັດໃຫ້ຂຶ້ນຢູ່ກັບການປັບຕົວຂອງຜູ້ຮຽນ ແລະ ແຮງເສີມທີ່ຈະໄດ້ຮັບຈາກຄູ.

**ບົດບາດຂອງຄູ**

**1. ການກຽມການສອນ**

1) ສຶກສາ ແລະ ວິເຄາະເລື່ອງທີ່ຈະສອນໃຫ້ເຂົ້າໃຈ

2) ສຶກສາຫາແຫຼ່ງຄວາມຮູ້ທີ່ຫຼາກຫຼາຍ

3) ວາງແຜນການສອນ

- ກຳນົດຈຸດ ປະສົງໃຫ້ຊັດເຈນ
- ວິເຄາະເນື້ອໃນ, ຄວາມຄິດລວມຍອດ ແລະ ກຳນົດລາຍລະອຽດໃຫ້ຊັດເຈນ
- ອອກແບບກິດຈະກຳການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ
- ກຳນົດວິທີການປະເມີນຜົນການຮຽນ.

4) ຈັດກຽມ

- ສື່, ວັດສະດຸການສອນໃຫ້ພຽງພໍສຳລັບຜູ້ຮຽນ
- ເອກະສານ, ປຶ້ມ ຫຼືຂໍ້ມູນຕ່າງໆທີ່ຈຳເປັນສຳລັບຜູ້ຮຽນ
- ຕິດຕໍ່ແຫຼ່ງຄວາມຮູ້ຕ່າງໆ ຊຶ່ງອາດຈະເປັນບຸກຄົນ, ສະຖານທີ່ ຫຼືເຄື່ອງປະຈັກຕາ, ວັດສະດຸຕ່າງໆ ແລະ ສຶກສາຫາຄວາມຮູ້ເພີ່ມເຕີມ.
- ເຄື່ອງມືການປະເມີນຜົນການຮຽນ.
- ຫ້ອງຮຽນ ຫຼື ສະຖານທີ່ເພື່ອການຈັດກິດຈະກຳການຮຽນເຊັ່ນ: ການຈັດ ໂຕະ, ຕັ່ງໃນລັກສະນະຕ່າງໆ.

**2. ການສອນ**

1) ສ້າງບັນຍາກາດການຮຽນທີ່ດີ

2) ກະຕຸ້ນຜູ້ຮຽນໃຫ້ສົນໃຈໃນການເຂົ້າຮ່ວມກິດຈະກຳ

3) ຈັດກິດຈະກຳການຮຽນຕາມແຜນທີ່ ໄດ້ກຽມໄວ້ ໂດຍອາດຈະມີການປັບແຜນ ໃຫ້ເຫມາະກັບຜູ້ຮຽນ ແລະ ສະຖານະການທີ່ເປັນຈິງ.

- ເບິ່ງແຍງໃຫ້ຜູ້ຮຽນດຳເນີນກິດຈະກຳ ຕ່າງໆ ແກ້ບັນຫາທີ່ອາດຈະເກີດຂຶ້ນ
- ອຳນວຍຄວາມສະດວກແກ່ຜູ້ຮຽນໃນການດຳເນີນກິດຈະກຳການຮຽນ
- ກະຕຸ້ນຜູ້ຮຽນໃຫ້ມີສ່ວນຮ່ວມໃນກິດຈະກຳຢ່າງເຕັມທີ່
- ສັງເກດ ແລະ ບັນທຶກພຶດຕິກຳ ແລະ ຂະບວນການຮຽນຂອງຜູ້ຮຽນພ້ອມທັງເຫດການທີ່ຈະສົ່ງຜົນຕໍ່ການຮຽນຂອງຜູ້ຮຽນທີ່ເກີດຂຶ້ນຂະນະເຮັດກິດຈະກຳ
- ໃຫ້ຄຳແນະນຳ ແລະ ຂໍ້ມູນຕ່າງໆແກ້ຜູ້ຮຽນຕາມຄວາມຈຳເປັນ
- ບັນທຶກບັນຫາ ແລະ ຂໍ້ຂັດຂ້ອງຕ່າງໆໃນການດຳເນີນກິດຈະກຳເພື່ອການປັບປຸງກິດຈະກຳໃຫ້ດີຂຶ້ນ
- ໃຫ້ການເສີມແຮງຜູ້ຮຽນຕາມຄວາມເຫມາະສົມ
- ໃຫ້ຄວາມຄິດເຫັນກ່ຽວກັບຜົນງານການຮຽນຂອງຜູ້ຮຽນ ແລະ ໃຫ້ຂໍ້ມູນ
- ເນື້ອໃນຄວາມຮູ້ເພີ່ມເຕີມແກ່ຜູ້ຮຽນຕາມຄວາມເຫມາະສົມ
- ປ້ອນຂໍ້ມູນແກ່ຜູ້ຮຽນກ່ຽວກັບພຶດຕິກຳ ແລະ ຂະບວນການຮຽນຂອງຜູ້ຮຽນພ້ອມທັງໃຫ້ຂໍ້ສະເຫນີແນະນຳຕາມຄວາມເຫມາະສົມ.

**3. ການປະເມີນຜົນ**

1) ເກັບລວບລວມຜົນງານ ແລະ ປະເມີນຜົນງານຂອງຜູ້ຮຽນ.

2) ປະເມີນຜົນການຮຽນຂອງຜູ້ຮຽນຕາມທີ່ກຳ ນົດໄວ້ໃນແຜນການສອນ.

**ຂັ້ນຕອນການຈັດຂະບວນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງ**

ການຈັດຂະບວນການຮຽນທີ່ຜູ້ຮຽນເປັນໃຈກາງມີຂັ້ນຕອນການດຳເນີນການ ດັ່ງຕໍ່ໄປນີ້.

**1. ຂັ້ນນຳ /ສຳຫຼວດຄວາມຕ້ອງການ**

- ສຳຫຼວດຄວາມຕ້ອງການ/ຄວາມສົນໃຈຂອງຜູ້ຮຽນ ໂດຍການສອບຖາມ, ສັງເກດ, ສຳພາດ ຫຼືເຮັດແບບທົດສອບກ່ອນຮຽນ.
- ສ້າງ/ກະຕຸ້ນຄວາມສົນໃຈ.
- ສຳຫຼວດພື້ນຖານຄວາມຮູ້ເດີມ.

ໃນການດຳເນີນການສຳຫຼວດຄວາມຕ້ອງການ/ຄວາມສົນໃຈຂອງຜູ້ຮຽນ ຄູຜູ້ສອນອາດຈັດສະຖານະການຕ່າງໆ ໃຫ້ຜູ້ຮຽນເກີດຄວາມສົນໃຈເລື່ອງໃດເລື່ອງໜຶ່ງ ເພື່ອນຳໄປສູ່ການຄົ້ນຫາ ແລະ ເລືອກຫົວຂໍ້ທີ່ຕົນສົນໃຈ ຫຼືໃຫ້ຜູ້ຮຽນໄດ້ຮຽນໃນສິ່ງທີ່ຄູຜູ້ສອນກະຕຸ້ນ ໃຫ້ຜູ້ຮຽນໄດ້ເກີດຄວາມສົນໃຈໃນສິ່ງທີ່ຢາກໃຫ້ຜູ້ຮຽນໄດ້ຮຽນ ໂດຍ ເຊື່ອມໂຍງສິ່ງທີ່ຜູ້ຮຽນສົນໃຈເຂົ້າກັບເນື້ອໃນການຮຽນທີ່ຄູວາງແຜນໄວ້. ດັ່ງນັ້ນ, ໃນການວາງແຜນການຮຽນການສອນຂອງຄູ ຈະຕ້ອງເປີດໂອກາດ/ມີຊ່ອງຫວ່າງໄວ້ໃຫ້ຜູ້ຮຽນໄດ້ຮ່ວມວາງແຜນການຮຽນດ້ວຍ.

ສຳຫຼວດຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນວ່າ ມີຄວາມສົນໃຈຮຽນເລື່ອງໃດ ໂດຍຜູ້ຮຽນຈະເລືອກຮຽນຫຍັງກໍຈະລົງມະຕິກັບໝູ່ເພື່ອນ ຄູຈະບໍ່ບັງຄັບ ແຕ່ຈະຮຽນໄປພ້ອມກັບຜູ້ຮຽນເຊັ່ນ: ໃນຍາມໜ້າຝົນຈະມີພະຍາດໄຂ້ຫວັດ, ຕາແດງ, ໂລກໄຂ້ເລືອດອອກ ຄູໃຫ້ຜູ້ຮຽນເລືອກວ່າ ຢາກຮຽນເລື່ ອງຫຍັງ, ຜູ້ຮຽນໄປຮ່ວມກັນ ພິຈາລະນາເລືອກເລື່ອງທີ່ ສົນໃຈແລ້ວລົງມະຕິກັນເຊັ່ນ ຜູ້ຮຽນສົນໃຈຮຽນເລື່ອງໂລກໄຂ້ເລືອດອອກເປັນຕົ້ນ.

**2. ຂັ້ນກະກຽມ**

- ຄູກຽມກ່ຽວກັບເນື້ອໃນການຮຽນ ແລະ ອຸປະກອນອື່ນໆທີ່ເ ອື້ອອຳນວຍຕໍ່ການຮຽນ.
- ວາງແຜນການຮຽນການສອນ.

ໃນການກຽມເນື້ອໃນການຮຽນ ແລະ ອຸປະກອນອື່ນໆ ທີ່ເອື້ອອຳນວຍຕໍ່ການຮຽນ, ຄູຜູ້ສອນຕ້ອງສຶກສາຫຼັກສູດ ແລະ ຈຸດປະສົງຂອງການຮຽນ ເພື່ອໃຫ້ເຂົ້າໃຈວ່າ ຫຼັກສູດ ຕ້ອງການຫຍັງ, ມີຈຸດປະສົງແນວໃດ ແລະ ເປັນຫຍັງຈຶ່ງ ຕ້ອງການແບບນັ້ນ ເພື່ອເປັນຂໍ້ມູນໃນການວາງແຜນການຮຽນການສອນ.

ໃນການວາງແຜນຈັດຂະບວນການຮຽນ ຄວນຈັດໃຫ້ມີຄວາມຕໍ່ເນື່ອງເຊື່ອມໂຍງກັນ ແລະ ຫາກເປັນໄປໄດ້ຄວນຈັດໃຫ້ມີ ຄວາມເຊື່ອມໂຍງ ແລະ ບູລະນາການ ແຕ່ລະສາຂາວິຊາທີ່ສຳພັນກັນເຂົ້ານຳກັນ ເພື່ອຊ່ວຍໃຫ້ການຈັດການຮຽນໄດ້ສອດຄ່ອງກັບວິຖີຊີວິດຈິງ ແລະ ໃຫ້ຜູ້ຮຽນໄດ້ຮຽນຈາກປະສົບການຈິງໃຫ້ຫຼາຍທີ່ສຸດ ທັງນີ້ ຄູຕ້ອງເປີດໂອກາດໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນການກຳນົດກິດຈະກຳການຮຽນ ຕາມຄວາມສົນໃຈ ແລະ ຄວາມຖະໜັດອີກດ້ວຍ.

**3. ຂັ້ນດຳເນີນການຈັດກິດຈະກຳການຮຽນ**

- ຂັ້ນນຳເຂົ້າສູ່ບົດຮຽນ.
- ຂັ້ນການຈັດກິດຈະກຳ ການຮຽນ.
- ຂັ້ນວິເຄາະ, ອະພິປາຍຜົນງານ, ຄວາມຮູ້ທີ່ສະຫຼຸບໄດ້ຈາກກິດຈະກຳການຮຽນ.

**ຂັ້ນນຳເຂົ້າສູ່ບົດຮຽນ** ຂັ້ນນີ້ຄູຄວນໃຊ້ປະເດັນ, ຄຳຖາມສະຖານະການ ຫຼືກິດຈະກຳກະຕຸ້ນ ຫຼືທ້າທາຍໃຫ້ຜູ້ຮຽນເກີດຄວາມສົນໃຈ ແລະ ຄູຄວນເປັນຜູ້ທີ່ຄອຍຊ່ວຍເຫຼືອຂອງຜູ້ຮຽນ ແລະ ເຮັດໃຫ້ຜູ້ຮຽນສຶກວ່າຄູຄືເພື່ອນທີ່ ຊ່ວຍເຫຼືອເຂົາໄດ້ໃນທຸກເລື່ອງນອກຈາກນັ້ນຄູຈະຕ້ອງຮູ້ຈັກແຕ່ລະຄົນເປັນຢ່າງດີ ເພື່ອຊ່ວຍໃຫ້ຜູ້ຮຽນໄດ້ໃຊ້ຄວາມຖະໜັດ, ຄວາມສົນໃຈ ແລະ ລີລາການຮຽນໃນການພັດທະນາສັກກະຍະພາບຂອງແຕ່ລະຄົນ ແລະ ສົ່ງເສີມໃຫ້ຜູ້ຮຽນເຂົ້າມາມີສ່ວນຮ່ວມຢ່າງເຕັມໃຈ ແລະ ກະຕືລືລົ້ນ.

**ຂັ້ນການຈັດກິດຈະກຳ ການຮຽນ** ຄູເປັນບຸກຄົນທີ່ສຳຄັນໃນການຈັດກິດຈະກຳການຮຽນ ໂດຍສົ່ງເສີມໃຫ້ຜູ້ຮຽນສາມາດພັດທະນາຕາມທຳມະຊາດ ແລະ ເຕັມຕາມ ສັກກະຍະພາບ ເນັ້ນການຈັດກິດຈະກຳ ແລະ ສ້າງບັນຍາກາດທີ່ສອດຄອງກັບການດຳລົງຊີວິດ ໂດຍໃຊ້ສື່ທີ່ຫຼາກຫຼາຍທີ່ເໝາະສົມກັບຄວາມສາມາດໃນ

ການຮຽນ ແລະ ຄວາມສົນໃຈຂອງຜູ້ຮຽນ, ຄຳນຶງເຖິງການໃຊ້ສະໜອງທຸກສ່ວນ (Whole Brain Approach) ໂດຍໃຫ້ຜູ້ຮຽນມີສ່ວນຮ່ວມສະເໜີກິດຈະກຳ ແລະ ລົງມືປະຕິບັດຕົວຈິງທຸກຂັ້ນຕອນ, ສະຫຼຸບຄວາມຮູ້ດ້ວຍຕົນເອງ, ພ້ອມທັງໃຫ້ຜູ້ຮຽນມີປະຕິສຳ ພັນທັງສະມາຊິກພາຍໃນກຸ່ມ ແລະ ສະມາຊິກລະຫວ່າງກຸ່ມ ເພື່ອໃຫ້ຜູ້ຮຽນໄດ້ຮູ້ວິທີການສະແຫວງຫາຄວາມຮູ້.

**ຂັ້ນວິເຄາະ, ອະພິປາຍຜົນງານ, ຄວາມຮູ້ທີ່ສະຫຼຸບໄດ້ຈາກກິດຈະກຳການຮຽນ** ໃນຂັ້ນຕອນນີ້ຄູ ແລະ ຜູ້ຮຽນຮ່ວມກັນອະພິປາຍຜົນທີ່ເກີດຈາກກິດຈະກຳການຮຽນ, ແລກປ່ຽນປະສົບການ ໂດຍເນັ້ນໃຫ້ຜູ້ຮຽນເກີດການຄົ້ນພົບຄວາມຮູ້ດ້ວຍຕົນເອງ ຄູເປັນພຽງ ຜູ້ສັງເກດການ, ໃຫ້ຂໍ້ມູນເພື່ອຊ່ວຍໃຫ້ຄວາມຮູ້ທີ່ໄດ້ຮັບຊັດເຈນ, ເປັນການເສີມແຮງ ແລະ ກະຕຸ້ນໃຫ້ຜູ້ຮຽນສົນໃຈການຄົ້ນຫາຄວາມຮູ້ຕໍ່ໄປ.

**4. ຂັ້ນປະເມີນຜົນ**

ການປະເມີນຜົນສຳ ເລັດຂອງການຈັດຂະບວນການຮຽນທີ່ຜູ້ຮຽນເປັນໃຈກາງນັ້ນ ເປັນການປະເມີນທີ່ເນັ້ນຜົນທີ່ເກີດຂຶ້ນກັບຜູ້ຮຽນເປັນສຳຄັນ ໂດຍການປະເມີນກ່ຽວກັບການພັດທະນາຂອງຜູ້ຮຽນ. ການສັງເກດພຶດຕິກຳການຮ່ວມກິດຈະກຳການຮຽນ ແລະ ການທົດສອບຄວບຄູ່ກັນ ເພື່ອຄົ້ນພົບສັກກະຍະພາບ, ຈຸດເດັ່ນ, ຈຸດດ້ອຍຂອງຜູ້ຮຽນ ເພື່ອການພັດທະນາ ແລະ ກວດສອບວ່າຂະບວນການຮຽນໄດ້ພັດທະນາຜູ້ຮຽນ ຕາມຈຸດປະສົງການຮຽນທີ່ກຳນົດ ຫຼືບໍ່. ນອກຈາກນັ້ນ, ຜົນການຮຽນຂອງຜູ້ຮຽນຈະເປັນຕົວຊີ້ວັດປະສິດທິພາບການສອນຂອງຄູອີກດ້ວຍ.

ດັ່ງນັ້ນ, ການວັດ ແລະ ປະເມີນຜົນການຮຽນທີ່ເນັ້ນຜູ້ຮຽນເປັນໃຈກາງຈະຕ້ອງ ວັດ ແລະ ປະເມີນໃຫ້ຄວບຄຸມ ທຸກດ້ານທັງໃນສ່ວນຂອງຂະບວນການ ແລະ ຜົນງານ, ທັງທາງດ້ານຄວາມຮູ້, ດ້ານຄວາມຮູ້ສຶກ ແລະ ທັກສະການສະແດງອອກທຸກ ດ້ານ, ມີການວັດຜົນຕາມສະພາບຈິງ ໂດຍເນັ້ນການວັດຈາກການປະຕິບັດ, ແຟ້ມ ສະສົມຜົນງານ ຊຶ່ງໃນການປະເມີນຜົນສາມາດປະເມີນລະຫວ່າງການຮຽນການສອນ ແລະ ປະເມີນສະຫຼຸບລວມ.

**5. ຂັ້ນສະຫຼຸບ ແລະ ນຳ ໄປໃຊ້**

ເປັນຂັ້ນຕອນທີ່ໄ ດ້ຜົນສົມບູນຂອງຂະບວນການຮຽນລາຍບຸກ ຄົນ. ຫຼັງຈາກທີ່ເຂົາໄດ້ດຳເນີນກິດຈະກຳການຮຽນ ແລະ ການສະແດງອອກຕາມຂະບວນການດັ່ງກ່າວຂ້າງຕົ້ນຜູ້ຮຽນຈະມີຄວາມຮູ້, ການເຂົ້າໃຈ ແລະ ນຳໄປໃຊ້ ເຊິ່ງ ພິຈາລະນາໄດ້ຈາກການຫາຂໍ້ສະຫຼຸບຈາກບົດຮຽນ ໂດຍມີຄູເປັນຜູ້ຊີ້ແນະເພີ່ມເຕີມ, ການແລກປ່ຽນວິທີການຮຽນ, ການສະທ້ອນຄວາມຄິດການສະແດງຜົນງານ, ການຈັດເທດສະການ, ການສະແດງອອກໃນລັກສະນະລະຄອນ, ການນຳ ສະເໜີຂໍ້ຄົ້ນພົບ, ການປັບປຸງຕົນເອງຂອງຜູ້ຮຽນເຊັ່ນ: ການປັບປຸງບຸກຄະລິກກະພາບ, ການເຂົ້າກັບຄົນອື່ນໄດ້, ການເຂົ້າໃຈຜູ້ອື່ນ, ການເຄົາລົບສິດ ຜູ້ອື່ນຕະຫຼອດຈົນການສ້າງສັນສິ່ງ ໃໝ່ໆ ທີ່ຈະເກີດປະ ໂຫຍດຕໍ່ສັງຄົມ, ຊຸມຊົນ ແລະ ການດຳລົງຊີວິດປະຈຳວັນ.

**3. ການສອນທີ່ເນັ້ນນັກຮຽນເປັນໃຈກາງ**

ການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ໝາຍເຖິງ ການສອນທີ່ເນັ້ນການຈັດກິດຈະກຳທີ່ສອດຄ່ອງກັບການດຳລົງຊີວິດ, ເໝາະສົມກັບຄວາມສາມາດ ແລະ ຄວາມສົນໃຈຂອງນັກຮຽນ ໂດຍໃຫ້ນັກຮຽນມີສ່ວນຮ່ວມ ແລະ ລົງມືປະຕິບັດຕົວຈິງທຸກຂັ້ນຕອນຈົນເກີດການຮຽນຮູ້ດ້ວຍຕົນເອງ.

**ຫຼັກການຈັດການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

1. ໃຫ້ນັກຮຽນເປັນຜູ້ສ້າງຄວາມຮູ້ດ້ວຍຕົນເອງ
   - ສະແຫວງຫາຄວາມຮູ້
   - ສຶກສາທຳຄວາມເຂົ້າໃຈ
   - ຄິດວິເຄາະ
   - ຕີຄວາມ
   - ແປຄວາມ
   - ສ້າງຄວາມໝາຍແກ່ຕົນເອງ

- ສັງເຄາະຂໍ້ມູນ
- ສະຫຼຸບຄວາມຮູ້

2. ໃຫ້ນັກຮຽນມີບົດບາດ ແລະ ມີສ່ວນຮ່ວມໃນຂະບວນການຮຽນໃຫ້ຫຼາຍທີ່ສຸດ
3. ໃຫ້ນັກຮຽນມີປະຕິສຳພັນຕໍ່ກັນ ແລະ ກັນ, ໄດ້ຮຽນຈາກກັນ ແລະ ກັນ, ໄດ້ແລກປ່ຽນຂໍ້ມູນ, ຄວາມຮູ້, ຄວາມຄິດ ແລະ ປະສົບການເຊິ່ງກັນ ແລະ ກັນຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້
4. ໃຫ້ນັກຮຽນໄດ້ຮຽນ ຂະບວນການ ຄວບຄູ່ໄປກັບຜົນງານ/ຂໍ້ສະຫຼຸບຄວາມຮູ້
5. ໃຫ້ນັກຮຽນນຳຄວາມຮູ້ທີ່ໄດ້ໄປໃຊ້ປະໂຫຍດໃນຊີວິດປະຈຳວັນ

**ຂັ້ນຕອນ/ຂະບວນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

| ຂັ້ນນຳເຂົ້າສູ່ບົດຮຽນ | ສ້າງ/ກະຕຸ້ນຄວາມສົນໃຈ ຫຼື ກຽມຄວາມພ້ອມໃນການຮຽນ |
|---|---|

⇓

| ຂັ້ນຈັດກິດຈະກຳ | ຈັດກິດຈະກຳຕາມຫຼັກການ |
|---|---|
| | ▪ ຜູ້ຮຽນໄດ້ສ້າງຄວາມຮູ້ດ້ວຍຕົນເອງ → Construct<br>▪ ຜູ້ຮຽນໄດ້ມີປະຕິສຳພັນຊ່ວຍກັນໃນການຮຽນ → Interaction<br>▪ ໃຫ້ຜູ້ຮຽນມີບົດບາດ ແລະ ມີສ່ວນຮ່ວມໃນການສ້າງຄວາມຮູ້ດ້ວຍຕົນເອງ → Participation<br>▪ ໃຫ້ຜູ້ຮຽນໄດ້ຮຽນຂະບວນການຄວບຄູ່ກັບຜົນງານ/ຂໍ້ສະຫຼຸບຄວາມຮູ້ → Process/Product<br>▪ ໃຫ້ຜູ້ຮຽນນຳຄວາມຮູ້ໄປໃຊ້ → Application |

⇓

| ຂັ້ນວິເຄາະ | ອະພິປາຍຜົນຈາກກິດຈະກຳ |
|---|---|
| | ▪ ວິເຄາະ, ອະພິປາຍຜົນງານ/ຄວາມຮູ້ທີ່ສະຫຼຸບໄດ້ຈາກກິດຈະກຳ (Product)<br>▪ ວິເຄາະ, ອະພິປາຍຂະບວນການຮຽນ (Process) |

⇓

| ຂັ້ນສະຫຼຸບ ແລະ ປະເມີນຜົນ | ສະຫຼຸບ ແລະ ປະເມີນຜົນການຮຽນຕາມຈຸດປະສົງ |
|---|---|

**ຮູບແບບການສອນ**




**ບົດບາດຂອງຄູໃນການສອນທີ່ເນັ້ນນັກຮຽນເປັນໃຈກາງ**



**4. ການຈັດກິດຈະກຳ ການຮຽນທີ່ເນັ້ນການປະຕິບັດຕົວຈິງ (Active Learning)**

ໃນສັດຕະວັດທີ 21 ເປັນຍຸກຂອງຂໍ້ມູນ ຂ່າ ວສານ ແລະ ການປ່ຽ ນແປງ. ດ້ວຍຄວາມກ້າວຫນ້າຂອງເຕັກໂນໂລຊີຂໍ້ມູນຂ່າວສານເຮັດໃຫ້ການສື່ ສານບໍ່ມີພົມແດນ. ສາມາດເຂົ້າເຖິງແຫຼ່ງ ຂໍ້ມູນໄດ້ທຸກທີ່ທຸກເວລາ. ຜົນກະທົບຈາກຍຸກໂລກາພິວັດນີ້ສົ່ງຜົນກະທົບໃຫ້ຜູ້ຮຽນຕ້ອງມີຄວາມສາມາດຮຽນດ້ວຍຕົນເອງຢ່າງຕໍ່ເນື່ອງ ແລະເປັນຜູ້ສະແຫວງຫາຄວາມຮູ້ຕະຫຼອດເວລາ. ໃນປະຈຸບັນມີຄວາມຮູ້ໃຫມ່ເກີດຂຶ້ນທຸກ ວິນາທີເຮັດໃຫ້ເນື້ອໃນວິຊາມີຫຼາຍເກີນກວ່າ ທີ່ຈະຮຽນຈາກຫ້ອງຮຽນໄດ້ຫມົດ, ຊຶ່ງການສອນແບບດັ້ງເດີມໂດຍໃຊ້"ການເວົ້າ, ບອກ, ເລົ່າ" ບໍ່ສາມາດພັດທະນາຜູ້ຮຽນໃຫ້ນຳຄວາມຮູ້ທີ່ໄດ້ຈາກຫ້ອງຮຽນໄປປະຕິບັດໄດ້ດີ. ດັ່ງນັ້ນ, ຈື່ງຈຳເປັນຕ້ອງປັບປ່ຽນວິທີການຈັດການ ຮຽນໃຫ້ຕອບສະຫນອງການປ່ຽນແປງຂອງສັງຄົມເຕັກໂນໂລຊີ, ຈາກຜູ້ສອນທີ່ມີບົດບາດເປັນຜູ້ຖ່າຍທອດປ່ຽນບົດບາດເປັນຜູ້ຊີ້ນຳວິທີການຫາຄວາມຮູ້ ເພື່ອພັດທະນາຜູ້ຮຽນໃຫ້ສາມາດສະແຫວງຫາຄວາມຮູ້ ແລະນຳໃຊ້ທັກສະຕ່າງໆສ້າງຄວາມເຂົ້າໃຈດ້ວຍຕົນເອງຈົນເກີດການຮຽນທີ່ມີຄວາມຫມາຍ.

ການຮຽນທີ່ເນັ້ນການປະຕິບັດຕົວຈິງ "ເປັນຂະບວນການຮຽນທີ່ໃຫ້ຜູ້ຮຽນໄດ້ຮຽນຢ່າງມີຄວາມຫມາຍໂດຍການຮ່ວມມືລະຫວ່າງຜູ້ຮຽນນຳກັນ, ຄູສອນຕ້ອງຫຼຸດບົດບາດໃນການສອນ ແລະ ການໃຫ້ຄວາມຮູ້ແກ່ຜູ້ຮຽນໂດຍກົງ, ແຕ່ໄປເພີ່ມຂະບວນການ ແລະ ກິດຈະກຳ ທີ່ຈະເຮັດໃຫ້ຜູ້ຮຽນເກີດຄວາມກະຕືລືລົ້ນໃນການເຮັດ ກິດຈະກຳ ຕ່າງໆຫຼາຍຂຶ້ນ ແລະ ຫຼາກຫຼາຍ ບໍ່ວ່າ ຈະເປັນການແລກປ່ຽນປະສົບການ ໂດຍການເວົ້າ, ການຂຽນ ແລະການອະພິປາຍກັບຫມູ່ເພື່ອນ".

**ກວຍແຫ່ງ ການຮຽນ (The Cone of Learning)**

ການຮຽນທີ່ເ ນັ້ນການປະຕິບັດຕົວຈິງ ຫຼື ການຮຽນແບບຕັ້ງຫນ້າ (Active Learning) ເປັນຂະບວນການຮຽນການສອນຢ່າງຫນຶ່ງ, ເປັນການຮຽນ ຜ່ານການປະຕິບັດ ຫຼືການລົງມືເຮັດ ຊຶ່ງ "ຄວາມຮູ້" ທີ່ເກີດຂຶ້ນແມ່ນຄວາມຮູ້ທີ່ໄດ້ຈາກປະສົບການ, ຈາກຂະບວນການໃນການຈັດກິດຈະກຳການຮຽນ. ຜູ້ຮຽນມີໂອກາດລົງມືປະຕິບັດຫຼາຍກວ່າ ການຟັງພຽງຢ່າງດຽວ; ຜູ້ຮຽນໄດ້ຮຽນໂດຍການອ່ານ, ການຂຽນ, ສົນທະນາ ແລະ ການວິເຄາະ ບັນຫາ. ນອກຈາກນັ້ນ, ຜູ້ຮຽນຍັງໃຊ້ຂະບວນການຄິດຂັ້ນສູງໄດ້ແກ່ການວິເຄາະ, ການສັງເຄາະ ແລະ ການປະເມີນ.

ການຮຽນທີ່ ເນັ້ນການປະຕິບັດຕົວຈິງ (Active Learning) ເຮັດໃຫ້ຜູ້ຮຽນ ສາມາດຮັກສາຜົນການຮຽນໃຫ້ມີຄວາມຍືນຍົງ ແລະ ຈື່ຈຳ ຍາວນານກວ່າ ຂະບວນການຮຽນທີ່ຜູ້ຮຽນເປັນຝ່າຍຮັບຄວາມຮູ້ (Passive Learning) ເພາະຂະບວນການຮຽນແບບ Active Learning ສອດຄອງກັບການເຮັດວຽກຂອງສະຫມອງທີ່ກ່ຽວຂ້ອງ ກັບຄວາມຈື່ຈຳ ໂດຍສາມາດເກັບ ແລະ ຈື່ຈຳສິ່ງ ທີ່ຜູ້ຮຽນມີສ່ວນຮ່ວມ, ມີປະຕິສຳພັນກັບຫມູ່ເພື່ອນ, ຜູ້ສອນ, ສະພາບແວດລ້ອມ, ການຮຽນທີ່ ໄດ້ຜ່ານການປະຕິບັດສາມາດເກັບຄວາມຈື່ຈຳ ໃນໄລຍະຍາວ (Long Term Memory) ເຮັດໃຫ້ຜົນການຮຽນຍັງຢູ່ໃນປະລິມານທີ່ຫຼາຍ ແລະ ໄລຍະຍາວນານກວ່າ ຊຶ່ງ ອະທິບາຍໄດ້ຈາກຮູບດ້ານລຸ່ມນີ້.




ຈາກຮູບ ພາບສາມາດເຫັນໄດ້ວ່າ ກວຍການຮຽນແບ່ງ ອອກເປັນ 2 ຂະບວນການຄື:

**1. ຂະບວນການຮຽນແບບຕັ້ງຮັບ (Passive Learning)**

- ການຮຽນຜ່ານການອ່ານ ແລະ ທ່ອງຈໍາຜູ້ຮຽນຈະຈື່ຈໍາໄດ້ພຽງແຕ່20%.
- ການຮຽນໂດຍການບັນຍາຍຢ່າງດຽວ ໂດຍຜູ້ຮຽນບໍ່ມີ ໂອກາດມີສ່ວນຮ່ວມ ໃນກິດຈະກໍາ ຕ່າງໆໃນຂະນະທີ່ຖືກສອນ ເມື່ອເວລາຜ່ານໄປຜູ້ຮຽນຈະຈື່ຈໍາໄດ້ພຽງ 20%. ຫາກໃນຂະບວນການຮຽນການສອນຜູ້ຮຽນມີໂອກາດໄດ້ ເຫັນພາບປະກອບກໍຈະເຮັດໃຫ້ຜົນການຮຽນເພີ່ມຂຶ້ນເປັນ 30%.
- ການຮຽນທີ່ຜູ້ສອນຈັດປະສົບການໃຫ້ຜູ້ຮຽນເພີ່ມຂຶ້ນເຊັ່ນ: ການໃຫ້ເບິ່ງຮູບເງົາການສາທິດ, ຈັດງານວາງສະແດງໃຫ້ຜູ້ຮຽນໄດ້ເບິ່ງລວມທັງການໃຫ້ຜູ້ຮຽນໄປທັດສະນະສຶກສາ ຫຼື ການໄປເບິ່ງຕົວຈິງກໍສົ່ງຜົນໃຫ້ການຮຽນເພີ່ມ ຂຶ້ນເປັນ 50%.

**2. ຂະບວນການຮຽນແບບຕັ້ງໜ້າ (Active Learning)**

- ຜູ້ຮຽນມີບົດບາດໃນການສະແຫວງຫາຄວາມຮູ້ ແລະ ຮຽນຢ່າງມີປະຕິສໍາພັນຈົນເກີດຄວາມຮູ້ຄວາມເຂົ້າໃຈ, ນໍາ ໄປນໍາ ໃຊ້, ສາມາດວິເຄາະ, ສັງເຄາະ, ປະເມີນຄ່າ ຫຼືສ້າງສັນສິ່ງ ຕ່າງໆ ແລະ ພັດທະນາຕົນເອງເຕັມຄວາມສາມາດ ລວມທັງຈັດປະສົບການການຮຽນໃຫ້ໄດ້ຮ່ວມອະພິປາຍ, ຝຶກທັກສະການສື່ສານເຮັດໃຫ້ຜົນການຮຽນເພີ່ມຂຶ້ນເປັນ 70%.
- ການນໍາສະເໜີຜົນງານການຮຽນໃນສະຖານະການຈໍາລອງ, ທັງຝຶກປະຕິບັດໃນສະພາບຕົວຈິງ ມີການເຊື່ອມໂຍງກັບສະຖານະການຕ່າງໆຈະເຮັດໃຫ້ຜົນການຮຽນເພີ່ມຂຶ້ນເຖິງ 90%.

**ລັກສະນະສໍາຄັນຂອງການຮຽນທີ່ເນັ້ນການປະຕິບັດຕົວຈິງ**

- ຄວາມຮູ້ເກີດຈາກປະສົບການ, ການສ້າງຄວາມຮູ້ແລະ ການສະຫຼຸບທົບທວນຂອງຜູ້ຮຽນ.
- ເປັນການຈັດການຮຽນທີ່ແນໃສ່ພັດທະນາຄວາມສາມາດຂອງສະໝອງໄດ້ແກ່ການຄິດ, ການແກ້ບັນຫາ, ການນໍາຄວາມຮູ້ໄປນໍາໃຊ້.
- ເປັນການຈັດການຮຽນທີ່ ເປີດໂອກາດໃຫ້ຜູ້ຮຽນມີສ່ວນຮ່ວມໃນການຮຽນ. ເປັນຂະບວນການສ້າງສະຖານະການໃຫ້ຜູ້ຮຽນອ່ານ, ເວົ້າ, ຟັງ, ຄິດ.
- ເປັນກິດຈະກໍາການຮຽນທີ່ເ ນັ້ນທັກສະການຄິດຂັ້ນສູງ.

- ເປັນກິດຈະກຳການຮຽນທີ່ ເປີດໂອກາດໃຫ້ຜູ້ຮຽນບູລະນາການຂໍ້ມູນ, ຂ່າວສານ, ການສື່ສານ ແລະ ຫຼັກການ ເຂົ້າໃນການສ້າງຄວາມຄິດລວມຍອດ.
- ຜູ້ຮຽນມີສ່ວນຮ່ວມໃນການຈັດການຮຽນ, ມີການສ້າງຄວາມຮູ້, ການສ້າງປະຕິສຳພັນຮ່ວມກັນ ແລະ ຮ່ວມມືກັນຫຼາຍກວ່າ ການແຂ່ງຂັນ.
- ຜູ້ຮຽນສ້າງຄວາມຮູ້ ແລະ ຈັດລະບົບການຮຽນດ້ວຍຕົນເອງ.
- ຜູ້ຮຽນໄດ້ຮູ້ໃນຄວາມຮັບຜິດຊອບຮ່ວມກັນ, ການມີວິໄນໃນການເຮັດວຽກ ແລະ ການແບ່ງປັນໜ້າທີ່ຄວາມຮັບຜິດຊອບ.
- ຜູ້ສອນເປັນຜູ້ອຳນວຍຄວາມສະດວກໃນການຈັດການຮຽນ ເພື່ອໃຫ້ຜູ້ຮຽນ ເປັນຜູ້ປະຕິບັດດ້ວຍຕົນເອງ.

**ຫຼັກການຈັດການຮຽນທີ່ເນັ້ນການປະຕິບັດຕົວຈິງ**

1. ຈັດກິດຈະກຳ ການຮຽນພາຍໃຕ້ຄວາມເຊື່ອພື້ນຖານ 2 ປະການຄື:
   1) ການຮຽນແມ່ນ ຄວາມພະຍາຍາມໂດຍທຳມະຊາດຂອງມະນຸດ.
   2) ແຕ່ລະຄົນມີວິທີການຮຽນທີ່ແຕກຕ່າງກັນ ໂດຍຜູ້ຮຽນຈະຖືກປ່ຽນບົດບາດຈາກຜູ້ຮັບຄວາມຮູ້ໄປສູ່ການມີສ່ວນຮ່ວມໃນການສ້າງຄວາມຮູ້.
2. ສົ່ງເສີມໃຫ້ຜູ້ຮຽນມີສ່ວນຮ່ວມໃນຫ້ອງຮຽນ, ການພົວພັນລະຫວ່າງຜູ້ສອນກັບຜູ້ຮຽນ ແລະ ລະຫວ່າງຜູ້ຮຽນຮ່ວມກັນ ໂດຍໃຊ້ເຕັກນິກ ຫຼືກິດຈະກຳຕ່າງໆ.
3. ເນັ້ນຂະບວນການຈັດການຮຽນທີ່ຜູ້ຮຽນໄດ້ລົງມືປະຕິບັດ ແລະ ໃຊ້ຂະບວນການຄິດກ່ຽວກັບສິ່ງທີ່ເຂົາໄດ້ປະຕິບັດລົງໄປ.
4. ຄູສອນມີບົດບາດອຳນວຍຄວາມສະດວກ ແລະ ຈັດສະພາບແວດລ້ອມທີ່ ເອື້ອອຳນວຍໃຫ້ຜູ້ຮຽນສ້າງຄວາມຮູ້ດ້ວຍຕົນເອງຈົນເກີດເປັນການຮຽນຢ່າງມີຄວາມຫມາຍ.

**ບົດບາດຂອງຄູ**

1. ໃຫ້ຄວາມສຳຄັນກັບຜູ້ຮຽນເປັນຫຼັກໃນການຈັດການຮຽນ; ກິດຈະກຳ ຕ້ອງສະທ້ອນຄວາມຕ້ອງການໃນການພັດທະນາຜູ້ຮຽນ ແລະ ເນັ້ນການນຳໄປໃຊ້ປະໂຫຍດໃນຊີວິດຈິງຂອງຜູ້ຮຽນ.
2. ວາງແຜນກ່ຽວກັບເວລາໃນການຈັດການຮຽນການສອນຢ່າງຊັດເຈນ ທັງທາງ ດ້ານເນື້ອໃນ ແລະ ກິດຈະກຳ.
3. ສ້າງບັນຍາກາດຂອງການມີສ່ວນຮ່ວມ, ການອະພິປາຍ ແລະ ການເຈລະຈາ ສົນທະນາທີ່ສົ່ງເສີມໃຫ້ຜູ້ຮຽນມີປະຕິສຳພັນທີ່ດີກັບຜູ້ສອນ ແລະ ຫມູ່ເພື່ອນຮ່ວມຫ້ອງ.
4. ຈັດກິດຈະກຳ ການຮຽນການສອນໃຫ້ເກີດຄວາມເຄື່ອນໄຫວ, ມີຊີວິດຊີວາ, ສົ່ງເສີມໃຫ້ຜູ້ຮຽນມີສ່ວນຮ່ວມໃນທຸກ ກິດຈະກຳ ລວມທັງກະຕຸ້ນໃຫ້ຜູ້ຮຽນປະສົບຄວາມສຳເລັດໃນການຮຽນ.
5. ຈັດສະພາບການຮຽນແບບຮ່ວມແຮງຮ່ວມໃຈ, ສົ່ງເສີມໃຫ້ເກີດການຮ່ວມມືຂອງຜູ້ຮຽນ.
6. ຈັດກິດຈະກຳ ການຮຽນການສອນໃຫ້ທ້າທາຍ ແລະ ໃຫ້ໂອກາດຜູ້ຮຽນໄດ້ປະຕິບັດກິດຈະກຳ ການຮຽນທີ່ຫຼາກຫຼາຍ.
7. ຄູຜູ້ສອນຕ້ອງໃຈກວ້າງ, ຍອມຮັບຄວາມສາມາດໃນການສະແດງອອກ ແລະ ຄວາມຄິດເຫັນຂອງຜູ້ຮຽນ.

**ຮູບແບບວິທີການຈັດກິດຈະກຳການຮຽນ**

ການຈັດການຮຽນທີ່ ເນັ້ນການປະຕິບັດຕົວຈິງ (Active Learning) ຄອບຄຸມວິທີການຈັດການຮຽນຫຼາກຫຼາຍວິທີເຊັ່ນ:

- ການຮຽນໂດຍໃຊ້ກິດຈະກຳເປັນພື້ນຖານ (Activity-Based Learning).
- ການຮຽນທີ່ເນັ້ນປະສົບການ (Experiential Learning).
- ການຮຽນໂດຍໃຊ້ບັນຫາເປັນພື້ນຖານ (Problem-Based Learning).
- ການຮຽນໂດຍໃຊ້ໂຄງການ/ໂຄງງານເປັນພື້ນຖານ (Project-Based Learning).
- ການຮຽນທີ່ເນັ້ນການຄິດ (Thinking Based Learning).
- ການຮຽນບໍລິການ (Service Learning).

- ການຮຽນຈາກການສືບຄົ້ນ (Inquiry-Based Learning).
- ການຮຽນດ້ວຍການຄົ້ນພົບ (Discovery Learning) ແລະ ອື່ນໆ.

ຢ່າງໃດກໍຕາມ, ຮູບແບບວິທີການຈັດກິດຈະກໍາການຮຽນນີ້ແມ່ນ ມີພື້ນຖານມາຈາກແນວຄິດດຽວກັນຄື ໃຫ້ຜູ້ຮຽນມີບົດບາດຫຼັກໃນການຮຽນຂອງຕົນເອງ.

# ບົດທີ 3 ການດຳເນີນການວິໄຈ

ການສຶກສາຄົ້ນຄວ້ານີ້ເພື່ອສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ເປັນການວິໄຈແບບປະລິມານ (Quantitative research) ແລະ ແບບຄຸນນະພາບ (Qualitative research) ຊຶ່ງມີລຳດັບຂັ້ນຕອນໃນການດຳເນີນການວິໄຈດັ່ງນີ້:

**1. ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນ.**

1.1. ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

1.2. ແບບສຳພາດຜູ້ບໍລິຫານການສຶກສາກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

**2. ການສ້າງເຄື່ອງມືທີ່ໃຊ້ໃນການວິໄຈ.**

ການສ້າງເຄື່ອງມືທີ່ໃຊ້ໃນການວິໄຈມີຂັ້ນຕອນດັ່ງນີ້:

2.1. ສຶກສາເນື້ອໃນ ເອກະສານສຳລັບຄົ້ນຄວ້າ ການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ແລະ ຫຼັກສູດສາມັນສຶກສາ.

2.2. ສ້າງແບບສອບຖາມໂດຍມີເນື້ອໃນຄອບຄຸມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

2.3. ເກັບຂໍ້ມູນຈາກກຸ່ມຕົວຢ່າງ ເພື່ອນຳມາວິເຄາະຂໍ້ມູນ ສະຫຼູບຜົນການວິເຄາະ ແລະ ລາຍງານຜົນການສຶກສາຄົ້ນຄວ້າຕໍ່ໄປ.

**3. ການເກັບລວບລວມຂໍ້ມູນ.**

ການເກັບລວບລວມຂໍ້ມູນດຳເນີນຕາມຂັ້ນຕອນດັ່ງນີ້:

3.1. ເຮັດໜັງສືແຈ້ງການຈາກຫ້ອງການ ກະຊວງສຶກສາທິການ ແລະ ກິລາ ເພື່ອຂໍຄວາມຮ່ວມມືໃນການເກັບລວບລວມຂໍ້ມູນ.

3.2. ທີມງານວິໄຈ ສະຖາບັນພັດທະນາການບໍລິຫານການສຶກສາໄດ້ນຳໜັງສືແຈ້ງການພ້ອມດ້ວຍແບບສອບຖາມ ລົງເກັບຂໍ້ມູນຈາກຄູສອນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ ໂດຍແຈກແບບສອບຖາມໃຫ້ກັບກຸ່ມເປົ້າໝາຍ ແລະ ເກັບຄືນ.

3.3. ທີມງານວິໄຈໄດ້ນຳໜັງສືແຈ້ງການພ້ອມດ້ວຍແບບສຳພາດ ເກັບກຳຂໍ້ມູນນຳຜູ້ບໍລິຫານໂຮງຮຽນ ກຸ່ມເປົ້າໝາຍ.

3.4. ເມື່ອໄດ້ຮັບແບບສອບຖາມຄືນ ຄະນະວິໄຈໄດ້ກວດສອບຄວາມຖືກຕ້ອງ ແລະ ຄວາມສົມບູນຂອງແບບສອບຖາມ ເພື່ອນຳໄປວິເຄາະ.

**4. ການວິເຄາະຂໍ້ມູນ.**

ໃນການວິເຄາະຂໍ້ມູນຜູ້ວິໄຈໄດ້ດຳເນີນການດັ່ງນີ້:

4.1. ນຳແບບສອບຖາມທີ່ສົມບູນລົງລະຫັດກວດໃຫ້ຄະແນນຕາມນໍ້າໜັກຄະແນນແຕ່ລະຂໍ້ ໂດຍການວິເຄາະຂໍ້ມູນດ້ວຍໂປຣແກຣມຄອມພິວເຕີສຳເລັດຮູບທາງສະຖິຕິ.

4.2. ວິທີວິເຄາະຂໍ້ມູນ.

- ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມໄດ້ນຳມາຫາຄ່າຄະແນນຄວາມຖີ່ (Frequency) ແລະ ຄ່າຄະແນນຄວາມຖີ່ຮ້ອຍລະ (%).

- ຂໍ້ມູນກ່ຽວກັບຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້ ແລະ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດໄດ້ນຳມາຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (SD) ເປັນຂໍ້ຍ່ອຍ ສະເໜີໃນຮູບຕາຕາລາງປະກອບຄຳບັນຍາຍ.

- ຂໍ້ມູນກ່ຽວກັບການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດໄດ້ນຳມາຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (SD) ເປັນຂໍ້ຍ່ອຍ ສະເໜີໃນຮູບຕາຕາລາງປະກອບຄຳບັນຍາຍ.

- ຂໍ້ມູນທີ່ໄດ້ຈາກການສໍາພາດຜູ້ບໍລິຫານໂຮງຮຽນກ່ຽວກັບຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ-ມັດທະຍົມໃນທົ່ວປະເທດ ໄດ້ນຳມາວິເຄາະເນື້ອໃນ (Content Analysis) ໂດຍການຈັດກຸ່ມຄຳ ແລະ ລຽງລຳດັບຄວາມສຳຄັນຂອງບັນຫາ.

4.3. ວິເຄາະຂໍ້ມູນ ແລະ ແປຄວາມໝາຍຂອງຄະແນນ

- ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ໂດຍລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (Rating Scale) ລຽງລຳດັບຈາກດີທີ່ສຸດ, ດີ, ປານກາງ, ອ່ອນ ແລະ ອ່ອນທີ່ສຸດຕາມຫຼັກການຂອງລິເຄີດ (Best & Kahn, 1993, p. 247) ຊຶ່ງກຳນົດຄະແນນດັ່ງນີ້:

5 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບດີທີ່ສຸດ.

4 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບດີ.

3 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບປານກາງ.

2 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບອ່ອນ.

1 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບອ່ອນທີ່ສຸດ.

ການແປຄວາມໝາຍຂອງຄະແນນເປັນການວິເຄາະ ເພື່ອຊາບຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ໂດຍໃຊ້ຄ່າສະເລ່ຍເປັນຕົວຊີ້ວັດ ຊຶ່ງກຳນົດເກນການວິເຄາະໄວ້ດັ່ງນີ້:

4.51-5.00 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບດີທີ່ສຸດ

3.51-4.50 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບດີ

2.51-3.50 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບປານກາງ

1.51-2.50 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບອ່ອນ

1.00-1.50 ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້, ຄວາມຕ້ອງການຝຶກອົບຮົມ ແລະ ການປະຕິບັດ ຢູ່ໃນລະດັບອ່ອນທີ່ສຸດ

**5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ.**

ທີມງານວິໄຈດຳເນີນການວິເຄາະຂໍ້ມູນດ້ວຍໂປຣແກຣມຄອມພິວເຕີສຳເລັດຮູບທາງສະຖິຕິ ໂດຍເລືອກສະເພາະວິທີວິເຄາະຂໍ້ມູນທີ່ສອດຄ່ອງກັບຈຸດປະສົງຂອງການວິໄຈດັ່ງນີ້:

5.1. ຄ່າຄວາມຖີ່ (Frequency) ແລະ ຄ່າຄວາມຖີ່ຮ້ອຍລະ (%).

5.2. ຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (SD).

5.3. ວິເຄາະເນື້ອໃນ (Content Analysis).

# ບົດທີ 4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນ ແລະ ແປຄວາມໝາຍຂອງຂໍ້ມູນກ່ຽວກັບການສຶກສາຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ມີດັ່ງນີ້:

ຕອນທີ່ 1 ຂໍ້ມູນທົ່ວໄປກ່ຽວກັບຜູ້ຕອບແບບສອບຖາມ

ຕອນທີ່ 2 ແບບສອບຖາມຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້ ແລະ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດຕາມຄວາມຄິດເຫັນຂອງຄູສອນ

ຕອນທີ່ 3 ແບບສອບຖາມການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດຕາມຄວາມຄິດເຫັນຂອງຄູສອນ

ຕອນທີ່ 4 ແບບສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ

## I. ຜົນການວິເຄາະຂໍ້ມູນໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ.

ຜູ້ວິໄຈນຳສະເໜີຜົນການວິເຄາະຂໍ້ມູນການວິໄຈຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຕາມລຳດັບດັ່ງນີ້:

**ຕອນທີ 1** ຂໍ້ມູນທົ່ວໄປກ່ຽວກັບຜູ້ຕອບແບບສອບຖາມ.

**ຕາຕະລາງທີ 1** ຂໍ້ມູນຜົນການວິເຄາະໂຮງຮຽນຂອງກຸ່ມເປົ້າໝາຍ.

| ໂຮງຮຽນ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| ປະຖົມ | 114 | 26.5 |
| ມັດທະຍົມຕອນຕົ້ນ | 94 | 21.9 |
| ມັດທະຍົມຕອນປາຍ | 31 | 7.2 |
| ມັດທະຍົມສົມບູນ | 191 | 44.4 |
| ລວມ: | 430 | 100 |

ຈາກຕາຕະລາງທີ 1 ຂໍ້ມູນຜົນການວິເຄາະໂຮງຮຽນຂອງກຸ່ມເປົ້າໝາຍ ພົບວ່າ ໂຮງຮຽນມັດທະຍົມສົມບູນ ມີຈຳນວນ 191 ແຫ່ງ ເທົ່າກັບ 44.4%; ໂຮງຮຽນປະຖົມ ມີຈຳນວນ 114 ແຫ່ງ ເທົ່າກັບ 26.5% ແລະ ໂຮງຮຽນມັດທະຍົມຕອນຕົ້ນ ມີຈຳນວນ 94 ຄົນ ເທົ່າກັບ 21.9%ຕາມລຳດັບ.

**ຕາຕະລາງທີ 2** ຂໍ້ມູນຜົນການວິເຄາະເພດຂອງກຸ່ມເປົ້າໝາຍ.

| ເພດ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| ຊາຍ | 131 | 30.5 |
| ຍິງ | 299 | 69.5 |
| ລວມ: | 430 | 100 |

ຈາກຕາຕະລາງທີ 2 ຂໍ້ມູນຜົນການວິເຄາະເພດຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ເປັນເພດຍິງ ມີຈຳນວນ 299 ຄົນ ເທົ່າກັບ 69.5% ແລະ ເພດຊາຍ ມີຈຳນວນ 131 ຄົນ ເທົ່າກັບ 30.5%.

**ຕາຕະລາງທີ 3** ຂໍ້ມູນຜົນການວິເຄາະວຸດທິການສຶກສາຂອງກຸ່ມເປົ້າໝາຍ.

| **ວຸດທິການສຶກສາ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຊັ້ນກາງລົງມາ | 47 | 11 |
| ຊັ້ນສູງ | 222 | 51.6 |
| ປະລິນຍາຕີຂຶ້ນໄປ | 161 | 37.4 |
| ລວມ: | 430 | 100 |

ຈາກຕາຕະລາງທີ 3 ຂໍ້ມູນຜົນການວິເຄາະວຸດທິການສຶກສາຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ຈົບຊັ້ນສູງ ມີຈຳນວນ 222 ຄົນ ເທົ່າກັບ 51.6%; ຈົບປະລິນຍາຕີຂຶ້ນໄປ ມີຈຳນວນ 161 ຄົນ ເທົ່າກັບ 37.4% ແລະ ຈົບຊັ້ນກາງລົງມາ ມີຈຳນວນ 47 ຄົນ ເທົ່າກັບ 11% ຕາມລຳດັບ.

**ຕາຕະລາງທີ 4** ຂໍ້ມູນຜົນການວິເຄາະປະສົບການເຮັດວຽກຂອງກຸ່ມເປົ້າໝາຍ.

| **ປະສົບການເຮັດວຽກ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| 10 ປີລົງມາ | 176 | 40.9 |
| 11 – 20 ປີ | 163 | 37.9 |
| 21 ປີຂຶ້ນໄປ | 90 | 20.9 |
| ບໍ່ໃຫ້ຂໍ້ມູນ | 1 | 0.2 |
| ລວມ: | 430 | 100 |

ຈາກຕາຕະລາງທີ 4 ຂໍ້ມູນຜົນການວິເຄາະປະສົບການເຮັດວຽກຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ມີປະສົບການເຮັດວຽກ 10 ປີລົງມາ ມີຈຳນວນ 176 ຄົນ ເທົ່າກັບ 40.9%; ປະສົບການເຮັດວຽກ 11-20 ປີ ມີຈຳນວນ 163 ຄົນ ເທົ່າກັບ 37.9% ແລະ ປະສົບການເຮັດວຽກ 21 ປີຂຶ້ນໄປມີຈຳນວນ 90 ຄົນ ເທົ່າກັບ 20.9% ຕາມລຳດັບ.

**ຕາຕະລາງທີ 5** ຂໍ້ມູນຜົນການວິເຄາະຕຳແໜ່ງຂອງກຸ່ມເປົ້າໝາຍ.

| **ຕຳແໜ່ງ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຜູ້ບໍລິຫານໂຮງຮຽນ | 42 | 9.7 |
| ຄູສອນ | 355 | 82.6 |
| ອື່ນໆ | 33 | 7.7 |
| ລວມ: | 430 | 100 |

ຈາກຕາຕະລາງທີ 5 ຂໍ້ມູນຜົນການວິເຄາະຕຳແໜ່ງຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ເປັນ ຄູສອນ ມີຈຳນວນ 355 ຄົນ ເທົ່າກັບ 82.6%; ຜູ້ບໍລິຫານໂຮງຮຽນ ມີຈຳນວນ 42 ຄົນ ເທົ່າກັບ 9.7% ແລະ ອື່ນໆ ມີຈຳນວນ 33 ຄົນ ເທົ່າກັບ 7.7% ຕາມລຳດັບ.

**ຕາຕະລາງທີ 6** ຂໍ້ມູນຜົນການວິເຄາະວິຊາທີ່ຈົບຂອງກຸ່ມເປົ້າໝາຍ.

| **ວິຊາທີ່ຈົບ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຄູປະຖົມ | 87 | 20.23 |
| ພາສາລາວ-ວັນນະຄະດີ | 53 | 12.33 |
| ຄະນິດສາດ | 50 | 11.63 |
| ພາສາອັງກິດ | 49 | 11.40 |
| ວິທະຍາສາດທຳມະຊາດ | 48 | 11.16 |
| ວິທະຍາສາດສັງຄົມ | 44 | 10.23 |
| ພະລະສຶກສາ | 12 | 2.79 |
| ສຶກສາພົນລະເມືອງ | 9 | 2.09 |
| ພູມສາດ-ປະຫວັດສາດ | 9 | 2.09 |
| ເຄມີສາດ | 8 | 1.86 |
| ຊີວະສາດ | 8 | 1.86 |
| ຟີຊິກສາດ | 8 | 1.86 |
| ຄະນິດສາດ-ຟີຊິກສາດ | 6 | 1.40 |
| ພູມສາດ | 5 | 1.16 |
| ເຄມີສາດ-ຊີວະສາດ | 4 | 0.93 |
| ປະຫວັດສາດ | 4 | 0.93 |
| ສິລະປະດົນຕຣີ | 2 | 0.47 |
| ພາສາຝຣັ່ງ | 2 | 0.47 |
| ອັກສອນສາດ | 2 | 0.47 |
| ວິທະຍາສາດ ແລະ ຄະນິດສາດ | 2 | 0.47 |
| ຄູອະນຸບານ | 2 | 0.47 |
| ຄະນິດສາດ-ຄອມພິວເຕີ | 1 | 0.23 |
| ພາລະສຶກສາ-ພາສາອັງກິດ | 1 | 0.23 |
| ພູມສາດ-ສຶກສາພົນລະເມືອງ | 1 | 0.23 |
| ສິລະປະກຳ | 1 | 0.23 |
| ພາສາຫວຽດນາມ | 1 | 0.23 |
| ພາສາລັດເຊຍ | 1 | 0.23 |
| ພາສາລາວ | 1 | 0.23 |
| ໄອຊີທີ (ICT) | 1 | 0.23 |
| ລ້ຽງສັດສັດຕະສະແພດ | 1 | 0.23 |
| ບໍລິການການເງິນ-ບັນຊີ | 1 | 0.23 |
| ສັງຄົມ ( ພາສາອັງກິດ ) | 1 | 0.23 |
| ວິທະຍາສາດສັງຄົມ,ການເມືອງ | 1 | 0.23 |
| ກະສິກຳ | 1 | 0.23 |
| ຝຶກອົບຮົມ | 1 | 0.23 |
| ບໍ່ໃຫ້ຂໍ້ມູນ | 2 | 0.47 |
| ລວມ: | 430 | 100 |

ຈາກຕາຕະລາງທີ 6 ຂໍ້ມູນຜົນການວິເຄາະວິຊາທີ່ຈົບຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ຈົບຄູປະຖົມ ມີຈຳນວນ 87 ຄົນ ເທົ່າກັບ 20.23%; ຄູພາສາລາວ-ວັນນະຄະດີ ມີຈຳນວນ 53 ຄົນ ເທົ່າກັບ 12.33%; ຄູຄະນິດສາດ ມີຈຳນວນ 50 ຄົນ ເທົ່າກັບ 11.63%; ຄູພາສາອັງກິດ ມີຈຳນວນ 49 ຄົນ ເທົ່າກັບ 11.40%; ຄູວິທະຍາສາດທຳມະຊາດ ມີຈຳນວນ 48 ຄົນ ເທົ່າກັບ 11.16%; ແລະ ຄູວິທະຍາສາດສັງຄົມມີຈຳນວນ 44 ຄົນ ເທົ່າກັບ 10.23% ຕາມລຳດັບ.

**ຕາຕະລາງທີ 7** ຂໍ້ມູນຜົນການວິເຄາະວິຊາທີ່ສອນຂອງກຸ່ມເປົ້າໝາຍ.

| ວິຊາທີ່ສອນ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| ສອນປະຖົມລວມທຸກວິຊາ | 108 | 25.12 |
| ຄະນິດສາດ | 56 | 13.02 |
| ພາສາລາວ | 52 | 12.09 |
| ພາສາອັງກິດ | 49 | 11.40 |
| ວັນນະຄະດີ | 47 | 10.93 |
| ປະຫວັດສາດ | 30 | 6.98 |
| ວິທະຍາສາດທຳມະຊາດ | 29 | 6.74 |
| ສຶກສາພົນລະເມືອງ (ການເມືອງ) | 29 | 6.74 |
| ພູມສາດ | 28 | 6.51 |
| ຟີຊິກສາດ | 23 | 5.35 |
| ເຄມີສາດ | 22 | 5.12 |
| ຊີວະສາດ | 21 | 4.88 |
| ICT | 19 | 4.42 |
| ພື້ນຖານວິຊາຊີບ | 17 | 3.95 |
| ພະລະສຶກສາ | 16 | 3.72 |
| ສິລະປະດົນຕຣີ | 13 | 3.02 |
| ສິລະປະກຳ | 10 | 2.33 |
| ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ | 4 | 0.93 |
| ວິທະຍາສາດສັງຄົມ | 2 | 0.47 |
| ພາສາຝຣັ່ງ | 1 | 0.23 |
| ພາສາຫວຽດນາມ | 1 | 0.23 |
| ບໍລິການການເງິນ-ບັນຊີ | 1 | 0.23 |
| ກະສິກຳ | 1 | 0.23 |
| ສອນເປັນໜ່ວຍວິຊາ | 1 | 0.23 |
| ບໍ່ໄດ້ສອນ | 2 | 0.47 |
| ບໍ່ໃຫ້ຂໍ້ມູນ | 2 | 0.47 |
| ບໍ່ໃຫ້ຂໍ້ມູນ | 4 | 2.8 |

ຈາກຕາຕະລາງທີ 7 ຂໍ້ມູນຜົນການວິເຄາະວິຊາທີ່ສອນຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ສອນປະຖົມລວມທຸກວິຊາ ມີຈຳນວນ 108 ຄົນ ເທົ່າກັບ 25.12%; ຄະນິດສາດ ມີຈຳນວນ 56 ຄົນ ເທົ່າກັບ 13.02%; ພາສາລາວ ມີຈຳນວນ 52 ຄົນ ເທົ່າກັບ 12.09%; ຄູພາສາອັງກິດ ມີຈຳນວນ 49 ຄົນ ເທົ່າກັບ 11.40% ແລະ ວັນນະຄະດີ ມີຈຳນວນ 47 ຄົນ ເທົ່າກັບ 10.93% ຕາມລຳດັບ.

**ຕອນທີ່ 2** ຄວາມຮູ້ຄວາມເຂົ້າໃຈ, ການນຳໃຊ້ ແລະ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

**ຕາຕະລາງທີ 8** ຂໍ້ມູນຜົນການວິເຄາະຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

| **ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ:** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບຄວາມຮູ້ຄວາມເຂົ້າໃຈ | ຈັດອັນດັບ |
|---|---|---|---|---|
| 1. ວິທີສອນແບບປະຕິບັດຕົວຈິງ | 4.05 | .536 | ຫຼາຍ | 13 |
| 2. ວິທີສອນແບບດາວ 5 ແຈ | 3.74 | .745 | ຫຼາຍ | 8 |
| 3. ວິທີສອນແບບອະທິບາຍ | 4.11 | .650 | ຫຼາຍ | 15 |
| 4. ວິທີສອນແບບສົນທະນາ | 4.10 | .619 | ຫຼາຍ | 14 |
| 5. ວິທີສອນແບບສືບສວນຊອກຫາຄວາມຮູ້ | 3.55 | .742 | ຫຼາຍ | 2 |
| 6. ວິທີສອນແບບຫຼິ້ນເກມ | 3.60 | .801 | ຫຼາຍ | 3 |
| 7. ວິທີສອນແບບສາທິດ | 3.93 | .674 | ຫຼາຍ | 11 |
| 8. ວິທີສອນແບບໃຊ້ບົດບາດສົມມຸດ | 3.71 | .734 | ຫຼາຍ | 6 |
| 9. ວິທີສອນແບບເລົ່າເລື່ອງ | 3.67 | .847 | ຫຼາຍ | 5 |
| 10. ວິທີສອນແບບປະຕິບັດໂຄງການ | 3.61 | .912 | ຫຼາຍ | 4 |
| 11. ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ | 3.26 | .849 | ປານກາງ | 1 |
| 12. ວິທີສອນແບບໃຊ້ບົດຮຽນສຳເລັດຮູບ | 3.74 | .732 | ຫຼາຍ | 7 |
| 13. ວິທີສອນແບບໃຊ້ຊຸດການສອນ | 3.97 | .704 | ຫຼາຍ | 12 |
| 14. ວິທີສອນແບບແກ້ບັນຫາ | 3.75 | .734 | ຫຼາຍ | 9 |
| 15. ວິທີສອນແບບການຮຽນແບບຮ່ວມມື | 3.88 | .704 | ຫຼາຍ | 10 |

| 4.2 ທ່ານໄດ້ຮ່ວມໂມງສອນ ແລະ ຖອດຖອນບົດຮຽນກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງ ພາຍໃນໂຮງຮຽນ | 4.11 | .866 | ຫຼາຍ | 6 |
| 4.3 ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ | 3.78 | .966 | ຫຼາຍ | 2 |
| 4.4 ທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ | 3.81 | .881 | ຫຼາຍ | 4 |
| 4.5 ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ | 3.62 | .791 | ຫຼາຍ | 1 |
| 4.6 ທ່ານມີການຊອກຮູ້ ແລະ ຄົ້ນຄວ້າຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງດ້ວຍຕົນເອງ | 3.95 | .650 | ຫຼາຍ | 5 |

ຈາກຕາຕະລາງທີ 44 ຂໍ້ມູນຜົນການວິເຄາະການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການພັດທະນາ ຢູ່ໃນລະດັບຫຼາຍ ມີທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ ($\bar{X}$=3.62; SD=0.791), ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ ($\bar{X}$=3.78;SD=0.966), ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ($\bar{X}$=3.80; SD=0.979) ແລະ ທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ ($\bar{X}$=3.81; SD=0.881) ຕາມລໍາດັບ.

**ຕາຕະລາງທີ 45** ຂໍ້ມູນຜົນການວິເຄາະການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ

| **5. ການວັດ ແລະ ປະເມີນຜົນ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 5.1 ທ່ານໄດ້ປະຕິບັດຕາມເກນ ແລະ ວິທີການປະເມີນຜົນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງທີ່ໄດ້ກຳນົດໄວ້ | 3.98 | .609 | ຫຼາຍ | 3 |
| 5.2 ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) | 3.84 | .826 | ຫຼາຍ | 1 |
| 5.3 ທ່ານມີການນ□າຜົນຈາກການກວດກາ ແລະ ການສອບເສັງຂອງນັກຮຽນມາປັບປຸງການຮຽນການສອນຂອງຕົນເອງ | 4.20 | .598 | ຫຼາຍ | 4 |
| 5.4 ທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ | 3.95 | .727 | ຫຼາຍ | 2 |

ຈາກຕາຕະລາງທີ 45 ຂໍ້ມູນຜົນການວິເຄາະການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບຫຼາຍ ມີທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) ($\bar{X}$=3.84; SD=0.826) ແລະ ທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ($\bar{X}$=3.95;SD=0.727) ຕາມລຳດັບ.

**ຕາຕະລາງທີ 46** ຂໍ້ມູນຜົນການວິເຄາະຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ

| **ຄຳຖາມ** | **ຂໍ້ສະດວກ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 1. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີຄືແນວໃດ? | ນັກຮຽນມີສິນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ | 79 | 69.30 |
| | ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາດ້ວຍຕົນເອງ | 23 | 20.18 |
| | ເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ, | | |

| | | | |
|---|---|---|---|
| | ມີຄວາມເອົາໃຈໃສ່ຕໍ່ການຮຽນ-ການສອນແລະ ເກີດຄວາມສົນໃຈ | 17 | 14.91 |
| | ນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ (ຜົນການຮຽນຂອງນັກຮຽນດີຂຶ້ນ) | 16 | 14.04 |
| | ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) | 14 | 12.28 |
| | ນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ) | 12 | 10.53 |

ຈາກຕາຕະລາງທີ 46 ຂໍ້ມູນຜົນການວິເຄາະຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ ມີຈຳນວນ 79 ຄົນ ເທົ່າກັບ 69.30%; ຮອງລົງມາແມ່ນ ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ມີຈຳນວນ 23 ຄົນ ເທົ່າກັບ 20.18%; ຕໍ່ມາແມ່ນເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ, ມີຄວາມເອົາໃຈໃສ່ຕໍ່ການຮຽນ-ການສອນແລະ ເກີດຄວາມສົນໃຈ ມີຈຳນວນ 17 ຄົນ ເທົ່າກັບ 14.91%; ສຸດທ້າຍແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ (ຜົນການຮຽນຂອງນັກຮຽນດີຂຶ້ນ) ມີຈຳນວນ 16 ຄົນ ເທົ່າກັບ 14.04% ຕາມລຳດັບ.

**ຕາຕະລາງທີ 47** ຂໍ້ມູນຜົນການວິເຄາະຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ

| ຄຳຖາມ | ຂໍ້ຫຍຸ້ງຍາກ | ຄວາມຖີ່ | ເປີເຊັນ (%) |
|---|---|---|---|
| 2. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີຄືແນວໃດ? | ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) | 33 | 28.95 |
| | ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) | 29 | 25.44 |
| | ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່), ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ | 27 | 23.68 |
| | ເວລາໃນການສອນບໍ່ພໍ (ສອນຊ້າລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ. | 19 | 16.67 |

| | | | |
|---|---|---|---|
| | ການຄວບຄຸມຫ້ອງຍາກ (ນັກຮຽນມີຄວາມອິນແຊວ, ຍາດກັນເຮັດກິດຈະກໍາ, ບໍ່ຮ່ວມມືກັບໝູ່) | 17 | 14.91 |
| | ນັກຮຽນມີຈໍານວນຫຼາຍ, ຫ້ອງຄັບແຄບ ແອອັດ (ແບ່ງເປັນກຸ່ມຍາກ) | 15 | 13.16 |
| | ນັກຮຽນມີຫຼາຍຊົນເຜົ່າ, ການປາກເວົ້າບໍ່ເຂົ້າໃຈ | 10 | 8.77 |
| | ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍ ການນໍາໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ຄູໄດ້ເຂົ້າຮ່ວມໃນການຝຶກອົບຮົມຍັງມີໜ້ອຍ) | 4 | 3.51 |

ຈາກຕາຕະລາງທີ 47 ຂໍ້ມູນຜົນການວິເຄາະຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສໍາລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ມີຈໍານວນ 33 ຄົນ ເທົ່າກັບ 28.95%; ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) ມີຈໍານວນ 29 ຄົນ ເທົ່າກັບ 25.44%; ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄໍາຕອບ (ເອື່ຍອີງໃສ່ໝູ່), ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ ມີຈໍານວນ 27 ຄົນ ເທົ່າກັບ 23.68%; ສຸດທ້າຍແມ່ນເວລາໃນການສອນບໍ່ພໍ (ສອນຊ້າລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ໍາ ສໍາລັບການປະຕິບັດກິດຈະກໍາ (ກິດຈະກໍາຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ ມີຈໍານວນ 19 ຄົນ ເທົ່າກັບ 16.67% ຕາມລໍາດັບ.

**ຕາຕະລາງທີ 48** ຂໍ້ມູນຜົນການວິເຄາະແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ

| ຄໍາຖາມ | ແນວທາງພັດທະນາ | ຄວາມຖີ່ | ເປີເຊັນ (%) |
|---|---|---|---|
| 3. ແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄວນເຮັດຄືແນວໃດ? | ຄົ້ນຄິດຜະລິດສື່/ຊອກຫາສື່/ນໍາໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕໍາລາຮຽນໃຫ້ຄົບທຸກຄົນ | 35 | 30.70 |
| | ຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ | 27 | 23.68 |
| | ນໍາພາສ້າງກິດຈະກໍາໃຫ້ລະອຽດ ແລະ ຫຼາຍກວ່າເກົ່າ (ຮ້ອງເພງ,ເລົ່ານິທານ, | 25 | 21.93 |

| | | | |
|---|---|---|---|
| | ຫຼິ້ນເກມ) ເຕັກນິກການຕັ້ງຄຳຖາມໃຫ້ສອດຄ່ອງກັບບົດຮຽນ, ວາງກົດລະບຽບ,ກະຕິກາໃນຫ້ອງ ແລະ ໃຫ້ເວລານັກຮຽນໃນເວລາເຮັດກິດຈະກຳ | | |
| | ຄູຕ້ອງຊອກຮູ້ຮໍ່າຮຽນເພື່ອໃຫ້ທັນກັບສະພາບໃນປັດຈຸບັນ ແລະ ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) | 18 | 15.79 |
| | ໃຫ້ນັກຮຽນໄດ້ຄົ້ນຄິດ, ມີສ່ວນຮ່ວມ ແລະ ປະຕິບັດກິດຈະກຳຕົວຈິງຫຼາຍຂຶ້ນ | 16 | 14.04 |
| | ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ | 12 | 10.53 |
| | ຕ້ອງປັບປຸງເຕັກນິກການຮຽນການສອນໃຫ້ໄດ້ຫຼາຍວິທີ (ວິທີສອນແບບໃໝ່) | 8 | 7.02 |

ຈາກຕາຕະລາງທີ 48 ຂໍ້ມູນຜົນການວິເຄາະແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ມີຈຳນວນ 35 ຄົນ ເທົ່າກັບ 30.70%; ຮອງລົງມາແມ່ນຄູຕ້ອງຕ້ອງເໜັ້ນໜັ້ກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ ມີຈຳນວນ 27 ຄົນ ເທົ່າກັບ 23.68%; ຕໍ່ມາແມ່ນຄູຕ້ອງນຳພາສ້າງກິດຈະກຳໃຫ້ລະອຽດ ແລະ ຫຼາຍກວ່າເກົ່າ (ຮ້ອງເພງ,ເລົ່ານິທານ, ຫຼິ້ນເກມ) ເຕັກນິກການຕັ້ງຄຳຖາມໃຫ້ສອດຄ່ອງກັບບົດຮຽນ, ວາງກົດລະບຽບ,ກະຕິກາໃນຫ້ອງ ແລະ ໃຫ້ເວລານັກຮຽນໃນເວລາເຮັດກິດຈະກຳ ມີຈຳນວນ 25 ຄົນ ເທົ່າກັບ 21.93%; ສຸດທ້າຍແມ່ນຄູຕ້ອງຊອກຮູ້ຮໍ່າຮຽນເພື່ອໃຫ້ທັນກັບສະພາບໃນປັດຈຸບັນ ແລະ ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) ມີຈຳນວນ 18 ຄົນ ເທົ່າກັບ 15.79% ຕາມລຳດັບ.

**ຕອນທີ່ 4** ການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ

**ຕາຕະລາງທີ 49** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 1. ທ່ານຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ | ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນ | 16 | 64 |

| | | | |
|---|---|---|---|
| ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ຄືແນວໃດ? | ເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ) | | |
| | ບໍ່ໄດ້ຈັດຕັ້ງເຜີຍແຜ່ (ບໍ່ໄດ້ຮັບເອກະສານ) | 9 | 36 |

ຈາກຕາຕະລາງທີ 49 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ) ມີຈຳນວນ 16 ຄົນ ເທົ່າກັບ 64% ແລະ ບໍ່ໄດ້ຈັດຕັ້ງເຜີຍແຜ່ (ບໍ່ໄດ້ຮັບເອກະສານ) ມີຈຳນວນ 9 ຄົນ ເທົ່າກັບ 36%.

**ຕາຕະລາງທີ 50** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 2. ທ່ານໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ) | 22 | 88 |
| | ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ) | 14 | 56 |
| | ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) | 8 | 32 |
| | ມີການແຕ່ງຕັ້ງ ແລະ ມອບໝາຍໜ້າທີ່ຮັບຜິດຊອບຂອງຄູ | 7 | 28 |
| | ແລກປ່ຽນບົດຮຽນກັບຜູ້ໄດ້ຜ່ານການຝຶກອົບຮົມ, ລວມຄູເພື່ອແລກປ່ຽນຖອດຖອນບົດຮຽນ ລະຫວ່າງກຸ່ມໂຮງຮຽນ (ພາຍໃນໂຮງຮຽນ) | 6 | 24 |
| | ຊຸມຊົນອຳນາດການປົກຄອງມີສ່ວນຮ່ວມ | 5 | 20 |

ຈາກຕາຕະລາງທີ 50 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ) ມີຈຳນວນ 22 ຄົນ ເທົ່າກັບ 88%; ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ) ມີຈຳນວນ 14 ຄົນ ເທົ່າກັບ 56%; ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) ມີຈຳນວນ 8 ຄົນ ເທົ່າກັບ 32% ແລະ ມີການແຕ່ງຕັ້ງ ແລະ ມອບໝາຍໜ້າທີ່ຮັບຜິດຊອບຂອງຄູ ມີຈຳນວນ 7 ຄົນ ເທົ່າກັບ 28% ຕາມລຳດັບ.

**ຕາຕະລາງທີ 51** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 3. ທ່ານຄິດວ່າຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ສ່ວນໃຫຍ່ມີຄວາມເຂົ້າໃຈ ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ) | 16 | 64 |
| | ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ | 7 | 28 |
| | ຄູໃຫ້ກິດຈະກຳ, ຕັ້ງຄຳຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນຳການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ | 6 | 24 |
| | ຄູໃຫ້ນັກຮຽນນຳໃຊ້ເຄື່ອງປະຈັກຕາ, ເບິ່ງຮູບພາບ ແລ້ວອະທິບາຍ | 3 | 12 |
| | ຄູສອນຍັງບໍ່ເຂົ້າໃຈກ່ຽວກັບການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ | 3 | 12 |

ຈາກຕາຕະລາງທີ 51 ຂໍ້ມູນຜົນການວິເຄາະ ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ) ມີຈຳນວນ 16 ຄົນ ເທົ່າກັບ 64%; ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ ມີຈຳນວນ 7 ຄົນ ເທົ່າກັບ 28% ແລະ ຄູໃຫ້ກິດຈະກຳ, ຕັ້ງຄຳຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນຳການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ ມີຈຳນວນ 6 ຄົນ ເທົ່າກັບ 24% ຕາມລຳດັບ.

**ຕາຕະລາງທີ 52** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານ ໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນ ເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 4. ທ່ານຄິດວ່າຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ) | 15 | 60 |
| | ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ | 12 | 48 |
| | ຕັ້ງຄໍາຖາມ,ນັກຮຽນລາຍງານ | 11 | 44 |
| | ສະແດງອຸປະກອນ/ສື່ (ຮູບພາບ)ໃຫ້ນັກຮຽນເບິ່ງ ແລະ ສົນທະນາແລກປ່ຽນບົດຮຽນກັບຄູ | 8 | 32 |
| | ສະຫຼັບນັກຮຽນອ່ອນແລະເກັ່ງປົນກັນ (ຜູ້ຮຽນເກັ່ງສອນຊ່ວຍຄູ) | 8 | 32 |
| | ໃຫ້ນັກຮຽນປະຕິບັດຕົວຈິງ | 6 | 24 |
| | ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) | 5 | 20 |

ຈາກຕາຕະລາງທີ 52 ຂໍ້ມູນຜົນການວິເຄາະ ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ) ມີຈໍານວນ 15 ຄົນ ເທົ່າກັບ 60%; ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ ມີຈໍານວນ 12 ຄົນ ເທົ່າກັບ 48%; ຕັ້ງຄໍາຖາມ,ນັກຮຽນລາຍງານ ມີຈໍານວນ 11 ຄົນ ເທົ່າກັບ 44%; ສະແດງອຸປະກອນ/ສື່ (ຮູບພາບ)ໃຫ້ນັກຮຽນເບິ່ງ ແລະ ສົນທະນາແລກປ່ຽນບົດຮຽນກັບຄູ ມີຈໍານວນ 8 ຄົນ ເທົ່າກັບ 32% ແລະ ສະຫຼັບນັກຮຽນອ່ອນແລະເກັ່ງປົນກັນ (ຜູ້ຮຽນເກັ່ງສອນຊ່ວຍຄູ) ມີຈໍານວນ 8 ຄົນ ເທົ່າກັບ 32% ຕາມລໍາດັບ.

**ຕາຕະລາງທີ 53** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານ ໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນ ເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 5. ທ່ານມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ເຮັດຄືແນວໃດ? | ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ. ມີຄວາມກ້າຫານ, ກ້າສະແດງອອກ,ຢາກຮຽນ) | 17 | 68 |
| | ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ | 16 | 64 |

| | | | |
|---|---|---|---|
| | ມອບໃຫ້ຜູ້ຮອງ ຫຼື ວິຊາການເກັບຂໍ້ມູນການສອນຂອງຄູແຕ່ລະຊົ່ວໂມງ (ຕິດຕາມກວດກາເວລາຄູຂຶ້ນຫ້ອງ) | 6 | 24 |
| | ຖອດຖອນບົດຮຽນຮ່ວມກັນກັບຄູສອນ | 5 | 20 |
| | ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນ□າໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ | 5 | 20 |
| | ປະເມີນລະຫວ່າງການຮຽນ (ໃນເວລາຈັດກິດຈະກຳລະຫວ່າງການຮຽນ) | 4 | 16 |

ຈາກຕາຕະລາງທີ 53 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ,ເອົາໃຈໃສ່ໃນການຮຽນ, ຫ້າວຫັນ. ມີຄວາມກ້າຫານ, ກ້າສະແດງອອກ,ຢາກຮຽນ ມີຈຳນວນ 17 ຄົນ ເທົ່າກັບ 68%; ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ ມີຈຳນວນ 16 ຄົນ ເທົ່າກັບ 64% ແລະ ມອບໃຫ້ຜູ້ຮອງ ຫຼື ວິຊາການເກັບຂໍ້ມູນການສອນຂອງຄູແຕ່ລະຊົ່ວໂມງ (ຕິດຕາມກວດກາເວລາຄູຂຶ້ນຫ້ອງ) ມີຈຳນວນ 6 ຄົນ ເທົ່າກັບ 24% ຕາມລຳດັບ.

**ຕາຕະລາງທີ 54** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 6. ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ອຸປະກອນ/ສື່ການຮຽນການສອນ | 25 | 100 |
| | ບົດສອນ | 24 | 96 |
| | ແຜນການສອນ | 14 | 56 |
| | ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ | 6 | 24 |

ຈາກຕາຕະລາງທີ 54 ຂໍ້ມູນຜົນການວິເຄາະ ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ອຸປະກອນ/ສື່ການຮຽນການສອນ ມີຈຳນວນ 25 ຄົນ ເທົ່າກັບ 100%; ບົດສອນ ມີຈຳນວນ 24 ຄົນ ເທົ່າກັບ 96%; ແຜນການສອນ ມີຈຳນວນ 14 ຄົນ ເທົ່າກັບ 56% ແລະ ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ ມີຈຳນວນ 6 ຄົນ ເທົ່າກັບ 24% ຕາມລຳດັບ.

**ຕາຕະລາງທີ 55** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 7. ທ່ານຄິດວ່າຄູສອນມີການຜະລິດ ແລະ ນໍາໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ມີການຜະລິດສື່ການສອນ ໂດຍອີງໃສ່ປື້ມຕໍາລາຮຽນ ໃນແຕ່ລະບົດ ແລະ ນໍາອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ) | 21 | 84 |
| | ໃຊ້ອຸປະກອນທໍາມະຊາດທີ່ຫາໄດ້ (ນ□າໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ) | 9 | 36 |
| | ນໍາໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ ນໍາໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້) | 7 | 28 |
| | ບາງວິຊາບໍ່ສາມາດຜະລິດໄດ້ | 6 | 24 |
| | ໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ | 4 | 16 |

ຈາກຕາຕະລາງທີ 55 ຂໍ້ມູນຜົນການວິເຄາະ ຄູສອນມີການຜະລິດ ແລະ ນໍາໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ມີການຜະລິດສື່ການສອນ ໂດຍອີງໃສ່ປື້ມຕໍາລາຮຽນໃນແຕ່ລະບົດ ແລະ ນໍາອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ) ມີຈໍານວນ 21 ຄົນ ເທົ່າກັບ 84%; ໃຊ້ອຸປະກອນທໍາມະຊາດທີ່ຫາໄດ້ (ນ□າໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ) ມີຈໍານວນ 9 ຄົນ ເທົ່າກັບ 36%; ນໍາໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນໍາໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້) ມີຈໍານວນ 7 ຄົນ ເທົ່າກັບ 28% ແລະ ບາງວິຊາບໍ່ສາມາດຜະລິດໄດ້ ມີຈໍານວນ 6 ຄົນ ເທົ່າກັບ 24% ຕາມລໍາດັບ.

**ຕາຕະລາງທີ 56** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 8. ທ່ານຄິດວ່າຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຈັດເປັນກຸ່ມ ໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກໍາ | 16 | 64 |
| | ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນໍາຂອງຄູ | 12 | 48 |
| | ໃຊ້ຄໍາຖາມ ສົນທະນາປະກອບຄໍາຄິດເຫັນ | 10 | 40 |

| | | | |
|---|---|---|---|
| | ແບບປະສົມປະສານ ຕາມຄວາມເໝາະສົມ (ແບບເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ) | 3 | 12 |
| | ນັກຮຽນເກັ່ງສອນຊ່ວຍຄູ ນັກຮຽນເກັ່ງ-ອ່ອນໃຫ້ຊ່ວຍເຫຼືອກັນ | 3 | 12 |
| | ໄປທັດສະນະສຶກສາ | 2 | 8 |

ຈາກຕາຕະລາງທີ 56 ຂໍ້ມູນຜົນການວິເຄາະ ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຈັດເປັນກຸ່ມ ໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກຳ ມີຈຳນວນ 16 ຄົນ ເທົ່າກັບ 64%; ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ ມີຈຳນວນ 12 ຄົນ ເທົ່າກັບ 48% ແລະ ໃຊ້ຄຳຖາມ ສົນທະນາປະກອບຄຳຄິດເຫັນ ມີຈຳນວນ 10 ຄົນ ເທົ່າກັບ 40% ຕາມລຳດັບ.

**ຕາຕະລາງທີ 57** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 9. ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) | 14 | 56 |
| | ຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ) | 12 | 48 |
| | ໄດ້ຮັບການນິເທດ (ຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ) | 9 | 36 |
| | ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ) | 8 | 32 |
| | ໄດ້ຮັບການນິເທດ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) | 4 | 16 |

ຈາກຕາຕະລາງທີ 57 ຂໍ້ມູນຜົນການວິເຄາະ ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) ມີຈຳນວນ 14 ຄົນ ເທົ່າກັບ 56%; ຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ) ມີຈຳນວນ 12 ຄົນ ເທົ່າກັບ 48%; ໄດ້ຮັບການນິເທດ (ຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ) ມີຈຳນວນ 9 ຄົນ ເທົ່າກັບ 36% ແລະ ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ) ມີຈຳນວນ 8 ຄົນ ເທົ່າກັບ 32% ຕາມລຳດັບ.

**ຕາຕະລາງທີ 58** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 10. ທ່ານຄິດວ່າຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ກວດກາທ້າຍບົດ, ກວດກາປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ | 16 | 64 |
| | ວັດກ່ອນການສອນ, ໃນລະຫວ່າງການຈັດກິດຈະກຳການຮຽນການສອນ, ຫຼັງການຮຽນການສອນ | 11 | 44 |
| | ດ້ວຍຫຼາຍຮູບແບບ (ທີ່ເໝາະສົມ) | 8 | 32 |
| | ໃຫ້ກິດຈະກຳເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ | 7 | 28 |
| | ຖາມປາກເປົ່າ | 3 | 12 |
| | ສອນບຳລຸງຊ່ວຍເຫຼືອນັກຮຽນອ່ອນ ແລະ ນັກຮຽນເກັ່ງ | 3 | 12 |

ຈາກຕາຕະລາງທີ 58 ຂໍ້ມູນຜົນການວິເຄາະ ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ກວດກາປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ ມີຈຳນວນ 16 ຄົນ ເທົ່າກັບ 64%; ວັດກ່ອນການສອນ, ໃນລະຫວ່າງການຈັດກິດຈະກຳການຮຽນການສອນ, ຫຼັງການຮຽນການສອນ ມີຈຳນວນ 11 ຄົນ ເທົ່າກັບ 44%; ດ້ວຍຫຼາຍຮູບແບບ (ທີ່ເໝາະສົມ) ມີຈຳນວນ 8 ຄົນ ເທົ່າກັບ 32% ແລະ ໃຫ້ກິດຈະກຳເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ ມີຈຳນວນ 7 ຄົນ ເທົ່າກັບ 28% ຕາມລຳດັບ.

**ຕາຕະລາງທີ 59** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 11. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຄືແນວໃດ? | ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) | 16 | 64 |
| | ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ | 14 | 56 |
| | ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາດ້ວຍຕົນເອງ | 8 | 32 |
| | ນັກຮຽນສາມາດສອນເພື່ອນຜູ້ທີ່ຮຽນອ່ອນຊ່ວຍຄູສອນໄດ້ | 7 | 28 |
| | ນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ (ຜົນການຮຽນດີຂຶ້ນ) | 4 | 16 |

ຈາກຕາຕະລາງທີ 59 ຂໍ້ມູນຜົນການວິເຄາະ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) ມີຈຳນວນ 16 ຄົນ ເທົ່າກັບ 64%; ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ ມີຈຳນວນ 14 ຄົນ ເທົ່າກັບ 56%; ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ມີຈຳນວນ 8 ຄົນ ເທົ່າກັບ 32% ແລະ ນັກຮຽນສາມາດສອນເພື່ອນຜູ້ທີ່ຮຽນອ່ອນຊ່ວຍຄູສອນໄດ້ ມີຈຳນວນ 7 ຄົນ ເທົ່າກັບ 28% ຕາມລຳດັບ.

**ຕາຕະລາງທີ 60** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 12. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) | 14 | 56 |
| | ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍ ການນຳໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ບໍ່ເຂົ້າໃຈການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ) | 8 | 32 |
| | ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອື້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ | 7 | 28 |
| | ງົບປະມານບໍລິຫານໂຮງຮຽນມາຮັບໃຊ້ການຮຽນການສອນຍັງບໍ່ພຽງພໍ ແລະ ຊັກຊ້າ. | 7 | 28 |
| | ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) | 6 | 24 |
| | ຄູບໍ່ໄດ້ຮັບການຝຶກອົບຮົມ | 5 | 20 |
| | ເວລາໃນການສອນບໍ່ພໍ (ສອນຊ້ຳລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ສອນບໍ່ຈົບຕາມຫຼັກສູດທີ່ວາງໄວ້ | 5 | 20 |

ຈາກຕາຕະລາງທີ 60 ຂໍ້ມູນຜົນການວິເຄາະ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ໄດ້ກະກຽມອຸປະກອນສຳລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ມີຈຳນວນ 14 ຄົນ ເທົ່າກັບ 56%; ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍ ການນຳໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ບໍ່ເຂົ້າໃຈການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ) ມີຈຳນວນ 8 ຄົນ ເທົ່າກັບ 32%; ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອື້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ ມີຈຳນວນ 7 ຄົນ ເທົ່າກັບ 28% ແລະ ງົບປະມານບໍລິຫານໂຮງຮຽນມາຮັບໃຊ້ການຮຽນການສອນຍັງບໍ່ພຽງພໍ ແລະ ຊັກຊ້າ ມີຈຳນວນ 7 ຄົນ ເທົ່າກັບ 28% ຕາມລຳດັບ.

**ຕາຕະລາງທີ 61** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 13. ທ່ານມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຝຶກອົບຮົມ (ຍົກລະດັບ)ຄູໃຫ້ຫຼາຍຂຶ້ນ | 12 | 48 |
| | ເຂົ້າຮ່ວມຊົ່ວໂມງສອນ, ແລກປ່ຽນຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ (ນິເທດພາຍໃນ) | 9 | 36 |
| | ຄົ້ນຄິດຜະລິດສື່/ຊອກຫາສື່/ນໍາໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕໍາລາຮຽນໃຫ້ຄົບທຸກຄົນ | 7 | 28 |
| | ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັ່ນບົດສອນປະຈໍາອາທິດ) | 6 | 24 |
| | ຄະນະພັດທະນາການສຶກສາຂັ້ນບ້ານ/ພໍ່ແມ່ຜູ້ປົກຄອງນັກຮຽນ ສຶກສາອົບຮົມນັກຮຽນຊ່ວຍຄູຕື່ມອີກ | 5 | 20 |
| | ຢາກໃຫ້ເມືອງ, ແຂວງ ລົງມານິເທດໃຫ້ໂຮງຮຽນຫຼາຍຂຶ້ນ ລົງມາໃກ້ສິດຕິດແທດເພື່ອແນະນໍາຮູບແບບການສອນໃຫ້ແກ່ຄູ | 4 | 16 |

ຈາກຕາຕະລາງທີ 61 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຝຶກອົບຮົມ (ຍົກລະດັບ)ຄູໃຫ້ຫຼາຍຂຶ້ນ ມີຈໍານວນ 12 ຄົນ ເທົ່າກັບ 48%; ເຂົ້າຮ່ວມຊົ່ວໂມງສອນ, ແລກປ່ຽນຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ (ນິເທດພາຍໃນ) ມີຈໍານວນ 9 ຄົນ ເທົ່າກັບ 36%; ຄົ້ນຄິດຜະລິດສື່/ຊອກຫາສື່/ນໍາໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕໍາລາຮຽນໃຫ້ຄົບທຸກຄົນ ມີຈໍານວນ 7 ຄົນ ເທົ່າກັບ 28% ແລະ ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັ່ນບົດສອນປະຈໍາອາທິດ) ມີຈໍານວນ 6 ຄົນ ເທົ່າກັບ 24% ຕາມລໍາດັບ.

**III. ຜົນການວິເຄາະຂໍ້ມູນໂຮງຮຽນມັດທະຍົມ.**

ຜູ້ວິໄຈນຳສະເໜີຜົນການວິເຄາະຂໍ້ມູນການວິໄຈຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ ຕາມລຳດັບດັ່ງນີ້:

**ຕອນທີ 1** ຂໍ້ມູນທົ່ວໄປກ່ຽວກັບຜູ້ຕອບແບບສອບຖາມ.

**ຕາຕະລາງທີ 62** ຂໍ້ມູນຜົນການວິເຄາະເພດຂອງກຸ່ມເປົ້າໝາຍ.

| ເພດ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| ຊາຍ | 118 | 37.3 |
| ຍິງ | 198 | 62.7 |
| ລວມ: | 316 | 100 |

ຈາກຕາຕະລາງທີ 62 ຂໍ້ມູນຜົນການວິເຄາະເພດຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ເປັນເພດຍິງ ມີຈຳນວນ 198 ຄົນ ເທົ່າກັບ 62.7% ແລະ ເພດຊາຍ ມີຈຳນວນ 118 ຄົນ ເທົ່າກັບ 37.3%.

**ຕາຕະລາງທີ 63** ຂໍ້ມູນຜົນການວິເຄາະວຸດທິການສຶກສາຂອງກຸ່ມເປົ້າໝາຍ.

| ວຸດທິການສຶກສາ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| ຊັ້ນກາງລົງມາ | 6 | 1.9 |
| ຊັ້ນສູງ | 159 | 50.3 |
| ປະລິນຍາຕີຂຶ້ນໄປ | 151 | 47.8 |
| ລວມ: | 316 | 100 |

ຈາກຕາຕະລາງທີ 63 ຂໍ້ມູນຜົນການວິເຄາະວຸດທິການສຶກສາຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ຈົບຊັ້ນສູງ ມີຈຳນວນ 159 ຄົນ ເທົ່າກັບ 50.3%; ຈົບປະລິນຍາຕີຂຶ້ນໄປ ມີຈຳນວນ 151 ຄົນ ເທົ່າກັບ 47.8% ແລະ ຈົບຊັ້ນກາງລົງມາ ມີຈຳນວນ 6 ຄົນ ເທົ່າກັບ 1.9% ຕາມລຳດັບ.

**ຕາຕະລາງທີ 64** ຂໍ້ມູນຜົນການວິເຄາະປະສົບການເຮັດວຽກຂອງກຸ່ມເປົ້າໝາຍ.

| ປະສົບການເຮັດວຽກ | ຄວາມຖີ່ | ເປີເຊັນ (%) |
|---|---|---|
| 10 ປີລົງມາ | 146 | 46.2 |
| 11 – 20 ປີ | 117 | 37 |
| 21 ປີຂຶ້ນໄປ | 52 | 16.5 |
| ບໍ່ໃຫ້ຂໍ້ມູນ | 1 | 0.3 |
| ລວມ: | 316 | 100 |

ຈາກຕາຕະລາງທີ 64 ຂໍ້ມູນຜົນການວິເຄາະປະສົບການເຮັດວຽກຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ມີປະສົບການເຮັດວຽກ 10 ປີລົງມາ ມີຈຳນວນ 146 ຄົນ ເທົ່າກັບ 46.2%; ປະສົບການເຮັດວຽກ 11-20 ປີ ມີຈຳນວນ 117 ຄົນ ເທົ່າກັບ 37% ແລະ ປະສົບການເຮັດວຽກ 21 ປີຂຶ້ນໄປມີຈຳນວນ 52 ຄົນ ເທົ່າກັບ 16.5% ຕາມລຳດັບ.

**ຕາຕະລາງທີ 65** ຂໍ້ມູນຜົນການວິເຄາະຕຳແໜ່ງຂອງກຸ່ມເປົ້າໝາຍ.

| **ຕຳແໜ່ງ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຜູ້ບໍລິຫານໂຮງຮຽນ | 24 | 7.6 |
| ຄູສອນ | 260 | 82.3 |
| ອື່ນໆ | 32 | 10.1 |
| ລວມ: | 316 | 100 |

ຈາກຕາຕະລາງທີ 65 ຂໍ້ມູນຜົນການວິເຄາະຕຳແໜ່ງຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ເປັນ ຄູສອນ ມີຈຳນວນ 260 ຄົນ ເທົ່າກັບ 82.3%; ຜູ້ບໍລິຫານໂຮງຮຽນ ມີຈຳນວນ 24 ຄົນ ເທົ່າກັບ 7.6% ແລະ ອື່ນໆ ມີຈຳນວນ 32 ຄົນ ເທົ່າກັບ 10.1% ຕາມລຳດັບ.

**ຕາຕະລາງທີ 66** ຂໍ້ມູນຜົນການວິເຄາະວິຊາທີ່ຈົບຂອງກຸ່ມເປົ້າໝາຍ.

| **ວິຊາທີ່ຈົບ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຄະນິດສາດ | 47 | 14.87 |
| ພາສາອັງກິດ | 47 | 14.87 |
| ພາສາລາວ-ວັນນະຄະດີ | 45 | 14.24 |
| ວິທະຍາສາດທຳມະຊາດ | 43 | 13.61 |
| ວິທະຍາສາດສັງຄົມ | 40 | 12.66 |
| ພະລະສຶກສາ | 12 | 3.80 |
| ສຶກສາພົນລະເມືອງ (ການເມືອງ) | 9 | 2.85 |
| ພູມສາດ-ປະຫວັດສາດ | 9 | 2.85 |
| ເຄມີສາດ | 8 | 2.53 |
| ຊີວະສາດ | 8 | 2.53 |
| ຟີຊິກສາດ | 8 | 2.53 |
| ຄະນິດສາດ-ຟີຊິກສາດ | 6 | 1.90 |
| ພູມສາດ | 5 | 1.58 |
| ເຄມີສາດ-ຊີວະສາດ | 4 | 1.27 |
| ປະຫວັດສາດ | 4 | 1.27 |
| ສິລະປະດົນຕີ | 2 | 0.63 |
| ພາສາຝຣັ່ງ | 2 | 0.63 |
| ອັກສອນສາດ | 2 | 0.63 |
| ວິທະຍາສາດ ແລະ ຄະນິດສາດ | 2 | 0.63 |
| ຄະນິດສາດ-ຄອມພິວເຕີ | 1 | 0.32 |
| ພາລະສຶກສາ-ພາສາອັງກິດ | 1 | 0.32 |
| ພູມສາດ-ສຶກສາພົນລະເມືອງ | 1 | 0.32 |
| ສິລະປະກຳ | 1 | 0.32 |
| ພາສາຫວຽດນາມ | 1 | 0.32 |
| ພາສາລັດເຊຍ | 1 | 0.32 |

| | | |
|---|---|---|
| ພາສາລາວ | 1 | 0.32 |
| ICT | 1 | 0.32 |
| ລ້ຽງສັດສັດຕະສະແພດ | 1 | 0.32 |
| ບໍລິການການເງິນ-ບັນຊີ | 1 | 0.32 |
| ສັງຄົມ ( ພາສາອັງກິດ ) | 1 | 0.32 |
| ວິທະຍາສາດສັງຄົມ (ການເມືອງ) | 1 | 0.32 |
| ກະສິກໍາ | 1 | 0.32 |
| ລວມ: | 316 | 100 |

ຈາກຕາຕະລາງທີ 66 ຂໍ້ມູນຜົນການວິເຄາະວິຊາທີ່ຈົບຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ຈົບຄູຄະນິດສາດ ມີຈໍານວນ 47 ຄົນ ເທົ່າກັບ 14.87%; ຄູພາສາອັງກິດ ມີຈໍານວນ 47 ຄົນ ເທົ່າກັບ 14.87%; ຄູພາສາລາວ-ວັນນະຄະດີ ມີຈໍານວນ 45 ຄົນ ເທົ່າກັບ 14.24%; ຄູວິທະຍາສາດທໍາມະຊາດ ມີຈໍານວນ 43 ຄົນ ເທົ່າກັບ 13.61% ແລະ ຄູວິທະຍາສາດສັງຄົມ ມີຈໍານວນ 40 ຄົນ ເທົ່າກັບ 12.66% ຕາມລໍາດັບ.

**ຕາຕະລາງທີ 67** ຂໍ້ມູນຜົນການວິເຄາະວິຊາທີ່ສອນຂອງກຸ່ມເປົ້າໝາຍ.

| **ວິຊາທີ່ສອນ** | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|
| ຄະນິດສາດ | 56 | 17.72 |
| ພາສາລາວ | 51 | 16.14 |
| ພາສາອັງກິດ | 47 | 14.87 |
| ວັນນະຄະດີ | 46 | 14.56 |
| ປະຫວັດສາດ | 29 | 9.18 |
| ວິທະຍາສາດທໍາມະຊາດ | 29 | 9.18 |
| ສຶກສາພົນລະເມືອງ (ການເມືອງ) | 29 | 9.18 |
| ພູມສາດ | 28 | 8.86 |
| ຟີຊິກສາດ | 22 | 6.96 |
| ເຄມີສາດ | 21 | 6.65 |
| ຊີວະສາດ | 20 | 6.33 |
| ICT | 19 | 6.01 |
| ພະລະສຶກສາ | 16 | 5.06 |
| ພື້ນຖານວິຊາຊີບ | 16 | 5.06 |
| ສິລະປະດົນຕຣີ | 12 | 3.80 |
| ສິລະປະກໍາ | 10 | 3.16 |
| ສອນຊັ້ນປະຖົມລວມທຸກວິຊາ | 4 | 1.27 |
| ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ | 3 | 0.95 |
| ວິທະຍາສາດສັງຄົມ | 2 | 0.63 |

| | | |
|---|---|---|
| ພາສາຝຣັ່ງ | 1 | 0.32 |
| ພາສາຫວຽດນາມ | 1 | 0.32 |
| ບໍລິການການເງິນ-ບັນຊີ | 1 | 0.32 |
| ກະສິກໍາ | 1 | 0.32 |
| ບໍ່ໄດ້ສອນ | 1 | 0.32 |

ຈາກຕາຕະລາງທີ 67 ຂໍ້ມູນຜົນການວິເຄາະວິຊາທີ່ສອນຂອງກຸ່ມເປົ້າໝາຍ ພົບວ່າ ກຸ່ມເປົ້າໝາຍທີ່ສອນ ວິຊາ ຄະນິດສາດ ມີຈໍານວນ 56 ຄົນ ເທົ່າກັບ 17.72%; ພາສາລາວ ມີຈໍານວນ 51 ຄົນ ເທົ່າກັບ 16.14%; ພາສາອັງກິດ ມີຈໍານວນ 47 ຄົນ ເທົ່າກັບ 14.87%; ວັນນະຄະດີ ມີຈໍານວນ 46 ຄົນ ເທົ່າກັບ 14.56% ຕາມລໍາດັບ

**ຕອນທີ່ 2** ຄວາມຮູ້ຄວາມເຂົ້າໃຈ, ການນໍາໃຊ້ ແລະ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ

**ຕາຕະລາງທີ 68** ຂໍ້ມູນຜົນການວິເຄາະຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ

| **ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ:** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ຄວາມຮູ້ຄວາມເຂົ້າໃຈ | ຈັດອັນດັບ |
|---|---|---|---|---|
| 1. ວິທີສອນແບບປະຕິບັດຕົວຈິງ | 4.04 | .548 | ຫຼາຍ | 13 |
| 2. ວິທີສອນແບບດາວ 5 ແຈ | 3.64 | .711 | ຫຼາຍ | 5 |
| 3. ວິທີສອນແບບອະທິບາຍ | 4.09 | .660 | ຫຼາຍ | 15 |
| 4. ວິທີສອນແບບສົນທະນາ | 4.09 | .609 | ຫຼາຍ | 14 |
| 5. ວິທີສອນແບບສືບສວນຊອກຫາຄວາມຮູ້ | 3.53 | .753 | ຫຼາຍ | 3 |
| 6. ວິທີສອນແບບຫຼິ້ນເກມ | 3.49 | .779 | ປານກາງ | 2 |
| 7. ວິທີສອນແບບສາທິດ | 3.88 | .689 | ຫຼາຍ | 10 |
| 8. ວິທີສອນແບບໃຊ້ບົດບາດສົມມຸດ | 3.66 | .737 | ຫຼາຍ | 7 |
| 9. ວິທີສອນແບບເລົ່າເລື່ອງ | 3.55 | .848 | ຫຼາຍ | 4 |
| 10. ວິທີສອນແບບປະຕິບັດໂຄງການ | 3.65 | .851 | ຫຼາຍ | 6 |
| 11. ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ | 3.28 | .836 | ປານກາງ | 1 |
| 12. ວິທີສອນແບບໃຊ້ບົດຮຽນສໍາເລັດຮູບ | 3.74 | .726 | ຫຼາຍ | 8 |
| 13. ວິທີສອນແບບໃຊ້ຊຸດການສອນ | 3.74 | .726 | ຫຼາຍ | 9 |
| 14. ວິທີສອນແບບແກ້ບັນຫາ | 3.92 | .694 | ຫຼາຍ | 12 |
| 15. ວິທີສອນແບບການຮຽນແບບຮ່ວມມື | 3.90 | .698 | ຫຼາຍ | 11 |

ຈາກຕາຕະລາງທີ 68 ຂໍ້ມູນຜົນການວິເຄາະຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ ($\bar{X}$=3.28; SD=0.836) ແລະ ວິທີສອນແບບຫຼິ້ນເກມ ($\bar{X}$=3.49;SD=0.779) ຕາມລໍາດັບ.

**ຕາຕະລາງທີ 69** ຂໍ້ມູນຜົນການວິເຄາະການນໍາໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ:** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບການນໍາໃຊ້ | ຈັດອັນດັບ |
|---|---|---|---|---|
| 1. ວິທີສອນແບບປະຕິບັດຕົວຈິງ | 3.78 | .642 | ຫຼາຍ | 11 |
| 2. ວິທີສອນແບບດາວ 5 ແຈ | 3.49 | .783 | ປານກາງ | 5 |
| 3. ວິທີສອນແບບອະທິບາຍ | 4.00 | .690 | ຫຼາຍ | 13 |
| 4. ວິທີສອນແບບສົນທະນາ | 4.03 | .664 | ຫຼາຍ | 15 |
| 5. ວິທີສອນແບບສືບສວນຊອກຫາຄວາມຮູ້ | 3.43 | .781 | ປານກາງ | 4 |
| 6. ວິທີສອນແບບຫຼິ້ນເກມ | 3.33 | .832 | ປານກາງ | 2 |
| 7. ວິທີສອນແບບສາທິດ | 3.73 | .720 | ຫຼາຍ | 9 |
| 8. ວິທີສອນແບບໃຊ້ບົດບາດສົມມຸດ | 3.51 | .770 | ຫຼາຍ | 6 |
| 9. ວິທີສອນແບບເລົ່າເລື່ອງ | 3.40 | .861 | ປານກາງ | 3 |
| 10. ວິທີສອນແບບປະຕິບັດໂຄງການ | 3.52 | .974 | ຫຼາຍ | 7 |
| 11. ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ | 3.18 | .857 | ປານກາງ | 1 |
| 12. ວິທີສອນແບບໃຊ້ບົດຮຽນສໍາເລັດຮູບ | 4.02 | .849 | ຫຼາຍ | 14 |
| 13. ວິທີສອນແບບໃຊ້ຊຸດການສອນ | 3.78 | .737 | ຫຼາຍ | 12 |
| 14. ວິທີສອນແບບແກ້ບັນຫາ | 3.65 | .704 | ຫຼາຍ | 8 |
| 15. ວິທີສອນແບບການຮຽນແບບຮ່ວມມື | 3.74 | .751 | ຫຼາຍ | 10 |

ຈາກຕາຕະລາງທີ 69 ຂໍ້ມູນຜົນການວິເຄາະການນໍາໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການນໍາໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ ($\bar{X}$=3.18; SD=0.857), ວິທີສອນແບບຫຼິ້ນເກມ ($\bar{X}$=3.33; SD=0.832), ວິທີສອນແບບເລົ່າເລື່ອງ ($\bar{X}$=3.40; SD=0.861), ວິທີສອນແບບສືບສວນຊອກຫາຄວາມຮູ້ ($\bar{X}$=3.43; SD=0.781) ແລະ ວິທີສອນແບບດາວ 5 ແຈ ($\bar{X}$=3.49;SD=0.783) ຕາມລໍາດັບ.

**ຕາຕະລາງທີ 70** ຂໍ້ມູນຜົນການວິເຄາະຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ:** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ຄວາມຕ້ອງການຝຶກອົບຮົມ | ຈັດອັນດັບ |
|---|---|---|---|---|
| 1. ວິທີສອນແບບປະຕິບັດຕົວຈິງ | 4.34 | .746 | ຫຼາຍ | 1 |
| 2. ວິທີສອນແບບດາວ 5 ແຈ | 4.19 | .833 | ຫຼາຍ | 2 |
| 3. ວິທີສອນແບບອະທິບາຍ | 3.91 | .836 | ຫຼາຍ | 14 |
| 4. ວິທີສອນແບບສົນທະນາ | 3.97 | .788 | ຫຼາຍ | 11 |
| 5. ວິທີສອນແບບສືບສວນຊອກຫາຄວາມຮູ້ | 4.05 | .840 | ຫຼາຍ | 7 |
| 6. ວິທີສອນແບບຫຼິ້ນເກມ | 4.03 | .806 | ຫຼາຍ | 8 |
| 7. ວິທີສອນແບບສາທິດ | 4.11 | .774 | ຫຼາຍ | 3 |
| 8. ວິທີສອນແບບໃຊ້ບົດບາດສົມມຸດ | 3.92 | .806 | ຫຼາຍ | 13 |
| 9. ວິທີສອນແບບເລົ່າເລື່ອງ | 3.78 | .886 | ຫຼາຍ | 15 |
| 10. ວິທີສອນແບບປະຕິບັດໂຄງການ | 4.03 | .904 | ຫຼາຍ | 9 |
| 11. ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ | 3.96 | .893 | ຫຼາຍ | 12 |
| 12. ວິທີສອນແບບໃຊ້ບົດຮຽນສຳເລັດຮູບ | 4.02 | .849 | ຫຼາຍ | 10 |
| 13. ວິທີສອນແບບໃຊ້ຊຸດການສອນ | 4.08 | .793 | ຫຼາຍ | 5 |
| 14. ວິທີສອນແບບແກ້ບັນຫາ | 4.09 | .787 | ຫຼາຍ | 4 |
| 15. ວິທີສອນແບບການຮຽນແບບຮ່ວມມື | 4.07 | .807 | ຫຼາຍ | 6 |

ຈາກຕາຕະລາງທີ 70 ຂໍ້ມູນຜົນການວິເຄາະຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ ($\bar{X}$=4.34; SD=0.746), ວິທີສອນແບບດາວ 5 ແຈ ($\bar{X}$=4.19; SD=0.833), ວິທີສອນແບບສາທິດ ($\bar{X}$=4.11; SD=0.774) ແລະ ວິທີສອນແບບແກ້ບັນຫາ ($\bar{X}$=4.09;SD=0.787) ຕາມລຳດັບ.

**ຕອນທີ່ 3** ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

**ຕາຕະລາງທີ 71** ຂໍ້ມູນຜົນການວິເຄາະການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **1. ການກະກຽມຄວາມພ້ອມ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 1.1 ທ່ານໄດ້ສຶກສາ ແລະ ວິເຄາະເນື້ອໃນບົດຮຽນທີ່ຈະສອນ | 4.51 | .537 | ຫຼາຍທີ່ສຸດ | 4 |
| 1.2 ທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ | 3.98 | .609 | ຫຼາຍ | 1 |
| 1.3 ທ່ານໄດ້ແຕ່ງບົດສອນ ແລະ ຮັບການເຊັນອະນຸມັດຈາກໜ່ວຍງານວິຊາການ ຫຼື ຜູ້ບໍລິຫານໂຮງຮຽນກ່ອນຂຶ້ນຫ້ອງສອນ | 4.61 | .567 | ຫຼາຍທີ່ສຸດ | 5 |
| 1.4 ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ | 4.05 | .735 | ຫຼາຍ | 2 |
| 1.5 ທ່ານໄດ້ກະກຽມສະຖານທີ່ໃນການຈັດການຮຽນການສອນ | 4.33 | .631 | ຫຼາຍ | 3 |

ຈາກຕາຕະລາງທີ 71 ຂໍ້ມູນຜົນການວິເຄາະການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ ($\bar{X}$=3.98; SD=0.609) ແລະ ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ ($\bar{X}$=4.05;SD=0.735) ຕາມລຳດັບ.

**ຕາຕະລາງທີ 72** ຂໍ້ມູນຜົນການວິເຄາະສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **2. ສື່ການຮຽນການສອນ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 2.1 ທ່ານໄດ້ຜະລິດສື່ການຮຽນການສອນເຂົ້າໃນການຈັດກິດຈະກຳການຮຽນການສອນ | 3.76 | .780 | ຫຼາຍ | 4 |
| 2.2 ທ່ານໄດ້ນ□າໃຊ້ສື່ການຮຽນການສອນທີ່ເໝາະສົມ | 3.96 | .648 | ຫຼາຍ | 5 |
| 2.3 ທ່ານມີສື່ການຮຽນການສອນພຽງພໍ | 3.16 | .763 | ປານກາງ | 2 |
| 2.4 ທ່ານໄດ້ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ | 3.05 | .960 | ປານກາງ | 1 |
| 2.5 ທ່ານໄດ້ກວດກາ ແລະ ປະເມີນຜົນສື່ການຮຽນການສອນທີ່ນຳໃຊ້ມາກ່ອນ | 4.05 | 1.841 | ຫຼາຍ | 7 |
| 2.6 ທ່ານໄດ້ຮັກສາ, ເກັບມ້ຽນສື່ການຮຽນການສອນ | 4.00 | .793 | ຫຼາຍ | 6 |
| 2.7 ທ່ານໄດ້ແລກປ່ຽນ, ເຜີຍແຜ່ການຜະລິດ ແລະ ນຳໃຊ້ສື່ການຮຽນການສອນ | 3.46 | .783 | ປານກາງ | 3 |

ຈາກຕາຕະລາງທີ 72 ຂໍ້ມູນຜົນການວິເຄາະສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ ($\bar{X}$=3.05; SD=0.960), ທ່ານມີສື່ການຮຽນການສອນພຽງພໍ ($\bar{X}$=3.16;SD=0.763) ແລະ ທ່ານໄດ້ແລກປ່ຽນ, ເຜີຍແຜ່ການຜະລິດ ແລະ ນຳໃຊ້ສື່ການຮຽນການສອນ ($\bar{X}$=3.46;SD=0.783) ຕາມລຳດັບ.

**ຕາຕະລາງທີ 73** ຂໍ້ມູນຜົນການວິເຄາະການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **3. ການສອນ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 3.1 ທ່ານມີການຈັດການຮຽນການສອນ ຕາມຫຼັກສູດ, ແຜນການສອນ ແລະ ບົດສອນ | 4.63 | .528 | ຫຼາຍທີ່ສຸດ | 7 |
| 3.2 ທ່ານມີການຈັດການຮຽນການສອນທີ່ເ ໝາະສົມກັບຄວາມສາມາດ, ຄວາມ ຕ້ອງການ, ຄວາມສົນໃຈ ແລະ ພອນ ສະຫວັນຂອງຜູ້ຮຽນ | 3.95 | .589 | ຫຼາຍ | 4 |
| 3.3 ທ່ານມີການນຳໃຊ້ວິທີສອນ ແລະ ເຕັກນິກການສອນຫຼາຍຮູບແບບ ເຂົ້າ ໃນການຈັດການຮຽນການສອນ | 3.88 | .626 | ຫຼາຍ | 3 |
| 3.4 ທ່ານໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນ ການຮຽນ ແລະ ປະຕິບັດຕົວຈິງ | 4.28 | .608 | ຫຼາຍ | 6 |
| 3.5 ທ່ານມີການຈັດກິດຈະກຳການຮຽນ ການສອນຢູ່ໃນຫ້ອງຮຽນ ທີ່ເໝາະສົມ | 4.10 | .647 | ຫຼາຍ | 5 |
| 3.6 ທ່ານມີການຈັດກິດຈະກຳການຮຽນ ການສອນຢູ່ນອກຫ້ອງຮຽນ ຕາມ ເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ | 3.10 | .891 | ປານກາງ | 1 |
| 3.7 ທ່ານມີການນຳເອົາສະພາບຄວາມເປັນ ຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ | 3.50 | .838 | ປານກາງ | 2 |

ຈາກຕາຕະລາງທີ 73 ຂໍ້ມູນຜົນການວິເຄາະການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການສອນ ຢູ່ໃນລະດັບປານກາງ ມີທ່ານມີການຈັດກິດຈະກຳການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ ($\bar{X}$=3.10; SD=0.891)ແລະ ທ່ານມີການນຳເອົາສະພາບຄວາມເປັນຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ ($\bar{X}$=3.50; SD=0.838) ຕາມລຳດັບ.

**ຕາຕະລາງທີ 74** ຂໍ້ມູນຜົນການວິເຄາະການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **4. ການພັດທະນາ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 4.1 ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ພະແນກສຶກສາທິການ ແລະ ກິລາ ແຂວງ(ນະຄອນຫຼວງ) | 3.33 | 1.069 | ປານກາງ | 3 |
| 4.2 ທ່ານໄດ້ຮ່ວມໂມງສອນ ແລະ ຖອດຖອນບົດຮຽນກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງ ພາຍໃນໂຮງຮຽນ | 4.09 | .811 | ຫຼາຍ | 6 |
| 4.3 ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ | 3.36 | 1.088 | ປານກາງ | 4 |
| 4.4 ທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ | 3.15 | 1.112 | ປານກາງ | 1 |
| 4.5 ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ | 3.28 | .883 | ປານກາງ | 2 |
| 4.6 ທ່ານມີການຊອກຮູ້ ແລະ ຄົ້ນຄວ້າຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງດ້ວຍຕົນເອງ | 3.84 | .648 | ຫຼາຍ | 5 |

ຈາກຕາຕະລາງທີ 74 ຂໍ້ມູນຜົນການວິເຄາະການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການພັດທະນາ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ ($\bar{X}$=3.15; SD=1.112), ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ ($\bar{X}$=3.28; SD=0.883), ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ພະແນກສຶກສາທິການ ແລະ ກິລາ ແຂວງ(ນະຄອນຫຼວງ) ($\bar{X}$=3.33; SD=1.069) ແລະ ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ ($\bar{X}$=3.36;SD=1.088) ຕາມລຳດັບ.

**ຕາຕະລາງທີ 75** ຂໍ້ມູນຜົນການວິເຄາະການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

| **5. ການວັດ ແລະ ປະເມີນຜົນ** | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ລະດັບປະຕິບັດ | ຈັດອັນດັບ |
|---|---|---|---|---|
| 5.1 ທ່ານໄດ້ປະຕິບັດຕາມເກນ ແລະ ວິທີການປະເມີນຜົນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງທີ່ໄດ້ກຳນົດໄວ້ | 3.84 | .690 | ຫຼາຍ | 3 |
| 5.2 ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) | 3.71 | .962 | ຫຼາຍ | 2 |
| 5.3 ທ່ານມີການນ□າຜົນຈາກການກວດກາ ແລະ ການສອບເສັງຂອງນັກຮຽນມາປັບປຸງການຮຽນການສອນຂອງຕົນເອງ | 4.32 | 2.388 | ຫຼາຍ | 4 |
| 5.4 ທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ | 3.49 | .834 | ປານກາງ | 1 |

ຈາກຕາຕະລາງທີ 75 ຂໍ້ມູນຜົນການວິເຄາະການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ($\bar{X}$=3.49; SD=0.834) ແລະ ຢູ່ໃນລະດັບຫຼາຍ ມີ ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) ($\bar{X}$=3.71;SD=0.962) ຕາມລຳດັບ.

**ຕາຕະລາງທີ 76** ຂໍ້ມູນຜົນການວິເຄາະຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ

| ຄຳຖາມ | ຂໍ້ສະດວກ | ຄວາມຖີ່ | ເປີເຊັນ (%) |
|---|---|---|---|
| 1. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີຄືແນວໃດ? | ນັກຮຽນມີສົນທະນາແລກປ່ຽນບົດຮຽນ , ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ | 172 | 54.43 |
| | ນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ | 93 | 29.43 |
| | ນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ) | 91 | 28.80 |
| | ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາດ້ວຍຕົນເອງ | 82 | 25.95 |
| | ເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ, ມີຄວາມເອົາໃຈໃສ່ຕໍ່ການຮຽນ-ການສອນ ແລະ ເກີດຄວາມສົນໃຈ | 46 | 14.56 |
| | ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) | 32 | 10.13 |
| | ເຮັດໃຫ້ປະຫຍັດເວລາໃນການສິດສອນ (ໃຊ້ເວລາຢ່າງເໝາະສົມ) | 20 | 6.33 |
| | ຄູແມ່ນມີເວລາຄົ້ນຄ້ວາຊ່ວຍໃຫ້ຄູປະຕິບັດການຮຽນ-ການສອນໄດ້ງ່າຍຂຶ້ນ | 14 | 4.43 |
| | ມີຫ້ອງຮຽນ, ປຶ້ມຕຳລາ, ອຸປະກອນ ແລະ ສື່ການສອນຄົບຖ້ວນ | 10 | 3.16 |

ຈາກຕາຕະລາງທີ 76 ຂໍ້ມູນຜົນການວິເຄາະຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ ມີຈຳນວນ 172 ຄົນ ເທົ່າກັບ 54.43%; ຮອງລົງມາແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ ມີຈຳນວນ 93 ຄົນ ເທົ່າກັບ 29.43%; ຕໍ່ມາແມ່ນນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ) ມີຈຳນວນ 91 ຄົນ ເທົ່າກັບ 28.80%; ສຸດທ້າຍແມ່ນນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ມີຈຳນວນ 82 ຄົນ ເທົ່າກັບ 25.95% ຕາມລຳດັບ.

**ຕາຕະລາງທີ 77** ຂໍ້ມູນຜົນການວິເຄາະຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ

| ຄຳຖາມ | ຂໍ້ຫຍຸ້ງຍາກ | ຄວາມຖີ່ | ເປີເຊັນ (%) |
|---|---|---|---|
| 2. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີຄືແນວໃດ? | ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປື້ມຕຳລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) | 182 | 57.59 |
| | ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) | 91 | 28.80 |
| | ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອັ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ | 75 | 23.73 |
| | ການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມວຸ້ນແຊວ, ຍາດກັນເຮັດກິດຈະກຳ, ບໍ່ຮ່ວມມືກັບໝູ່) | 55 | 17.41 |
| | ເວລາໃນການສອນບໍ່ພໍ (ສອນຊ້າລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ. | 50 | 15.82 |
| | ນັກຮຽນມີຈຳນວນຫຼາຍ, ຫ້ອງຄັບແຄບແອອັດ (ແບ່ງເປັນກຸ່ມຍາກ) | 47 | 14.87 |
| | ນັກຮຽນມີຫຼາຍຊົນເຜົ່າ, ການປາກເວົ້າບໍ່ເຂົ້າໃຈ | 13 | 4.11 |
| | ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍການນຳໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ(ຄູໄດ້ເຂົ້າຮ່ວມຝຶກອົບຮົມຍັງມີໜ້ອຍ) | 6 | 1.90 |
| | ຄູສອນຫຼາຍຕຳລາ (ວິຊາ) | 3 | 0.95 |

ຈາກຕາຕະລາງທີ 77 ຂໍ້ມູນຜົນການວິເຄາະຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນ

ເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສໍາລັບນັກຮຽນ, ປຶ້ມຕໍາລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ມີຈໍານວນ 182 ຄົນ ເທົ່າກັບ 57.59%; ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊໍ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) ມີຈໍານວນ 91 ຄົນ ເທົ່າກັບ 28.80%; ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄໍາຕອບ (ເອີ້ນອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ ມີຈໍານວນ 75 ຄົນ ເທົ່າກັບ 23.73%; ສຸດທ້າຍແມ່ນການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມວຸ້ນວາຍ, ຍາດກັນເຮັດກິດຈະກໍາ, ບໍ່ຮ່ວມມືກັບໝູ່) ມີຈໍານວນ 55 ຄົນ ເທົ່າກັບ 17.41% ຕາມລໍາດັບ.

**ຕາຕະລາງທີ 78** ຂໍ້ມູນຜົນການວິເຄາະແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ

| ຄໍາຖາມ | ແນວທາງພັດທະນາ | ຄວາມຖີ່ | ເປີເຊັນ (%) |
|---|---|---|---|
| 3. ແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄວນເຮັດຄືແນວໃດ? | ຄົ້ນຄິດຜະລິດສື່/ຊອກຫາສື່/ນໍາໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕໍາລາຮຽນໃຫ້ຄົບທຸກຄົນ | 142 | 44.94 |
| | ຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼືບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ | 68 | 21.52 |
| | ຫ້ອງຮຽນຕ້ອງພຽງພໍກັບນັກຮຽນ ອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກໍານົດຈັດຫ້ອງຮຽນ (ແບ່ງກຸ່ມຄົ້ນຄວ້າ) ຕາມຄວາມເໝາະສົມ | 56 | 17.72 |
| | ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ | 51 | 16.14 |
| | ໃຫ້ນັກຮຽນໄດ້ຄົ້ນຄິດ, ມີສ່ວນຮ່ວມ ແລະ ປະຕິບັດກິດຈະກໍາຕົວຈິງຫຼາຍຂຶ້ນ | 36 | 11.39 |
| | ຄູຕ້ອງຊອກຮູ້ຮໍ່າຮຽນເພື່ອໃຫ້ທັນກັບສະພາບໃນປັດຈຸບັນ ແລະ ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) | 22 | 6.96 |
| | ຕ້ອງປັບປຸງເຕັກນິກການຮຽນການສອນໃຫ້ໄດ້ຫຼາຍວິທີ (ວິທີສອນແບບໃໝ່) | 21 | 6.65 |
| | ນໍາພາສ້າງກິດຈະກໍາໃຫ້ລະອຽດ ແລະ | 20 | 6.33 |

| | | | |
|---|---|---|---|
| | ຫຼາຍກວ່າເກົ່າ (ຮ້ອງເພງ,ເລົ່ານິທານ, ຫຼິ້ນເກມ) ເຕັກນິກການຕັ້ງຄຳຖາມໃຫ້ສອດຄ່ອງ ກັບບົດຮຽນ, ວາງກົດລະບຽບ,ກະຕິກາໃນຫ້ອງ ແລະ ໃຫ້ເວລານັກຮຽນໃນເວລາເຮັດກິດຈະກຳ | | |
| | ເວລາຂຶ້ນຫ້ອງສອນຄູຕ້ອງແຕ່ງບົດສອນ ແລະ ຄົ້ນຄວ້າກ່ອນຂຶ້ນຫ້ອງສອນ | 18 | 5.70 |
| | ການສອນຕ້ອງເອົາຄູເປັນໃຈກາງແດ່ ແລະ ນັກຮຽນເປັນໃຈກາງແດ່ (ເນັ້ນນັກຮຽນເປັນໃຈກາງກັບການອະທິບາຍໄປພ້ອມ) | 8 | 2.53 |

ຈາກຕາຕະລາງທີ 78 ຂໍ້ມູນຜົນການວິເຄາະແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີອັນດັບໜຶ່ງແມ່ນຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ ມີຈຳນວນ 142 ຄົນ ເທົ່າກັບ 44.94%; ຮອງລົງມາແມ່ນຕ້ອງເໜັ້ນໜັ້ກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ ມີຈຳນວນ 68 ຄົນ ເທົ່າກັບ 21.52%; ຕໍ່ມາແມ່ນຫ້ອງຮຽນຕ້ອງພຽງພໍກັບນັກຮຽນອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກຳນົດຈັດຫ້ອງຮຽນ (ແບ່ງກຸ່ມຄົ້ນຄວ້າ) ຕາມຄວາມເໝາະສົມ ມີຈຳນວນ 56 ຄົນ ເທົ່າກັບ 17.72%; ສຸດທ້າຍແມ່ນຝຶກອົບຮົມຄູໃຫ້ຫຼາຍຂຶ້ນ ມີຈຳນວນ 51 ຄົນ ເທົ່າກັບ 16.14% ຕາມລຳດັບ.

**ຕອນທີ່ 4** ການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

**ຕາຕະລາງທີ 79** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 1. ທ່ານຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ຄືແນວໃດ? | ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ) | 25 | 73.53 |
| | ບໍ່ໄດ້ຈັດຕັ້ງເຜີຍແຜ່ (ບໍ່ໄດ້ຮັບເອກະສານ) | 9 | 26.47 |

ຈາກຕາຕະລາງທີ 79 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ) ມີຈຳນວນ 25 ຄົນ ເທົ່າກັບ 73.53% ແລະ ບໍ່ໄດ້ຈັດຕັ້ງເຜີຍແຜ່ (ບໍ່ໄດ້ຮັບເອກະສານ) ມີຈຳນວນ 9 ຄົນ ເທົ່າກັບ 26.47%.

**ຕາຕະລາງທີ 80** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 2. ທ່ານໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ) | 30 | 88.24 |
| | ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ) | 24 | 70.59 |
| | ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) | 10 | 29.41 |
| | ຮູບການຍ້ອງຍໍ, ນະໂຍບາຍທາງສະໜອງເງິນຈຳນວນໜ້ອຍໜຶ່ງສ້າງແຮງຈູງໃຈ | 5 | 14.71 |
| | ແລກປ່ຽນບົດຮຽນກັບຜູ້ໄດ້ຜ່ານການຝຶກອົບຮົມ, ລວມຄູເພື່ອແລກປ່ຽນຖອດຖອນບົດຮຽນລະຫວ່າງກຸ່ມໂຮງຮຽນ (ພາຍໃນໂຮງຮຽນ) | 3 | 8.82 |

ຈາກຕາຕະລາງທີ 80 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ) ມີຈຳນວນ 30 ຄົນ ເທົ່າກັບ 88.24%; ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ) ມີຈຳນວນ 24 ຄົນ ເທົ່າກັບ 70.59% ແລະ ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) ມີຈຳນວນ 10 ຄົນ ເທົ່າກັບ 29.41% ຕາມລຳດັບ.

**ຕາຕະລາງທີ 81** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 3. ທ່ານຄິດວ່າຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ສ່ວນໃຫຍ່ມີຄວາມເຂົ້າໃຈ ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ) | 31 | 91.18 |
| | ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ | 2 | 5.88 |
| | ຄູໃຫ້ກິດຈະກໍາ, ຕັ້ງຄໍາຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນໍາການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ | 2 | 5.88 |

ຈາກຕາຕະລາງທີ 81 ຂໍ້ມູນຜົນການວິເຄາະ ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ) ມີຈໍານວນ 31 ຄົນ ເທົ່າກັບ 91.18%.

**ຕາຕະລາງທີ 82** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 4. ທ່ານຄິດວ່າຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ) | 30 | 88.24 |
| | ຕັ້ງຄໍາຖາມ,ນັກຮຽນລາຍງານ | 30 | 88.24 |
| | ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ | 29 | 85.29 |
| | ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) | 11 | 32.35 |
| | ໃຫ້ນັກຮຽນປະຕິບັດຕົວຈິງ | 4 | 11.76 |
| | ມອບວຽກບ້ານໃຫ້ນັກຮຽນເມືອເຮັດຢູ່ບ້ານ. | 4 | 11.76 |

ຈາກຕາຕະລາງທີ 82 ຂໍ້ມູນຜົນການວິເຄາະ ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ) ມີຈໍານວນ 30 ຄົນ ເທົ່າກັບ 88.24%; ຕັ້ງຄໍາຖາມ,ນັກຮຽນລາຍງານ ມີຈໍານວນ 30 ຄົນ ເທົ່າກັບ 88.24%; ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ ມີຈໍານວນ 29 ຄົນ ເທົ່າກັບ 85.29% ແລະ ນັກຮຽນມີສ່ວນຮ່ວມ , ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) ມີຈໍານວນ 11 ຄົນ ເທົ່າກັບ 32.35% ຕາມລໍາດັບ.

**ຕາຕະລາງທີ 83** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 5. ທ່ານມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ເຮັດຄືແນວໃດ? | ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ, ກ້າຫານ, ກ້າສະແດງອອກ, ຢາກຮຽນ) | 21 | 61.76 |
| | ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ | 15 | 44.12 |
| | ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນ□າໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ | 6 | 17.65 |
| | ຖອດຖອນບົດຮຽນຮ່ວມກັນກັບຄູສອນ | 5 | 14.71 |

ຈາກຕາຕະລາງທີ 83 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ,ເອົາໃຈໃສ່ໃນການຮຽນ, ຫ້າວຫັນ, ກ້າຫານ, ກ້າສະແດງອອກ, ຢາກຮຽນ) ມີຈໍານວນ 21 ຄົນ ເທົ່າກັບ 61.76%; ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ ມີຈໍານວນ 15 ຄົນ ເທົ່າກັບ 44.12%; ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນ□າໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ ມີຈໍານວນ 6 ຄົນ ເທົ່າກັບ 17.65% ຕາມລໍາດັບ.

**ຕາຕະລາງທີ 84** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 6. ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ບົດສອນ | 31 | 91.18 |
| | ອຸປະກອນ/ສື່ການຮຽນການສອນ | 30 | 88.24 |
| | ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນ ຜ່ານຜູ້ບໍລິຫານໂຮງຮຽນ | 29 | 85.29 |
| | ແຜນການສອນ | 18 | 52.94 |

ຈາກຕາຕະລາງທີ 84 ຂໍ້ມູນຜົນການວິເຄາະ ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ບົດສອນ ມີຈຳນວນ 31 ຄົນ ເທົ່າກັບ 91.18%; ອຸປະກອນ/ສື່ການຮຽນການສອນ ມີຈຳນວນ 30 ຄົນ ເທົ່າກັບ 88.24%; ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ ມີຈຳນວນ 29 ຄົນ ເທົ່າກັບ 85.29% ແລະ ແຜນການສອນ ມີຈຳນວນ 18 ຄົນ ເທົ່າກັບ 52.94% ຕາມລຳດັບ.

**ຕາຕະລາງທີ 85** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 7. ທ່ານຄິດວ່າຄູສອນມີການຜະລິດ ແລະ ນຳໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປຶ້ມຕຳລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ) | 26 | 76.47 |
| | ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້) | 13 | 38.24 |
| | ໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ) | 9 | 26.47 |
| | ໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນ□າໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ) | 8 | 23.53 |
| | ຜະລິດສບໍ່ຕໍ່ເນື່ອງ, ບາງວິຊາບໍ່ສາມາດຜະລິດໄດ້ (ການຕອບສະໜອງຂອງຂັ້ນເທິງຍັງບໍ່ພຽງພໍ) | 6 | 17.65 |

ຈາກຕາຕະລາງທີ 85 ຂໍ້ມູນຜົນການວິເຄາະ ຄູສອນມີການຜະລິດ ແລະ ນຳໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປຶ້ມຕຳລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ) ມີຈຳນວນ 26 ຄົນ ເທົ່າກັບ 76.47%; ຄູໄດ້ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້)ມີຈຳນວນ 13 ຄົນ ເທົ່າກັບ 38.24%; ຄູໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ)ມີຈຳນວນ 9 ຄົນ ເທົ່າກັບ 26.47% ແລະ ຄູໄດ້ນຳໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນຳໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ) ມີຈຳນວນ 8 ຄົນ ເທົ່າກັບ 23.53% ຕາມລຳດັບ.

**ຕາຕະລາງທີ 86** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 8. ທ່ານຄິດວ່າຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ແບບປະສົມປະສານ ຕາມຄວາມເໝາະສົມ (ແບບເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ) | 27 | 79.41 |
| | ໃຫ້ນັກຮຽນຄົ້ນຄ້ວາ, ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ | 12 | 35.29 |
| | ໄປທັດສະນະສຶກສາ | 6 | 17.65 |

ຈາກຕາຕະລາງທີ 86 ຂໍ້ມູນຜົນການວິເຄາະ ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ແບບປະສົມປະສານ ຕາມຄວາມເໝາະສົມ (ແບບເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ) ມີຈຳນວນ 27 ຄົນ ເທົ່າກັບ 79.41%; ໃຫ້ນັກຮຽນຄົ້ນຄ້ວາ, ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ ມີຈຳນວນ 12 ຄົນ ເທົ່າກັບ 35.29% ແລະ ໄປທັດສະນະສຶກສາ ມີຈຳນວນ 6 ຄົນ ເທົ່າກັບ 17.65% ຕາມລຳດັບ.

**ຕາຕະລາງທີ 87** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູ ໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 9. ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) | 18 | 52.94 |
| | ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ) | 17 | 50 |
| | ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ) | 16 | 47.06 |
| | ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ | 9 | 26.47 |

| | | | |
|---|---|---|---|
| | ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) | | |
| | ບໍ່ໄດ້ຮັບການພັດທະນາ, ບໍ່ໄດ້ໄປຝຶກອົບຮົມ | 4 | 11.76 |

ຈາກຕາຕະລາງທີ 87 ຂໍ້ມູນຜົນການວິເຄາະ ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) ມີຈຳນວນ 18 ຄົນ ເທົ່າກັບ 52.94%; ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ) ມີຈຳນວນ 17 ຄົນ ເທົ່າກັບ 50%, ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ) ມີຈຳນວນ 16 ຄົນ ເທົ່າກັບ 47.06% ແລະ ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) ມີຈຳນວນ 9 ຄົນ ເທົ່າກັບ 26.47% ຕາມລຳດັບ.

**ຕາຕະລາງທີ 88** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 10. ທ່ານຄິດວ່າຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ | 20 | 58.82 |
| | ກວດກາ/ສອບເສັງຫຼາຍຄັ້ງ | 19 | 55.88 |
| | ຄະແນນມີສ່ວນຮ່ວມ | 15 | 44.12 |
| | ໃຫ້ກິດຈະກຳເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ | 14 | 41.18 |
| | ຖາມ-ຕອບປາກເປົ່າເອົາຄະແນນ | 13 | 38.24 |
| | ວັດຄະແນນເປັນລາຍບຸກຄົນ/ກຸ່ມ | 10 | 29.41 |
| | ຕັ້ງຄຳຖາມ ຖາມ-ຕອບເອົາຄະແນນ | 7 | 20.59 |
| | ໃຫ້ຄະແນນກິດຈະກຳທີ່ຕິດພັນກັບບົດຮຽນ | 5 | 14.71 |

ຈາກຕາຕະລາງທີ 88 ຂໍ້ມູນຜົນການວິເຄາະ ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ ມີຈຳນວນ 20 ຄົນ ເທົ່າກັບ 58.82%; ກວດກາ/ສອບເສັງຫຼາຍຄັ້ງ ມີຈຳນວນ 19 ຄົນ ເທົ່າກັບ 55.88%; ຄະແນນມີສ່ວນຮ່ວມ ມີຈຳນວນ 15 ຄົນ ເທົ່າກັບ 44.12%; ໃຫ້ກິດຈະກຳເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ ມີຈຳນວນ 14 ຄົນ ເທົ່າກັບ 41.18% ແລະ ຖາມ-ຕອບປາກເປົ່າເອົາຄະແນນ ມີຈຳນວນ 13 ຄົນ ເທົ່າກັບ 38.24% ຕາມລຳດັບ.

**ຕາຕະລາງທີ 89** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 11. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) | 32 | 94.12 |
| | ມີຫ້ອງຮຽນ, ປຶ້ມຕຳລາ, ອຸປະກອນ ແລະ ສື່ການສອນຄົບຖ້ວນ | 9 | 26.47 |
| | ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ | 8 | 23.53 |
| | ຄູແມ່ນມີເວລາຄົ້ນຄ້ວາ ຊ່ວຍໃຫ້ຄູປະຕິບັດການຮຽນ-ການສອນໄດ້ງ່າຍຂຶ້ນ | 7 | 20.59 |
| | ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາດ້ວຍຕົນເອງ | 5 | 14.71 |
| | ນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ | 3 | 8.82 |

ຈາກຕາຕະລາງທີ 89 ຂໍ້ມູນຜົນການວິເຄາະ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ) ມີຈຳນວນ 32 ຄົນ ເທົ່າກັບ 94.12%; ມີຫ້ອງຮຽນ, ປຶ້ມຕຳລາ, ອຸປະກອນ ແລະ ສື່ການສອນຄົບຖ້ວນ ມີຈຳນວນ 9 ຄົນ ເທົ່າກັບ 26.47% ແລະ ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ ມີຈຳນວນ 8 ຄົນ ເທົ່າກັບ 23.53% ຕາມລຳດັບ.

**ຕາຕະລາງທີ 90** ຂໍ້ມູນຜົນການວິເຄາະການສໍາພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄໍາຖາມການສໍາພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 12. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສໍາລັບນັກຮຽນ, ປື້ມຕໍາລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) | 21 | 61.76 |
| | ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້ຳ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ) | 16 | 47.06 |
| | ເວລາໃນການສອນບໍ່ພໍ (ສອນຊ້ຳລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສໍາລັບການປະຕິບັດກິດຈະກໍາ (ກິດຈະກໍາຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ. | 14 | 41.18 |
| | ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ), ໄດ້ຄົ້ນຄ້ວາຫຼາຍ | 13 | 38.24 |
| | ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄໍາຕອບ (ເອິ້ຍອີງໃສ່ໝູ່)<br>ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ | 9 | 26.47 |
| | ນັກຮຽນມີຈໍານວນຫຼາຍ, ຫ້ອງຄັບແຄບແອອັດ (ແບ່ງເປັນກຸ່ມຍາກ) | 6 | 17.65 |
| | ການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມວຸ້ນແຊວ, ຍາດກັນເຮັດກິດຈະກໍາ, ບໍ່ຮ່ວມມືກັບໝູ່) | 6 | 17.65 |
| | ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍການນໍາໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ຄູໄດ້ເຂົ້າຮ່ວມໃນການຝຶກອົບຮົມຍັງມີໜ້ອຍ) | 5 | 14.71 |

ຈາກຕາຕະລາງທີ 90 ຂໍ້ມູນຜົນການວິເຄາະ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສໍາລັບນັກຮຽນ , ປື້ມຕໍາລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ມີຈໍານວນ 21 ຄົນ ເທົ່າກັບ 61.76%; ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້ຳ, ນັກຮຽນເປັນຜູ້ນ້ອຍ ແລະ

ເດັກພິເສດ) ມີຈຳນວນ 16 ຄົນ ເທົ່າກັບ 47.06%; ເວລາໃນການສອນບໍ່ພໍ (ສອນຊ້ຳລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ ມີຈຳນວນ 14 ຄົນ ເທົ່າກັບ 41.18%; ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ),ໄດ້ຄົ້ນຄ້ວາຫຼາຍ ມີຈຳນວນ 13 ຄົນ ເທົ່າກັບ 38.24% ແລະ ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ ມີຈຳນວນ 9 ຄົນ ເທົ່າກັບ 26.47% ຕາມລຳດັບ.

**ຕາຕະລາງທີ 91** ຂໍ້ມູນຜົນການວິເຄາະການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ.

| **ຄຳຖາມການສຳພາດຜູ້ບໍລິຫານໂຮງຮຽນ** | ຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ມັດທະຍົມໃນທົ່ວປະເທດ | **ຄວາມຖີ່** | **ເປີເຊັນ (%)** |
|---|---|---|---|
| 13. ທ່ານມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄືແນວໃດ? | ຍົກລະດັບ ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ | 26 | 76.47 |
| | ຈັດນິເທດພາຍໃນ, ຮ່ວມໂມງສອນ, ແລກປ່ຽນຖອດຖອນບົດຮຽນກັບຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) | 21 | 61.76 |
| | ຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປື້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ | 4 | 11.76 |

ຈາກຕາຕະລາງທີ 91 ຂໍ້ມູນຜົນການວິເຄາະ ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຍົກລະດັບ, ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ ມີຈຳນວນ 26 ຄົນ ເທົ່າກັບ 76.47%; ຈັດນິເທດພາຍໃນ, ຮ່ວມໂມງສອນ, ແລກປ່ຽນຖອດຖອນບົດຮຽນກັບຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) ມີຈຳນວນ 21 ຄົນ ເທົ່າກັບ 61.76% ຕາມລຳດັບ.

# ບົດທີ 5 ສະຫຼຸບ ແລະ ອະພິປາຍຜົນ

ການດຳເນີນການສຶກສາຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອສຶກສາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ ຄູສອນໂຮງຮຽນປະຖົມ ຈຳນວນ 114 ຄົນ, ຄູສອນໂຮງຮຽນມັດທະຍົມ ຈຳນວນທັງໝົດ 316 ຄົນ, ຜູ້ບໍລິຫານໂຮງຮຽນ ປະຖົມ ຈຳນວນ 25 ຄົນ ແລະ ຜູ້ບໍລິຫານໂຮງຮຽນມັດທະຍົມ ຈຳນວນ 34 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນເປັນແບບສອບຖາມກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ແລະ ແບບສຳພາດຜູ້ບໍລິຫານການສຶກສາກ່ຽວກັບຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຊຶ່ງເປັນແບບສຳພາດຊະນິດກວດສອບລາຍການ (Checklist) ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນມີຄະແນນຄວາມຖີ່(Frequency), ຄະແນນຄວາມຖີ່ຮ້ອຍລະ(%), ຄ່າຄະແນນສະເລ່ຍ($\bar{X}$), ຄ່າຜັນປ່ຽນມາດຕະຖານ (SD) ແລະ ວິເຄາະເນື້ອໃນການຈັດອັນດັບຄວາມສຳຄັນ (Content Analysis).

**ສະຫຼຸບຜົນການວິເຄາະຂໍ້ມູນ.**

ຈາກຜົນການວິເຄາະຂໍ້ມູນໃນການສຶກສາຄັ້ງນີ້ ສະຫຼຸບສາລະສຳຄັນຂອງການສຶກສາຄົ້ນຄວ້າໄດ້ດັ່ງຕໍ່ໄປນີ້: ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

**I. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

1. ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ.

1.1 ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ ແລະ ວິທີສອນແບບປະຕິບັດໂຄງການ.

1.2 ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ ແລະ ວິທີສອນແບບຫຼິ້ນເກມ ຕາມລຳດັບ.

2. ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບຫຼິ້ນເກມ; ວິທີສອນແບບສືບສວນຊອກຫາຄວາມຮູ້ ແລະ ວິທີສອນແບບປະຕິບັດໂຄງການ ຕາມລຳດັບ.

2.1 ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບປະຕິບັດໂຄງການ ແລະ ວິທີສອນແບບສືບສວນຊອກຫາຄວາມຮູ້ ຕາມລຳດັບ

2.2 ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບຫຼິ້ນເກມ; ວິທີສອນແບບເລົ່າເລື່ອງ; ວິທີສອນແບບສືບສວນຊອກຫາຄວາມຮູ້ ແລະ ວິທີສອນແບບດາວ 5 ແຈ ຕາມລຳດັບ.

3. ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບດາວ 5 ແຈ; ວິທີສອນແບບສາທິດ ແລະ ວິທີສອນແບບແກ້ບັນຫາ ຕາມລຳດັບ.

3.1 ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບສືບສວນຊອກຫາຄວາມຮູ້; ວິທີສອນແບບດາວ 5 ແຈ ແລະ ວິທີສອນແບບປະຕິບັດໂຄງການ ຕາມລຳດັບ.

3.2 ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບດາວ 5 ແຈ; ວິທີສອນແບບສາທິດ ແລະ ວິທີສອນແບບແກ້ບັນຫາຕາມລຳດັບ.

**II. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

1. ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

1.1 ການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ ແລະ ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ ຕາມລຳດັບ.

1.2 ສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ ແລະ ທ່ານມີສື່ການຮຽນການສອນພຽງພໍ ຕາມລຳດັບ.

1.3 ການປະຕິບັດການສອນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການສອນ ຢູ່ໃນລະດັບປານກາງ ມີທ່ານມີການຈັດກິດຈະກຳການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ; ຢູ່ໃນລະດັບຫຼາຍ ມີທ່ານມີການນຳເອົາສະພາບຄວາມເປັນຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ ແລະ ທ່ານມີການນຳໃຊ້ວິທີສອນ ແລະ ເຕັກນິກການສອນຫຼາຍຮູບແບບ ເຂົ້າໃນການຈັດການຮຽນການສອນ ຕາມລຳດັບ.

1.4 ການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການພັດທະນາ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ; ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ; ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ຫ້ອງການສຶກສາທິການ ແລະ ກິລາ ເມືອງ (ນະຄອນ), ພະແນກສຶກສາທິການ ແລະ ກິລາ ແຂວງ(ນະຄອນຫຼວງ) ແລະ ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ ຕາມລຳດັບ.

1.5 ການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບຫຼາຍ ມີທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ແລະ ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) ຕາມລຳດັບ.

2. ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ

2.1 ການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ ແລະ ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ ຕາມລຳດັບ.

2.2 ສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ ແລະ ທ່ານມີສື່ການຮຽນການສອນພຽງພໍ ຕາມລຳດັບ.

2.3 ການປະຕິບັດການສອນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການສອນ ຢູ່ໃນລະດັບຫຼາຍ ມີທ່ານມີການຈັດກິດຈະກຳການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ ແລະ ທ່ານມີການນຳເອົາສະພາບຄວາມເປັນຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ ຕາມລຳດັບ.

2.4 ການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການພັດທະນາ ຢູ່ໃນລະດັບຫຼາຍ ມີທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ; ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ; ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ ຕາມລຳດັບ.

2.5 ການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບຫຼາຍ ມີທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) ແລະ ທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ຕາມລຳດັບ.

3. ການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ

3.1 ການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ ແລະ ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ ຕາມລຳດັບ.

3.2 ສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ; ທ່ານມີສື່ການຮຽນການສອນພຽງພໍ ແລະ ທ່ານໄດ້ແລກປ່ຽນ, ເຜີຍແຜ່ການຜະລິດ ແລະ ນຳໃຊ້ສື່ການຮຽນການສອນ ຕາມລຳດັບ.

3.3 ການປະຕິບັດການສອນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການສອນ ຢູ່ໃນລະດັບປານກາງ ມີທ່ານມີການຈັດກິດຈະກຳການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ ແລະ ທ່ານມີການນຳເອົາສະພາບຄວາມເປັນຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ ຕາມລຳດັບ.

3.4 ການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການພັດທະນາ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ; ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ; ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ພະແນກສຶກສາທິການ ແລະ ກິລາ ແຂວງ (ນະຄອນຫຼວງ) ແລະ ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ ຕາມລຳດັບ.

3.5 ການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ແລະ ຢູ່ໃນລະດັບຫຼາຍ ມີ ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ) ຕາມລຳດັບ.

**III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແນວທາງພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

1. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ; ຕໍ່ມາແມ່ນນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ແລະ ສຸດທ້າຍແມ່ນນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ) ຕາມລຳດັບ.

1.1 ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນ ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ; ຕໍ່ມາແມ່ນເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ, ມີຄວາມເອົາໃຈໃສ່ຕໍ່ການຮຽນ-ການສອນແລະ ເກີດຄວາມສົນໃຈ; ສຸດທ້າຍແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ (ຜົນການຮຽນຂອງນັກຮຽນດີຂຶ້ນ) ຕາມລຳດັບ.

1.2 ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ; ຕໍ່ມາແມ່ນນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ); ສຸດທ້າຍແມ່ນນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ຕາມລຳດັບ.

2. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕ□າລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ; ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ; ສຸດທ້າຍແມ່ນການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມວຸ້ນວາຍ, ຍາດກັນເຮັດກິດຈະກຳ, ບໍ່ຮ່ວມມືກັບໝູ່) ຕາມລຳດັບ.

2.1 ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສ□າລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ(ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່), ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ; ສຸດທ້າຍແມ່ນເວລາໃນການສອນບໍ່ພໍ (ສອນຊ້າລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້າສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ ຕາມລຳດັບ.

2.2 ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງ

ໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້ຳ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອື້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ; ສຸດທ້າຍແມ່ນການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມອິນແຊວ, ຍາດກັນເຮັດກິດຈະກຳ, ບໍ່ຮ່ວມມືກັບໝູ່) ຕາມລຳດັບ.

3. ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຮອງລົງມາແມ່ນຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ສຸດທ້າຍແມ່ນຫ້ອງຮຽນຕ້ອງພຽງພໍກັບນັກຮຽນອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກຳນົດຈັດຫ້ອງຮຽນ(ກຸ່ມຄົ້ນຄວ້າ)ຕາມຄວາມເໝາະສົມ ຕາມລຳດັບ.

3.1 ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ); ຮອງລົງມາແມ່ນຄູຕ້ອງຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຄູຕ້ອງນຳພາສ້າງກິດຈະກຳໃຫ້ລະອຽດ ແລະ ຫຼາຍກວ່າເກົ່າ (ຮ້ອງເພງ,ເລົ່ານິທານ, ຫຼິ້ນເກມ) ເຕັກນິກການຕັ້ງຄຳຖາມໃຫ້ສອດຄ່ອງກັບບົດຮຽນ, ວາງກົດລະບຽບ,ກະຕິກາໃນຫ້ອງ ແລະ ໃຫ້ເວລານັກຮຽນໃນເວລາເຮັດກິດຈະກຳ; ສຸດທ້າຍແມ່ນຄູຕ້ອງຊອກຮູ້ຮໍ່າຮຽນເພື່ອໃຫ້ທັນກັບສະພາບໃນປັດຈຸບັນ ແລະ ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) ຕາມລຳດັບ.

3.2ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນມັດທະຍົມ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງມີອັນດັບໜຶ່ງແມ່ນຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຮອງລົງມາແມ່ນຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຫ້ອງຮຽນຕ້ອງພຽງພໍກັບນັກຮຽນອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກຳນົດຈັດຫ້ອງຮຽນ (ແບ່ງກຸ່ມຄົ້ນຄວ້າ) ຕາມຄວາມເໝາະສົມ; ສຸດທ້າຍແມ່ນຝຶກອົບຮົມຄູໃຫ້ຫຼາຍຂຶ້ນ ຕາມລຳດັບ.

**IV. ການສຳພາດຜູ້ບໍລິຫານໂຮງຮຽນ**

1. ການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ

1.1 ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ.

1.2ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ(ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ); ສົ່ງເສີມ,

ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ); ສົ່ງຄູໄປຝຶກອົບຮົມນໍາຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນໍາໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ); ມີການແຕ່ງຕັ້ງ ແລະ ມອບໝາຍໜ້າທີ່ຮັບຜິດຊອບຂອງຄູ ແລະ ແລກປ່ຽນບົດຮຽນກັບຜູ້ໄດ້ຜ່ານການຝຶກອົບຮົມ, ລວມຄູເພື່ອແລກປ່ຽນຖອດຖອນບົດຮຽນ, ລະຫວ່າງກຸ່ມໂຮງຮຽນ (ພາຍໃນໂຮງຮຽນ) ຕາມລໍາດັບ.

1.3 ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ); ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ ແລະ ຄູໃຫ້ກິດຈະກໍາ, ຕັ້ງຄໍາຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນໍາການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ ຕາມລໍາດັບ.

1.4 ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຕັ້ງຄໍາຖາມ, ນັກຮຽນລາຍງານ; ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ; ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) ແລະ ໃຫ້ນັກຮຽນປະຕິບັດຕົວຈິງ ຕາມລໍາດັບ.

1.5 ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ,ກ້າຫານ, ກ້າສະແດງອອກ, ຢາກຮຽນ); ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ; ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນໍາໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ ແລະ ຖອດຖອນບົດຮຽນຮ່ວມກັນກັບຄູສອນ ຕາມລໍາດັບ.

1.6 ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ບົດສອນ; ອຸປະກອນ/ສື່ການຮຽນການສອນ; ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັນຜ່ານຜູ້ບໍລິຫານໂຮງຮຽນ ແລະ ແຜນການສອນ ຕາມລໍາດັບ.

1.7 ຄູສອນມີການຜະລິດ ແລະ ນໍາໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປຶ້ມຕໍາລາຮຽນ ໃນແຕ່ລະບົດ ແລະ ນໍາອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ນໍາໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນໍາໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້); ໃຊ້ອຸປະກອນທໍາມະຊາດທີ່ຫາໄດ້ (ນໍາໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ); ໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ) ແລະ ຜະລິດສບໍ່ຕໍ່ເນື່ອງ, ບາງວິຊາບໍ່ສາມາດຜະລິດໄດ້ (ການຕອບສະໜອງຂອງຂັ້ນເທິງຍັງບໍ່ພຽງພໍ) ຕາມລໍາດັບ.

1.8 ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ແບບປະສົມປະສານ ຕາມຄວາມເໝາະສົມ (ເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ); ໃຫ້ນັກຮຽນຄົ້ນຄ້ວາ, ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນ□າຂອງຄູ; ຈັດເປັນກຸ່ມ ໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກໍາ; ໃຊ້ຄໍາຖາມ ສົນທະນາປະກອບຄໍາຄິດເຫັນ ແລະ ໄປທັດສະນະສຶກສາ ຕາມລໍາດັບ.

1.9 ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອໍານວຍການໂຮງຮຽນ,ຄູສອນດ້ວຍກັນ); ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ

ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ) ຕາມລຳດັບ.

1.10 ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ; ໃຫ້ກິດຈະກຳເຮັດເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ; ກວດກາ/ສອບເສັງຫຼາຍຄັ້ງ; ຖາມ-ຕອບປາກເປົ່າເອົາຄະແນນ ແລະ ຄະແນນມີສ່ວນຮ່ວມ ຕາມລຳດັບ.

1.11 ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ຕາມລຳດັບ.

1.12 ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ເວລາໃນການສອນບໍ່ພໍ (ສອນຊ້ຳລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້າ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ; ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ),ໄດ້ຄົ້ນຄ້ວາຫຼາຍ ແລະ ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ນອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ ຕາມລຳດັບ.

1.13 ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຍົກລະດັບ, ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ຈັດນິເທດພາຍໃນ, ຮ່ວມໂມງສອນ, ຖອດຖອນບົດຮຽນ, ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ); ຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ ແລະ ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັນບົດສອນປະຈຳອາທິດ) ຕາມລຳດັບ

2. ການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ

2.1 ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ.

2.2 ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ); ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ); ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) ແລະ ມີການແຕ່ງຕັ້ງແລະ ມອບໝາຍໜ້າທີ່ຮັບຜິດຊອບຂອງຄູ ຕາມລຳດັບ.

2.3 ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ); ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ ແລະ ຄູໃຫ້ກິດຈະກຳ, ຕັ້ງຄຳຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນຳການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ ຕາມລຳດັບ.

2.4 ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກໍາເປັນລາຍບຸກຄົນ, ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ; ຕັ້ງຄໍາຖາມ,ນັກຮຽນລາຍງານ; ສະແດງອຸປະກອນ/ສື່ (ຮູບພາບ)ໃຫ້ນັກຮຽນເບິ່ງ ແລະ ສົນທະນາແລກປ່ຽນບົດຮຽນກັບຄູ ແລະ ສະຫຼັບນັກຮຽນອ່ອນແລະເກັ່ງປົນກັນ (ຜູ້ຮຽນເກັ່ງສອນຊ່ອຍຄູ) ຕາມລໍາດັບ.

2.5 ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ. ມີຄວາມກ້າຫານ, ກ້າສະແດງອອກ,ຢາກຮຽນ; ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ ແລະ ມອບໃຫ້ຜູ້ຮອງ ຫຼື ວິຊາການເກັບຂໍ້ມູນການສອນຂອງຄູແຕ່ລະຊົ່ວໂມງ (ຕິດຕາມກວດກາເວລາຄູຂຶ້ນຫ້ອງ) ຕາມລໍາດັບ.

2.6 ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ອຸປະກອນ/ສື່ການຮຽນການສອນ; ບົດສອນ; ແຜນການສອນ ແລະ ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນ ຜ່ານຜູ້ບໍລິຫານໂຮງຮຽນ ຕາມລໍາດັບ.

2.7 ຄູສອນມີການຜະລິດ ແລະ ນໍາໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ມີການຜະລິດສື່ການສອນ ໂດຍອີງໃສ່ປື້ມຕໍາລາຮຽນ ໃນແຕ່ລະບົດ ແລະ ນໍາອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ໃຊ້ອຸປະກອນທໍາມະຊາດທີ່ຫາໄດ້ (ນ□າໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ); ນໍາໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນໍາໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້) ແລະ ບາງວິຊາບໍ່ສາມາດຜະລິດໄດ້ ຕາມລໍາດັບ.

2.8 ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຈັດເປັນກຸ່ມ ໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກໍາ; ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນໍາຂອງຄູ ແລະ ໃຊ້ຄໍາຖາມ ສົນທະນາປະກອບຄໍາຄິດເຫັນ ຕາມລໍາດັບ.

2.9 ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການນິເທດ (ຈາກຜູ້ອໍານວຍການໂຮງຮຽນ,ຄູສອນດ້ວຍກັນ) ແລະ ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ) ຕາມລໍາດັບ.

2.10 ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ກວດກາປະຈໍາເດືອນ, ສອບເສັງປະຈໍາພາກ, ສອບເສັງປະຈໍາປີ; ວັດກ່ອນການສອນ, ໃນລະຫວ່າງການຈັດກິດຈະກໍາການຮຽນການສອນ, ຫຼັງການຮຽນການສອນ; ດ້ວຍຫຼາຍຮູບແບບ (ທີ່ເໝາະສົມ) ແລະ ໃຫ້ກິດຈະກໍາເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ ຕາມລໍາດັບ.

2.11 ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄໍາແນະນໍາ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກໍາຕ່າງໆ (ກິດຈະກໍາເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄໍາຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ແລະ ນັກຮຽນສາມາດສອນເພື່ອນຜູ້ທີ່ຮຽນອ່ອນຊ່ວຍຄູສອນໄດ້ ຕາມລໍາດັບ.

2.12 ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ໄດ້ກະກຽມອຸປະກອນສໍາລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍ ການນໍາໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ບໍ່ເຂົ້າໃຈການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ); ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດ

ຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ ແລະ ງົບປະມານບໍລິຫານໂຮງຮຽນມາຮັບໃຊ້ການຮຽນການສອນຍັງບໍ່ພຽງພໍ ແລະ ຊັກຊ້າ ຕາມລຳດັບ.

2.13 ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຝຶກອົບຮົມ (ຍົກລະດັບ)ຄູໃຫ້ຫຼາຍຂຶ້ນ; ເຂົ້າຮ່ວມຊົ່ວໂມງສອນ, ແລກປ່ຽນຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ (ນິເທດພາຍໃນ); ຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປື້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັ່ນບົດສອນປະຈຳອາທິດ) ຕາມລຳດັບ.

3. ການສຳພາດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນມັດທະຍົມ ຕາມຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ

3.1 ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມີນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ.

3.2 ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ); ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ); ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ) ຕາມລຳດັບ.

3.3 ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ).

3.4 ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກຳເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຕັ້ງຄຳຖາມ, ນັກຮຽນລາຍງານ; ຄູເປັນຜູ້ແນະນຳ, ຕິດຕາມ,ສະຫຼຸບ; ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) ຕາມລຳດັບ.

3.5 ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ, ກ້າຫານ, ກ້າສະແດງອອກ, ຢາກຮຽນ); ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ; ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນຳໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ ຕາມລຳດັບ.

3.6 ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ບົດສອນ; ອຸປະກອນ/ສື່ການຮຽນການສອນ; ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ; ແຜນການສອນ ຕາມລຳດັບ.

3.7 ຄູສອນມີການຜະລິດ ແລະ ນຳໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປື້ມຕຳລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ຄູໄດ້ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້); ຄູໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ); ຄູໄດ້ນຳໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນຳໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ) ຕາມລຳດັບ.

3.8 ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ແບບປະສົມປະສານ ຕາມຄວາມເໝາະສົມ (ແບບເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ); ໃຫ້ນັກຮຽນຄົ້ນຄ້ວາ,

ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ; ໄປທັດສະນະສຶກສາ ຕາມລຳດັບ.

3.9 ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອຳນວຍການໂຮງຮຽນ, ຄູສອນດ້ວຍກັນ); ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ) ຕາມລຳດັບ.

3.10 ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ; ກວດກາ/ສອບເສັງຫຼາຍຄັ້ງ; ຄະແນນມີສ່ວນຮ່ວມ; ໃຫ້ກິດຈະກຳເປັນກຸ່ມ, ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ; ຖາມ-ຕອບປາກເປົ່າເອົາຄະແນນ ຕາມລຳດັບ.

3.11 ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ມີຫ້ອງຮຽນ, ປຶ້ມຕຳລາ, ອຸປະກອນ ແລະ ສື່ການສອນຄົບຖ້ວນ; ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ ຕາມລຳດັບ.

3.12 ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້ຳ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ເວລາໃນການສອນບໍ່ພໍ (ສອນຊ້ຳລີ້ງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ; ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ),ໄດ້ຄົ້ນຄ້ວາຫຼາຍ; ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ການຂຽນ, ຄິດໄລ່ເລກ ຕາມລຳດັບ.

3.13 ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາຫຼືວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຍົກລະດັບ, ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ຈັດນິເທດພາຍໃນ, ຮ່ວມໂມງສອນ, ແລກປ່ຽນຖອດຖອນບົດຮຽນກັບຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) ຕາມລຳດັບ.

**ອະພິປາຍຜົນ.**

ຜົນການສຶກສາມີປະເດັນສຳຄັນຈາກການຄົ້ນພົບໃນການສຶກສາຄົ້ນຄວ້າ ຕາມຂອບຄວາມຄິດ ແລະ ຈຸດປະສົງຂອງການສຶກສາ ດັ່ງລາຍລະອຽດຕໍ່ໄປນີ້:

ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ

**I. ວິທີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ**

1. ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມ ມີຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບປະຕິບັດໂຄງການ ແລະ ຄູຊັ້ນມັດທະຍົມມີຄວາມຮູ້ຄວາມເຂົ້າໃຈວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບຫຼິ້ນເກມ. ເນື່ອງຈາກວ່າ ໃນຖານະທີ່ເປັນຄູພວກເຮົາ

ຈຳເປັນຕ້ອງຮູ້ວິທີການຮຽນຂອງນັກຮຽນ. ພວກເຮົາຕ້ອງພິຈາລະນາວ່ານັກຮຽນຮັບເອົາຂໍ້ມູນດ້ວຍວິທີທີ່ແຕກຕ່າງກັນ ຂຶ້ນກັບວິທີການຮຽນຂອງເຂົາເຈົ້າ. ວິທີການຮຽນອາດອາໄສການເບິ່ງຮູບພາບປະຈັກຕາ, ການຟັງ ຫຼື ການສຳຜັດ. ສິ່ງນີ້ມັນໄດ້ສະແດງໃຫ້ເຫັນວ່າພວກເຮົາຈຳເປັນຕ້ອງນຳໃຊ້ວິທີການສອນທີ່ຫຼາກຫຼາຍ ເພື່ອຮັບຮອງວິທີການຮຽນທີ່ແຕກຕ່າງກັນ ໂດຍມີເປົ້າໝາຍໃຫ້ນັກຮຽນສາມາດຮັບເອົາຂໍ້ມູນໄດ້ຢ່າງເຕັມສ່ວນ ແລະ ນຳເອົາຂໍ້ມູນທີ່ໄດ້ໄປໃຊ້ຢ່າງມີປະສິດທິພາບ ອັນຈະນຳໄປສູ່ການປ່ຽນແປງພຶດຕິກຳ. ເມື່ອປະສາດສຳຜັດໄດ້ຮັບການກະຕຸ້ນຫຼາຍເທົ່າໃດ, ຜູ້ຮຽນກໍ່ຮຽນໄດ້ຫຼາຍເທົ່ານັ້ນ. ໝາຍຄວາມວ່າຖ້ານັກຮຽນໄດ້ເຫັນ, ໄດ້ຍິນ, ໄດ້ສຳຜັດ ຫຼື ແມ່ນແຕ່ໄດ້ດົມກິ່ນໃນສິ່ງທີ່ພວກເຮົາສາທິດ ໃຫ້ເຂົາເຈົ້າເບິ່ງກໍ່ຍິ່ງຈະເຮັດໃຫ້ການຮັບເອົາຂໍ້ມູນຂອງເຂົາເຈົ້າມີປະສິດທິພາບເທົ່ານັ້ນ. ທ່ານສາມາດຮ້ອງເພງ ຫຼື ເຕັ້ນລຳ ເພື່ອປະກອບການສອນ. ການຕັດສິນໃຈແມ່ນຂຶ້ນກັບທ່ານເອງຕາມສະພາບຄວາມເປັນຈິງຂອງຫ້ອງຮຽນ. (ກົມມັດທະຍົມສຶກສາ; ປີ 2010; ໜ້າ 47)

2. ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບຫຼິ້ນເກມ; ວິທີສອນແບບສືບສວນຊອກຫາຄວາມຮູ້; ວິທີສອນແບບປະຕິບັດໂຄງການ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມມີການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບປະຕິບັດໂຄງການ; ວິທີສອນແບບສືບສວນຊອກຫາຄວາມຮູ້ ແລະ ຄູຊັ້ນມັດທະຍົມມີການນຳໃຊ້ວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບປານກາງ ມີວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບຫຼິ້ນເກມ; ວິທີສອນແບບເລົ່າເລື່ອງ; ວິທີສອນແບບສືບສວນຊອກຫາຄວາມຮູ້; ວິທີສອນແບບດາວ 5 ແຈ. ເນື່ອງຈາກວ່າ ວິທີການສອນ, ຄູຕ້ອງນ□າໃຊ້ຫຼາຍວິທີປະສົມປະສານກັນໄປຕາມຄວາມເໝາະສົມຂອງເນື້ອໃນແຕ່ລະບົດ ແລະ ເງື່ອນໄຂຂອງແຕ່ລະໂຮງຮຽນ ທັງນີ້ກໍ່ເພື່ອໃຫ້ການຮຽນການສອນບັນລຸຕາມຈຸດໝາຍຂອງຫຼັກສູດເປັນຢ່າງດີ. ນອກຈາກນັ້ນ, ກໍ່ນຳໃຊ້ການສອນແບບດາວຫ້າແຈ ເຊັ່ນ: ການຮຽນຮູ້ຈາກການເຮັດກິດຈະກຳ, ການສອນດ້ວຍການຕັ້ງຄຳຖາມ ຫຼື ຕັ້ງບັນຫາ, ການສອນດ້ວຍການນຳໃຊ້ຮູບພາບປະກອບ, ການສອນເປັນກຸ່ມ ແລະ ການສອນທີ່ຕິດພັນກັບຊີວິດປະຈຳວັນ. (ກະຊວງສຶກສາທິການ ແລະ ກະລາ; ປີ 2010; ໜ້າ 16) ແລະ ສອດຄ່ອງກັບ ກົມສາມັນສຶກສາ ທີ່ກ່າວໄວ້ວ່າ ການນ□າໃຊ້ວິທີກາຮຽນການສອນມີຈຸດປະສົງ ເພື່ອບັນລຸເປົ້າໝາຍຂອງການຮຽນ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງບໍ່ຮັບປະກັນໄດ້ວ່າ ຈະໄດ້ຮັບຜົນແບບດຽວກັນ. ຍ້ອນວ່ານັກຮຽນແຕ່ລະຄົນມີວິທີການຮຽນຂອງໃຜລາວ; ບາງຄົນກໍ່ຮຽນໄດ້ໄວ, ບາງຄົນກໍ່ຮຽນຊ້າ. ເຖິງຢ່າງໃດກໍ່ຕາມ ການທີ່ຈະສອນໃຫ້ມີປະສິດທິຜົນໄດ້ນັ້ນ, ຄູຕ້ອງຮູ້ວ່ານັກຮຽນຂອງຕົນມີວິທີການຮຽນຄືແນວໃດ, ນັກຮຽນມີຄວາມເຂົ້າໃຈຄືແນວໃດກ່ຽວກັບການຮຽນ. ສະນັ້ນ, ຄູຕ້ອງເນັ້ນໃສ່ການສອນແບບເອົານັກຮຽນມີສ່ວນຮ່ວມແທນການປ້ອນຄວາມຮູ້ໃຫ້ນັກຮຽນ. (ກົມສາມັນສຶກສາ; ປີ 2010; ໜ້າ 49)

3. ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບດາວ 5 ແຈ; ວິທີສອນແບບສາທິດ; ວິທີສອນແບບແກ້ບັນຫາ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມ ມີຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບໃຊ້ຂະບວນການປະເຊີນສະຖານະການ; ວິທີສອນແບບສືບສວນຊອກຫາຄວາມຮູ້; ວິທີສອນແບບດາວ 5 ແຈ; ວິທີສອນແບບປະຕິບັດໂຄງການ ແລະ ຄູຊັ້ນມັດທະຍົມ ມີຄວາມຕ້ອງການຝຶກອົບຮົມວິທີການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ ມີວິທີສອນແບບປະຕິບັດຕົວຈິງ; ວິທີສອນແບບດາວ 5 ແຈ; ວິທີສອນແບບສາທິດ; ວິທີສອນແບບແກ້ບັນຫາ. ເນື່ອງຈາກວ່າ ການປະເມີນຄວາມຕ້ອງການຝຶກອົບຮົມເປັນຂະບວນການສຳຫຼວດເພື່ອກຳນົດຊ່ອງຫວ່າງລະຫວ່າງຄວາມຮູ້, ຄວາມສາມາດ, ແລະ ທັດສະນະຄະຕິຂອງບຸກຄະລາ

ກອນທີ່ປະຕິບັດງານຢູ່ກັບຄວາມຮູ້, ຄວາມສາມາດ ແລະ ທັດສະນະຄະຕິທີ່ອີງການຕ້ອງການຕາມຕໍາແໜ່ງງານ ແລະ ຕາມມາດຖານບຸກຄະລາກອນທີ່ກໍານົດໄວ້. ຫຼັງຈາກກໍານົດຊ່ອງຫວ່າງແລ້ວ ຈຶ່ງສ້າງແຜນງານຝຶກອົບຮົມໃຫ້ແຕ່ລະຂັ້ນ ແລະ ແຕ່ລະຂົງເຂດໜ້າທີ່ວຽກງານ ໂດຍອີງໃສ່ຄວາມຮຽກຮ້ອງຝຶກອົບຮົມຂອງບຸກຄະລາກອນ ແລະ ຄວາມຕ້ອງການຂອງອົງການເອງ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2004; ໜ້າ 64) ພະນັກງານ-ລັດຖະກອນທຸກຄົນຕ້ອງໄດ້ຮັບການຝຶກອົບຮົມ ຊຶ່ງແມ່ນຂະບວນການຮຽນຮູ້ຢ່າງເປັນລະບົບ ເພື່ອບໍາລຸງ ຫຼື ຍົກລະບັບຄວາມຮູ້, ຄວາມສາມາດ ແລະ ທັດສະນະຄະຕິຂອງຕົນແນໃສ່ຊ່ວຍປັບປຸງໃຫ້ການປະຕິບັດໜ້າທີ່ວຽກງານ ມີປະສິດທິພາບສູງຂຶ້ນ. (ສະພາແຫ່ງຊາດ; ປີ 25015; ໜ້າ 13)

## II. ການປະຕິບັດຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

1. ການກະກຽມຄວາມພ້ອມຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້ ແລະ ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມ ແລະ ຄູຊັ້ນມັດທະຍົມມີການກະກຽມຄວາມພ້ອມ ຢູ່ໃນລະດັບຫຼາຍ ມີທ່ານໄດ້ສຶກສາຂໍ້ມູນຈາກຫຼາຍແຫຼ່ງຄວາມຮູ້; ທ່ານໄດ້ກະກຽມສື່ ຫຼື ອຸປະກອນການສອນກ່ອນຂຶ້ນຫ້ອງສອນ. ເນື່ອງຈາກວ່າ ການກະກຽມເນື້ອໃນການຮຽນ ແລະ ອົງປະກອບອື່ນໆ ທີ່ເອື້ອອໍານວຍຕໍ່ການຮຽນ, ຄູຜູ້ສອນຕ້ອງສຶກສາຫຼັກສູດ ແລະ ຈຸດປະສົງຂອງການຮຽນ ເພື່ອໃຫ້ເຂົ້າໃຈວ່າ ຫຼັກສູດຕ້ອງການຫຍັງ, ມີຈຸດປະສົງແນວໃດ ແລະ ເປັນຫຍັງຈຶ່ງຕ້ອງການແບບນັ້ນ ເພື່ອເປັນຂໍ້ມູນໃນການວາງແຜນການຮຽນການສອນ. ການວາງແຜນຈັດຂະບວນການຮຽນ ຄວນໃຫ້ມີຄວາມຕໍ່ເນື່ອງເຊື່ອມໂຍງກັນ ແລະ ຫາກເປັນໄປໄດ້ຄວນຈັດໃຫ້ມີຄວາມເຊື່ອມໂຍງ ແລະ ບູລະນາການແຕ່ລະສາຂາວິຊາທີ່ສໍາພັນກັນເຂົ້ານໍາກັນ ເພື່ອຊ່ວຍໃຫ້ການຈັດການຮຽນໄດ້ສອດຄ່ອງກັບວິຖີຊີວິດຈິງ ແລະ ໃຫ້ຜູ້ຮຽນຈາກປະສົບການຈິງໃຫ້ຫຼາຍທີ່ສຸດ ທັງນີ້ຄູຕ້ອງເປີດໂອກາດໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນການກໍານົດກິດຈະກໍາການຮຽນ ຕາມຄວາມສົນໃຈ ແລະ ຄວາມຖະນັດອີກດ້ວຍ. (ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ; ປີ 2019; ໜ້າ 11)
2. ສື່ການຮຽນການສອນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນໍາໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ ແລະ ທ່ານມີສື່ການຮຽນການສອນພຽງພໍ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມມີການປະຕິບັດສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນໍາໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ; ທ່ານມີສື່ການຮຽນການສອນພຽງພໍ ແລະ ຄູຊັ້ນມັດທະຍົມມີການປະຕິບັດສື່ການຮຽນການສອນ ຢູ່ໃນລະດັບປານກາງ ມີທ່ານໄດ້ນໍາໃຊ້ເຕັກໂນໂລຊີເຂົ້າມາຊ່ວຍໃນການສອນ; ທ່ານມີສື່ການຮຽນການສອນພຽງພໍ; ທ່ານໄດ້ແລກປ່ຽນ, ເຜີຍແຜ່ການຜະລິດ ແລະ ນໍາໃຊ້ສື່ການຮຽນການສອນ. ເນື່ອງຈາກວ່າ ສື່ ຫຼື ອຸປະກອນການຮຽນການສອນເປັນວັດຖຸປະຈັກຕາທີ່ຄູສອນກຽມໄວ້ໃຫ້ນັກຮຽນໄດ້ນໍາໃຊ້ໃນເວລາປະຕິບັດກິດຈະກໍາການຮຽນ ເພື່ອໃຫ້ນັກຮຽນເຂົ້າໃຈໄວ, ເຂົ້າໃຈງ່າຍ, ຈື່ໄດ້ດົນ, ມີຄວາມສົນໃຈໃນການຮຽນຫຼາຍຂຶ້ນ, ໄດ້ຄວາມຮູ້ເລິກເຊິ່ງ, ສາມາດຮັບເອົາຄວາມຮູ້ໂດຍຜ່ານອິນຊີທັງ 5 (ການຟັງ, ການເບິ່ງ, ການຈັບບາຍ, ການດົມກິ່ນ ແລະ ການຊີມລົດ), ເປັນໃຈກາງໃນການຮຽນຮູ້, ຮູ້ຄິດເປັນ, ເຮັດເປັນ, ແລະ ແກ້ໄຂບັນຫາໄດ້ ພ້ອມທັງຍັງເປັນການຫຼຸດຜ່ອນການບັນຍາຍຂອງຄູ ແລະ ເຮັດໃຫ້ການຮຽນການສອນມີບັນຍາກາດ. (ກະຊວງສຶກສາທິການ ແລະ ກິລາ; ປີ 2010; ໜ້າ 22)
3. ການປະຕິບັດການສອນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການສອນ ຢູ່ໃນລະດັບປານກາງ ມີທ່ານມີການຈັດກິດຈະກໍາການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ; ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນມັດທະຍົມມີການປະຕິບັດການສອນ ຢູ່ໃນລະດັບປານກາງ ມີທ່ານມີການຈັດກິດຈະກໍາການຮຽນການສອນຢູ່ນອກຫ້ອງຮຽນ ຕາມເງື່ອນໄຂຕົວຈິງຂອງຊຸມຊົນ ແລະ ທ້ອງຖິ່ນ ແລະ ທ່ານມີການນໍາເອົາສະພາບຄວາມເປັນຈິງຂອງທ້ອງຖິ່ນ (ຫຼັກສູດທ້ອງຖິ່ນ) ເຂົ້າໃນການຈັດການຮຽນການສອນ. ເນື່ອງຈາກວ່າ ການສອນ

ແມ່ນວິທີການຂອງຄູແຕ່ລະຄົນ ທີ່ມີຈຸດປະສົງໃນການຖ່າຍທອດ ຂໍ້ມູນໃນຮູບແບບທີ່ສາມາດເຂົ້າໃຈໄດ້, ໜ້າສົນໃຈ ແລະ ສາມາດນຳໄປໃຊ້ໃນຊີວິດປະຈຳວັນໄດ້. ເພື່ອໃຫ້ເກີດຂະບວນການຮຽນທີ່ດີ. ຄູທີ່ດີຕ້ອງເປັນນັກສະແດງທີ່ດີ ແລະ ນັກສະແດງທີ່ດີຕ້ອງສາມາດສື່ສານໄດ້ດີ ດ້ວຍການປັບສຽງເວົ້າໃຫ້ເໝາະສົມ ແລະ ສ້າງສິ່ງແວດລ້ອມທີ່ໜ້າສົນໃຈສຳລັບນັກຮຽນ ເພື່ອກະຕຸ້ນໃຫ້ນັກຮຽນມີຄວາມສົນໃຈຢາກຮຽນ, ແຕ່ຄູກໍຕ້ອງຮູ້ວ່າ: ກຳລັງເວົ້າກັບໃຜ, ນັກຮຽນຂອງຕົນຮຽນຄືແນວໃດ ຫຼື ຮູບແບບການສອນແບບໃດທີ່ເໝາະສົມກັບນັກຮຽນ. (ກະຊວງສຶກສາທິການ ແລະ ກິລາ; ປີ 2014; ໜ້າ 21)

4. ການພັດທະນາຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການພັດທະນາ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ; ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ; ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ຫ້ອງການສຶກສາທິການ ແລະ ກິລາ ເມືອງ (ນະຄອນ), ພະແນກສຶກສາທິການ ແລະ ກິລາ ແຂວງ(ນະຄອນຫຼວງ) ແລະ ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນມັດທະຍົມມີການພັດທະນາ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນ; ທ່ານໄດ້ຮັບການແລກປ່ຽນບົດຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງກັບພາກສ່ວນອື່ນໆ; ທ່ານໄດ້ຮັບການນິເທດກ່ຽວກັບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກນິເທດ ພະແນກສຶກສາທິການ ແລະ ກິລາ ແຂວງ(ນະຄອນຫຼວງ) ແລະ ທ່ານໄດ້ຮັບການຝຶກອົບຮົມຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງ. ເນື່ອງຈາກວ່າ ການພັດທະນາບຸກຄະລາກອນ ແມ່ນແນວຄວາມຄິດທີ່ນຳມາປະຕິບັດໃນອົງການ (ພາກລັດ ແລະ ພາກເອກະຊົນ) ແລະ ທີ່ກຳນົດການຮຽນຮູ້ເປັນລະບົບຕໍ່ເນື່ອງ, ຕາມຮູບແບບຕ່າງໆ ເພື່ອປັບປຸງປະສິດທິພາບຂອງງານ, ເພື່ອສົ່ງເສີມຄວາມກ້າວໜ້າຂອງບຸກຄະລາກອນ ແລະ ເພື່ອປະສິດທິຜົນຂອງອົງການ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2004; ໜ້າ 65-66)

5. ການວັດ ແລະ ປະເມີນຜົນຂອງການປະຕິບັດຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ການວັດ ແລະ ປະເມີນຜົນ ຢູ່ໃນລະດັບຫຼາຍ ມີທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ ແລະ ທ່ານໄດ້ເກັບລວບລວມຜົນງານຂອງນັກຮຽນ (ແຟ້ມສະສົມຜົນງານ). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນມັດທະຍົມມີການວັດ ແລະ ປະເມີນຜົນ ຢູ່ໃນລະດັບປານກາງ ມີທ່ານໄດ້ຮັບການປະເມີນຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຈາກຜູ້ບໍລິຫານໂຮງຮຽນ. ເນື່ອງຈາກວ່າ ການວັດ ແລະ ປະເມີນຜົນການຮຍນທີ່ເນັ້ນນັກຮຽນເປັນໃຈກາງຈະຕ້ອງວັດ ແລະ ປະເມີນໃຫ້ຄອບຄຸມທຸກດ້ານທັງໃນສ່ວນຂອງຂະບວນການ ແລະ ຜົນງານ, ທັງທາງດ້ານຄວາມຮູ້, ດ້ານຄວາມຮູ້ສຶກ ແລະ ທັກສະການສະແດງອອກທຸກດ້ານ, ມີການວັດຜົນຕາມສະພາບຈິງ ໂດຍເນັ້ນການວັດຈາກການປະຕິບັດ, ແຟ້ມສະສົມຜົນງານ ຊຶ່ງໃນການປະເມີນຜົນສາມາດປະເມີນລະຫວ່າງການຮຽນການສອນ ແລະ ປະເມີນສະຫຼຸບລວມ. (ກະຊວງສຶກສາທິການ ແລະ ກິລາ; ປີ 2019; ໜ້າ 13) ວິທີການ ຫຼື ເຄື່ອງມືທີ່ໃຊ້ໃນການວັດຜົນທາງດ້ານການສຶກສາໃນປະຈຸບັນມີຫຼາຍວິທີ, ແຕ່ລະວິທີສາມາດນຳໄປໃຊ້ວັດສະເພາະແຕ່ລະດ້ານ. ດັ່ງນັ້ນ, ຜູ້ໃຊ້ຄວນເລືອກໃຊ້ໃຫ້ເໝາະສົມກັບໂອກາດ ແລະ ສະຖານະການ. (ຄະນະສຶກສາສາດ; ປີ 2006; ໜ້າ 11)

## III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແນວທາງພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ

1. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ; ຕໍ່ມາແມ່ນ

ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ແລະ ສຸດທ້າຍແມ່ນນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມມີຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນ ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ; ຕໍ່ມາແມ່ນເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ, ມີຄວາມເອົາໃຈໃສ່ຕໍ່ການຮຽນ-ການສອນແລະ ເກີດຄວາມສົນໃຈ; ສຸດທ້າຍແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ (ຜົນການຮຽນຂອງນັກຮຽນດີຂຶ້ນ) ແລະ ຄູຊັ້ນມັດທະຍົມມີຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນນັກຮຽນມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ຮອງລົງມາແມ່ນນັກຮຽນສະແດງຄວາມຮູ້ຄວາມສາມາດຫຼາຍຂຶ້ນ, ກ້າສະແດງອອກ, ຜົນການຮຽນຂອງນັກຮຽນດີຂຶ້ນ; ຕໍ່ມາແມ່ນນັກຮຽນເຂົ້າໃຈງ່າຍ (ຈື່ງ່າຍ); ສຸດທ້າຍແມ່ນນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ. ເນື່ອງຈາກວ່າ ຄູເປັນບຸກຄົນທີ່ສຳຄັນໃນການຈັດກິດຈະກຳການຮຽນ ໂດຍສົ່ງເສີມໃຫ້ນັກຮຽນສາມາດພັດທະນາຕາມທຳມະຊາດ ແລະ ເຕັມຕາມສັກກະຍະພາບ ເນັ້ນການຈັດກິດຈະກຳ ແລະ ສ້າງບັນຍາກາດທີ່ສອດຄ່ອງກັບການດຳລົງຊີວິດ ໂດຍໃຊ້ສື່ທີ່ຫຼາກຫຼາຍທີ່ເໝາະສົມກັບຄວາມສາມາດໃນການຮຽນ ແລະ ຄວາມສົນໃຈຂອງນັກຮຽນ, ຄຳນຶງເຖິງການໃຊ້ສະໝອງທຸກສ່ວນ ໂດຍໃຫ້ຜູ້ຮຽນມີສ່ວນຮ່ວມສະເໜີກິດຈະກຳ ແລະ ລົງມືປະຕິບັດຕົວຈິງທຸກຂັ້ນຕອນ, ສະຫຼຸບຄວາມຮູ້ດ້ວຍຕົນເອງ, ພ້ອມທັງໃຫ້ນັກຮຽນມີປະຕິສຳພັນທັງສະມາຊິກພາຍໃນກຸ່ມ ແລະ ສະມາຊິກລະຫວ່າງກຸ່ມ ເພື່ອໃຫ້ນັກຮຽນໄດ້ຮູ້ວິທີການສະແຫວງຫາຄວາມຮູ້. (ກະຊວງສຶກສາທິການ ແລະ ກິລາ; ປີ 2019; ໜ້າ 12)

2. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ) ; ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອັ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ; ສຸດທ້າຍແມ່ນການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີຄວາມອິນແຊວ, ຍາດກັນເຮັດກິດຈະກຳ, ບໍ່ຮ່ວມມືກັບໝູ່). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມມີຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ(ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອັ້ຍອີງໃສ່ໝູ່), ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ; ສຸດທ້າຍແມ່ນເວລາໃນການສອນບໍ່ພໍ (ສອນຊ້າລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ), ບົດຮຽນບາງວິຊາຫຼາຍ ແລະ ຄູຊັ້ນມັດທະຍົມມີຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຮອງລົງມາແມ່ນນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ຕໍ່ມາແມ່ນລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອັ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຄິດໄລ່ເລກ; ສຸດທ້າຍແມ່ນການຄວບຄຸມຫ້ອງຍາກ (ການຈັດຈຸ/ກຸ່ມ, ມີ

ຄວາມອິນແຊວ, ຍາດກັນເຮັດກິດຈະກຳ, ບໍ່ຮ່ວມມືກັບໝູ່). ເນື່ອງຈາກວ່າ ການລົງຊຸກຍູ້ ແລະ ຊ່ວຍເຫຼືອຂອງຄູສຶກສານິເທດ ຍັງບໍ່ໄດ້ຈັດຕັ້ງປະຕິບັດເປັນລະບົບ ແລະ ຕໍ່ເນື່ອງ; ເນື້ອໃນຫຼັກສູດແອອັດ; ຄູສອນຈຳນວນໜຶ່ງຍັງບໍ່ທັນເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນເອງເປັນຕົ້ນແມ່ນການສຶກສາອົບຮົມນັກຮຽນ, ການສິດສອນ, ບໍ່ປະຕິບັດປະຕິທິນການສຶກສາ ແລະ ເວລາທີ່ຫຼັກສູດກຳນົດໄວ້; ຄູສອນວິທະຍາສາດທຳມະຊາດ ແລະ ຄອມພິວເຕີບໍ່ໄດ້ນຳພານັກຮຽນນຳໃຊ້ເຄື່ອງທົດລອງ ແລະ ຄອມພິວເຕີ; ຄູສອນຈຳນວນໜຶ່ງບໍ່ຖືກຕາມວຸດທິ ແລະ ວິຊາສະເພາະ; ຄູສອນຂາດເຕັກນິກການຮຽນການສອນ, ບໍ່ນຳໃຊ້ຮູບແບບການສອນທີ່ຫຼາກຫຼາຍ; ຂາດຄູສອນໃນບາງວິຊາ ເຊັ່ນ: ວິຊາພື້ນຖານວິຊາຊີບ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ພະລະສຶກສາ, ສິລະປະ, ວິທະຍາສາດທຳມະຊາດ, ພາສາອັງກິດ; ມີຫຼາຍໂຮງຮຽນທີ່ຍັງຂາດອຸປະກອນຮັບໃຊ້ການຮຽນການສອນທາງດ້ານວິທະຍາສາດ (ຫ້ອງທົດລອງ, ອຸປະກອນທົດລອງ ແລະ ຄອມພິວເຕີ); ການລົງຕິດຕາມ, ຊຸກຍູ້ການຮຽນການສອນຍັງບໍ່ເປັນປົກກະຕິ ແລະ ບໍ່ທົ່ວເຖິງ. (ກະຊວງສຶກສາທິການ ແລະ ກິລາ; ປີ 2019; ໜ້າ 3-6)

3. ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ ພົບວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຮອງລົງມາແມ່ນຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ສຸດທ້າຍແມ່ນຫ້ອງຮຽນຕ້ອງພຽງພໍກັບນັກຮຽນອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກຳນົດຈັດຫ້ອງຮຽນ(ກຸ່ມຄົ້ນຄວ້າ)ຕາມຄວາມເໝາະສົມ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຄູຊັ້ນປະຖົມມີວ່າ ແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ອັນດັບໜຶ່ງແມ່ນຄູຕ້ອງຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ); ຮອງລົງມາແມ່ນຄູຕ້ອງຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຄູຕ້ອງນຳພາສ້າງກິດຈະກຳໃຫ້ລະອຽດ ແລະ ຫຼາຍກວ່າເກົ່າ (ຮ້ອງເພງ,ເລົ່ານິທານ, ຫຼິ້ນເກມ) ເຕັກນິກການຕັ້ງຄຳຖາມໃຫ້ສອດຄ່ອງກັບບົດຮຽນ, ວາງກົດລະບຽບ,ກະຕິກາໃນຫ້ອງ ແລະ ໃຫ້ເວລານັກຮຽນໃນເວລາເຮັດກິດຈະກຳ; ສຸດທ້າຍແມ່ນຄູຕ້ອງຊອກຮູ້ຮ່ຳຮຽນເພື່ອໃຫ້ທັນກັບສະພາບໃນປັດຈຸບັນ ແລະ ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ) ແລະ ຄູຊັ້ນມັດທະຍົມມີແນວທາງພັດທະນາໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ມີອັນດັບໜຶ່ງແມ່ນຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປຶ້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຮອງລົງມາແມ່ນຕ້ອງເໜັ້ນໜັກເປັນພິເສດ(ອະທິບາຍເພີ່ມເຕີມ) ຕໍ່ນັກຮຽນຜູ້ທີ່ບໍ່ສົນໃຈ ຫຼື ບໍ່ເອົາໃຈໃສ່ຕໍ່ການຮຽນ, ຕິດຕາມບຸກຄົນທີ່ອ່ອນຢ່າງໃກ້ສິດ, ກວດສອບຄວາມເຂົ້າໃຈຂອງນັກຮຽນ; ຕໍ່ມາແມ່ນຫ້ອງຮຽນຕ້ອງພຽງພໍກັບນັກຮຽນອັດຕານັກຮຽນຕໍ່ຫ້ອງໃຫ້ຖືກຕາມມາດຕະຖານທີ່ກຳນົດຈັດຫ້ອງຮຽນ (ແບ່ງກຸ່ມຄົ້ນຄວ້າ) ຕາມຄວາມເໝາະສົມ; ສຸດທ້າຍແມ່ນຝຶກອົບຮົມຄູໃຫ້ຫຼາຍຂຶ້ນ. ເນື່ອງຈາກວ່າ ການຝຶກອົບຮົມ ແມ່ນຂະບວນການຮຽນຮູ້ ແລະ ຍົກລະດັບ ໃນໄລຍະສັ້ນຢ່າງເປັນລະບົບ ໂດຍພື້ນຖານ ເພື່ອເພີ່ມເຕີມຄວາມຮູ້, ຄວາມສາມາດ ແລະ ທັດສະນະຄະຕິຂອງພະນັກງານ-ລັດຖະກອນ ແນໃສ່ປັບປຸງການປະຕິບັດໜ້າວຽກງານໃຫ້ມີປະສິດທິພາບສູງຂຶ້ນ. ການພັດທະນາແມ່ນຂະບວນການຮຽນຮູ້ ແລະ ຍົກລະດັບຢ່າງເປັນລະບົບ ແລະ ຕໍ່ເນື່ອງທັງໄລຍະສັ້ນ ແລະ ໄລຍະຍາວ ເພື່ອໃຫ້ພະນັກງານ-ລັດຖະກອນ ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້ດ້ານການເມືອງ, ການປົກຄອງ, ຄວາມຮູ້ດ້ານວິທະຍາສາດ, ວິທະຍາການ, ວິຊາສະເພາະ ແລະ ພາສາຕ່າງປະເທດ ຮັບປະກັນການປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິພາບ. (ລັດຖະບານ; ປີ 2017; ໜ້າ 1)

**IV. ການສຳພາດຜູ້ບໍລິຫານໂຮງຮຽນກ່ຽວກັບຮູບແບບການສອນທີ່ເນັ້ນນັກຮຽນເປັນໃຈກາງຂອງຄູໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມໃນທົ່ວປະເທດ**

1. ຜູ້ບໍລິຫານໂຮງຮຽນຈັດຕັ້ງເຜີຍແຜ່ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມິນາ 2019 ພົບວ່າ ໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ. ເມື່ອພິຈາລະນາເປັນຂັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຂັ້ນປະຖົມ ແລະ ຜູ້ບໍລິຫານໂຮງຮຽນຂັ້ນມັດທະຍົມໄດ້ຮັບ,ໄດ້ເຜີຍແຜ່ ແລະ ໄດ້ປະຖົມນິເທດພາຍໃນໂຮງຮຽນ (ເຜີຍແຜ່ຕອນເປີດສົກຮຽນໃໝ່, ໃນເວລາລວມຄູກ່ອນໄຂພາກຮຽນທີ 2, ໃນໄລຍະການຈັດການຮຽນການສອນ ແລະ ໃນເວລາລວມສະພາຄູ. ເນື່ອງຈາກວ່າ ຜູ້ອຳນວຍການໂຮງຮຽນມີໜ້າທີ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ລະບຽບ ແລະ ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ເມືອງໃຫ້ປະກົດຜົນເປັນຈິງ. (ກົມມັດທະຍົມສຶກສາ; ປີ 2013; ໜ້າ 18)
2. ຜູ້ບໍລິຫານໂຮງຮຽນໄດ້ມີແຜນການສົ່ງເສີມຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ(ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ); ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ); ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ); ມີການແຕ່ງຕັ້ງ ແລະມອບໝາຍໜ້າທີ່ຮັບຜິດຊອບຂອງຄູ ແລະ ແລກປ່ຽນບົດຮຽນກັບຜູ້ໄດ້ຜ່ານການຝຶກອົບຮົມ, ລວມຄູເພື່ອແລກປ່ຽນຖອດຖອນບົດຮຽນ, ລະຫວ່າງກຸ່ມໂຮງຮຽນ (ພາຍໃນໂຮງຮຽນ). ເມື່ອພິຈາລະນາເປັນຂັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຂັ້ນປະຖົມ ແລະ ຜູ້ບໍລິຫານໂຮງຮຽນຂັ້ນມັດທະຍົມມີການໃຊ້ງົບປະມານຂອງໂຮງຮຽນຊື້ອຸປະກອນ (ສະໜອງສື່ການສອນໃຫ້ຄູອາຈານຕາມຂີດຄວາມສາມາດ); ສົ່ງເສີມ, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມໂມງສອນຂອງຄູ (ນິເທດພາຍໃນໂຮງຮຽນ); ສົ່ງຄູໄປຝຶກອົບຮົມນຳຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນຳໃຊ້ງົບປະມານບໍລິຫານໂຮງຮຽນໃນການຝຶກອົບຮົມ (ນິເທດແຂວງລົງຝຶກອົບຮົມໃຫ້, ຂັ້ນເທິງຈັດຂຶ້ນ). ເນື່ອງຈາກວ່າ ໃນປີຜ່ານມາໄດ້ຮັບການຝຶກອົບຮົມການສອນວິຊາຄະນິດສາດຂັ້ນປ.2; ຈັດຕັ້ງປະຕິບັດການນຳໃຊ້ແບບຮຽນ ແລະ ຄູ່ມືຄູ ຕາມຫຼັກສູດໃໝ່ຂັ້ນປະຖົມ ປີທີ 1; ປັບປຸງຫຼັກສູດ, ຄູ່ມືຄູ, ສື່ການຮຽນອື່ນໆສຳລັບທຸກວິຊາ, ການຝຶກອົບຮົມຄູສຶກສານິເທດເພື່ອສະໜັບສະໜູນການສອນຫຼັກສູດໃໝ່; ສະໜອງສິ່ງອຳນວຍຄວາມສະດວກ, ພື້ນຖານໂຄງລ່າງດ້ານສຸຂະອານາໄມ ແລະ ໂພສະນາການໃຫ້ແກ່ໂຮງຮຽນທີ່ມີເງື່ອນໄຂ; ຜະລິດ ແລະ ແຈກຢາຍອຸປະກອນການຮຽນການສອນໃຫ້ແກ່ໂຮງຮຽນ, ປຶ້ມນິທານ, ປຶ້ມອ່ານເສີມສຳລັບພາສາລາວ. ປະຕິບັດໂຄງການບຳລຸງພາສາອັງກິດ ແບບເລັ່ງລັດໃຫ້ແກ່ຄູໃນໂຮງຮຽນມັດທະຍົມສຶກສາ; ຝຶກອົບຮົມ ແລະ ປະເມີນສ້າງຄູສຶກສານິເທດທົດແທນ; ຝຶກອົບຮົມການນຳໃຊ້ເຄື່ອງທົດລອງວິທະຍາສາດທຳມະຊາດ; ສະໜອງອຸປະກອນສິລະປະດົນຕີພື້ນເມືອງ, ວິຊາເລຂາຄະນິດ, ວິຊາພະລະສຶກສາ. (ກະຊວງສຶກສາທິການ ແລະ ກິລາ; ປີ 2020; ໜ້າ 3-6)
3. ຄູສອນມີຄວາມຮູ້ຄວາມເຂົ້າໃຈຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ); ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ ແລະ ຄູໃຫ້ກິດຈະກຳ, ຕັ້ງຄຳຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນຳການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ. ເມື່ອພິຈາລະນາເປັນຂັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຂັ້ນປະຖົມສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ); ຈັດນັກຮຽນເປັນກຸ່ມ ໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ ແລະ ຄູໃຫ້ກິດຈະກຳ, ຕັ້ງຄຳຖາມສົນທະນາຖາມ-ຕອບກັບນັກຮຽນ ແລ້ວຄູເປັນຜູ້ແນະນຳການປະຕິບັດຂອງນັກຮຽນ ແລະ ສະຫຼຸບບົດຮຽນ ແລະ ຜູ້ບໍລິຫານໂຮງຮຽນຂັ້ນມັດທະຍົມສ່ວນໃຫຍ່ມີຄວາມເຂົ້າໃຈ, ໄດ້ຝຶກອົບຮົມມາ (ຜ່ານໂຮງຮຽນສ້າງຄູ). ເນື່ອງຈາກວ່າ ວິທີການສອນແບບເອົານັກຮຽນ

ເປັນໃຈກາງ ແມ່ນນັກຮຽນເປັນເຈົ້າການໃນການເປັນຜູ້ຄົ້ນພົບ ຫຼື ສ້າງຄວາມຮູ້, ໂດຍໜ້າທີ່ຂອງຄູແມ່ນພຽງແຕ່ອອກແບບການຮຽນການສອນທີ່ເໝາະສົມສໍາລັບນັກຮຽນ. ນັກຮຽນເຮັດວຽກຮ່ວມກັບຄູ ເພື່ອສ້າງຂະບວນການຮຽນຮູ້ໃຫ້ເກີດຂຶ້ນ. (ກະຊວງສຶກສາທິການ ແລະ ກິລາ; ປີ 2014; ໜ້າ 29)

4. ຄູສອນມີວິທີການສອນເຂົ້າໃນການຈັດການຮຽນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຕັ້ງຄໍາຖາມ, ນັກຮຽນລາຍງານ; ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ; ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ) ແລະ ໃຫ້ນັກຮຽນປະຕິບັດຕົວຈິງ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມໃຊ້ກິດຈະກໍາເປັນລາຍບຸກຄົນ, ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ; ຕັ້ງຄໍາຖາມ,ນັກຮຽນລາຍງານ; ສະແດງອຸປະກອນ/ສື່ (ຮູບພາບ)ໃຫ້ນັກຮຽນເບິ່ງ ແລະ ສົນທະນາແລກປ່ຽນບົດຮຽນກັບຄູ ແລະ ສະຫຼັບນັກຮຽນອ່ອນແລະເກັ່ງປົນກັນ (ຜູ້ຮຽນເກັ່ງສອນຊ່ວຍຄູ) ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມໃຊ້ກິດຈະກໍາເປັນລາຍບຸກຄົນ ແລະ ເປັນກຸ່ມ (ຕາງໜ້າກຸ່ມຂຶ້ນມາຕອບ); ຕັ້ງຄໍາຖາມ, ນັກຮຽນລາຍງານ; ຄູເປັນຜູ້ແນະນໍາ, ຕິດຕາມ,ສະຫຼຸບ; ນັກຮຽນມີສ່ວນຮ່ວມ, ຄົ້ນຄວ້າຮ່ວມກັນ (ດ້ວຍຕົວເອງ). ເນື່ອງຈາກວ່າ ໃນຂະບວນການຮຽນການສອນຄູຈະຕ້ອງໄດ້ເນັ້ນໃສ່ການຮຽນຂອງນັກຮຽນຫຼາຍກວ່າການສອນ ໂດຍກົງກັນຄວາມໝາຍວ່າ ຄູຈະຕ້ອງຊ່ວຍນັກຮຽນ ຮຽນຮູ້, ຊ່ວຍນັກຮຽນໃຫ້ເຫັນບັນຫາ ແລະ ແກ້ໄຂບັນຫາດ້ວຍຕົວເອງໃຫ້ຫຼາຍ ແທນທີ່ຈະໃຫ້ຄໍາຕອບສໍາເລັດຮູບແກ່ນັກຮຽນໂດຍກົງ. ຕາມວິທີນີ້, ກິດຈະກໍາການຮຽນການສອນກໍ່ຈະຕ້ອງປິ່ນອ້ອມຂ້າງນັກຮຽນ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2004; ໜ້າ 75)

5. ຜູ້ບໍລິຫານໂຮງຮຽນມີການຕິດຕາມ ແລະ ປະເມີນຜົນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ, ເອົາໃຈໃສ່ໃນການຮຽນ, ຫ້າວຫັນ,ກ້າຫານ, ກ້າສະແດງອອກ, ຢາກຮຽນ); ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ; ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນໍາໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ ແລະ ຖອດຖອນບົດຮຽນຮ່ວມກັນກັບຄູສອນ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ,ເອົາໃຈໃສ່ໃນການຮຽນ, ຫ້າວຫັນ. ມີຄວາມກ້າຫານ, ກ້າສະແດງອອກ,ຢາກຮຽນ; ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ ແລະ ມອບໃຫ້ຜູ້ຮອງ ຫຼື ວິຊາການເກັບຂໍ້ມູນການສອນຂອງຄູແຕ່ລະຊົ່ວໂມງ (ຕິດຕາມກວດກາເວລາຄູຂຶ້ນຫ້ອງ) ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມສັງເກດຕິດຕາມເບິ່ງຜົນການຮຽນ (ຄະແນນກວດກາ,ສອບເສັງ) ຂອງນັກຮຽນ (ຜົນການຮຽນດີຂຶ້ນ,ເອົາໃຈໃສ່ໃນການຮຽນ, ຫ້າວຫັນ, ກ້າຫານ, ກ້າສະແດງອອກ, ຢາກຮຽນ); ໄດ້ສັງເກດ, ເຂົ້າຮ່ວມຊົ່ວໂມງສອນຂອງຄູ (ນິເທດພາຍໃນ) ເພື່ອຕິດຕາມ ແລະ ປັບປຸງການສອນໃຫ້ດີຂຶ້ນ; ກວດກາບົດສອນ ແລະ ແຜນການສອນ (ການຜະລິດສື່ ແລະ ນ□າໃຊ້ສື່) ຂອງຄູແຕ່ລະຄົນ ແຕ່ລະວິຊາສອນ. ເນື່ອງຈາກວ່າ ການວັດ ແລະ ປະເມີນຜົນການຮຽນທີ່ເນັ້ນນັກຮຽນເປັນໃຈກາງຈະຕ້ອງວັດ ແລະ ປະເມີນໃຫ້ຄອບຄຸມທຸກດ້ານທັງໃນສ່ວນຂອງຂະບວນການ ແລະ ຜົນງານ, ທັງທາງດ້ານຄວາມຮູ້, ດ້ານຄວາມຮູ້ສຶກສາ ແລະ ທັກສະການສະແດງອອກທຸກດ້ານ, ມີການວັດຜົນຕາມສະພາບຈິງ ໂດຍເນັ້ນການວັດຈາກການປະຕິບັດ, ແຟ້ມສະສົມຜົນງານ ຊຶ່ງໃນການປະເມີນຜົນສາມາດປະເມີນລະຫວ່າງການຮຽນການສອນ ແລະ ປະເມີນສະຫຼຸບລວມ. (ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ; ປີ 2019; ໜ້າ 13) ການສອບເສັງເປັນການປະເມີນຄວາມຮູ້ຂອງນັກຮຽນໃນທ້າຍຊັ້ນຮຽນ ຫຼື ທ້າຍຊຸດການຮຽນ. ຕາມທໍາມະດາແລ້ວ ການສອບເສັງຈະຕ້ອງປະຕິບັດພາຍໃຕ້ຂໍ້ກໍານົດບາງຢ່າງເຊັ່ນ: ນັກຮຽນທຸກຄົນຈະຕ້ອງແກ້ຂໍ້ສອບ ຊຸດດຽວກັນ, ໃນເວລາ/ກໍານົດເວລາດຽວກັນ; ນັກຮຽນບໍ່ມີສິດໃຊ້ເອກະສານອ້າງອີງຂອງຕົນ; ບໍ່ມີສິດຊ່ວຍເຫຼືອກັນ ແລະ ກັນ ຫຼື ຮັບການຊ່ວຍເຫຼືອຈາກພາຍນອກ. ຜົນການສອບເສັງຈະໄດ້ອີງໃສ່ລະດັບຄະແນນທີ່ນັກຮຽນໄດ້ຮັບ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2004; ໜ້າ 74)

6. ຄູສອນມີການກະກຽມຄວາມພ້ອມໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ບົດສອນ; ອຸປະກອນ/ສື່ການຮຽນການສອນ; ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ ແລະ ແຜນການສອນ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມ ອຸປະກອນ/ສື່ການຮຽນການສອນ; ບົດສອນ; ແຜນການສອນ ແລະ ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມບົດສອນ; ອຸປະກອນ/ສື່ການຮຽນການສອນ; ຜ່ານໜ່ວຍງານ(ຈຸງານ)ວິຊາການ ເຊັ່ນຜ່ານຜູ້ບໍລິຫານໂຮງຮຽນ; ແຜນການສອນ. ເນື່ອງຈາກວ່າ ການກະກຽມຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງສອນ ມີແຜນການສອນປະຈຳພາກຮຽນ, ປີຮຽນ ແລະ ແຕ່ງບົດສອນຄົບຖ້ວນກ່ອນຂຶ້ນຫ້ອງສອນ; ສ້າງອຸປະກອນກະຽມສື່ການຮຽນການສອນ ແລະ ການທົດລອງເພື່ອຮັບໃຊ້ໃນການສອນ; ປຶ້ມຕິດຕາມ, ປຶ້ມຮຽກຊື່ ແລະ ໃຫ້ຄະແນນນັກຮຽນ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2013; ໜ້າ 3)
7. ຄູສອນມີການຜະລິດ ແລະ ນຳໃຊ້ສື່ການສອນເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປຶ້ມຕຳລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້); ໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນຳໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ); ໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ) ແລະ ຜະລິດສບໍ່ຕໍ່ເນື່ອງ, ບາງວິຊາບໍ່ສາມາດຜະລິດໄດ້ (ການຕອບສະໜອງຂອງຂັ້ນເທິ່ງຍັງບໍ່ພຽງພໍ). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມມີການຜະລິດສື່ການສອນ ໂດຍອີງໃສ່ປຶ້ມຕຳລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນຳໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ); ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້) ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມຄູມີການຜະລິດສື່ການສອນ (ສາມາດຜະລິດໄດ້ງ່າຍ) ໂດຍອີງໃສ່ປຶ້ມຕ□າລາຮຽນ ໃນແຕ່ລະບົດ ແລະ ນຳອຸປະກອນມາຜະລິດເປັນສື່ການສອນ (ເຈ້ຍ A4; ດິນດາກມາປັ້ນເປັນຮູບສັດ, ໃບໄມ້; ກ້ອນຫີນ; ກະປ໋ອງຢາງ); ຄູໄດ້ນຳໃຊ້ສື່ການສອນທີ່ມີຢູ່ໃນໂຮງຮຽນ, ນຳໃຊ້ເງິນບໍລິຫານໂຮງຮຽນຈັດຊື້ (ຂັ້ນເທິງຕອບສະໜອງໃຫ້); ຄູໄດ້ລະດົມນັກຮຽນຜະລິດສື່ທີ່ສາມາດເຮັດໄດ້ (ນັກຮຽນມີສ່ວນຮ່ວມໃນການຜະລິດ); ຄູໄດ້ນຳໃຊ້ອຸປະກອນທຳມະຊາດທີ່ຫາໄດ້ (ນຳໃຊ້ສື່ທີ່ມີຢູ່ໃນທ້ອງຖິ່ນ). ເນື່ອງຈາກວ່າ ອຸປະກອນການຮຽນການສອນແມ່ນເນັ້ນໃສ່ບັນດາອຸປະກອນພື້ນຖານ ທີ່ໂຮງຮຽນຕ້ອງມີ ເຊັ່ນ: ໂຕະ, ຕັ່ງ, ກະດານດຳ, ແລະ ອື່ນໆ ຕ້ອງພຽງພໍ ແລະ ໄດ້ມາດຕະຖານ. ນອກຈາກນັ້ນ, ກໍ່ຍັງເນັ້ນໜັກເຖິງອຸປະກອນການຮຽນຂອງນັກຮຽນ, ອຸປະກອນການສອນຂອງຄູ ແລະ ອຸປະກອນກິລາ/ສິລະປະອື່ນໆ ເຊິ່ງຕ້ອງມີພຽງພໍ ແລະ ມີຫ້ອງນ້ຳທີ່ສະອາດ ແລະ ພຽງພໍ. (ກະຊວງສຶກສາທິການ ແລະ ກິລາ; ປີ 2013; ໜ້າ 5)
8. ຄູສອນມີການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ແບບປະສົມປະສານ ຕາມຄວາມເໝາະສົມ (ເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ); ໃຫ້ນັກຮຽນຄົ້ນຄ້ວາ, ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນ□າຂອງຄູ; ຈັດເປັນກຸ່ມ ໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກຳ; ໃຊ້ຄຳຖາມ ສົນທະນາປະກອບຄຳຄິດເຫັນ ແລະ ໄປທັດສະນະສຶກສາ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມຈັດເປັນກຸ່ມໃຫ້ນັກຮຽນສະຫຼຸບ ແລະ ລາຍງານຜົນຂອງກິດຈະກຳ; ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ ແລະ ໃຊ້ຄຳຖາມ ສົນທະນາປະກອບຄຳຄິດເຫັນ ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມແບບປະສົມປະສານ ຕາມຄວາມເໝາະສົມ (ແບບເອົານັກຮຽນເປັນໃຈກາງ, ດາວຫ້າແຈ, ຢູບີດີ, ຕາຕະລາງ); ໃຫ້ນັກຮຽນຄົ້ນຄ້ວາ, ແລກປ່ຽນບົດຮຽນ, ປະຕິບັດຕົວຈິງ (ເຮັດຮ່ວມກັນ/ດ້ວຍຕົວເອງ) ໂດຍພາຍໃຕ້ການແນະນຳຂອງຄູ; ໄປທັດສະນະສຶກສາ. ເນື່ອງຈາກວ່າ ວິທີການສອນແບບເອົານັກຮຽນເປັນໃຈກາງ

ນັ້ນ, ໃນໄລຍະຕົ້ນປີການຊ່ວຍເຫຼືອຂອງຄູເປັນສິ່ງຈຳເປັນທີ່ສຸດ ແຕ່ເມື່ອນັກຮຽນເລີ່ມມີຄວາມໝັ້ນໃຈ ແລະ ສາມາດເພິ່ງຕົນເອງໄດ້ແລ້ວ, ຄວາມຕ້ອງການຊ່ວຍເຫຼືອຈາກຄູຈະຄ່ອຍໆຫຼຸດຜ່ອນລົງ. ໃນໄລຍະເລີ່ມຕົ້ນຄູອາດຈະເປັນຜູ້ນຳສະເໜີ, ແຕ່ພໍສອນໄປໄດ້ໄລຍະໜຶ່ງ, ຄູຄ່ອຍໆຫຼຸດຜ່ອນການນຳສະເໜີລົງ ປ່ອຍໃຫ້ນັກຮຽນພະຍາຍາມຮຽນຮູ້ດ້ວຍຕົນເອງໂດຍມີຄູເປັນຜູ້ຊ່ວຍ; ຜົນທີ່ຕາມມາແມ່ນເກີດຂະບວນການຮຽນແບບເອກະລາດ ໃນຂະນະທີ່ຄູເຮັດໜ້າທີ່ເປັນຜູ້ສັງເກດການຢູ່ຫ່າງໆ, ໃນກໍລະນີນີ້, ຄູກໍ່ປຽບເໝືອນວິທະຍາກອນທີ່ຄອຍໃຫ້ຄຳປຶກສາແກ່ນັກຮຽ. (ກົມມັດທະຍົມສຶກສາ; ປີ 2010; ໜ້າ 53-54)

9. ຄູສອນໄດ້ຮັບການພັດທະນາຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ); ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການນິເທດ (ຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ) ແລະ ແລກປ່ຽນບົດຮຽນ (ຈາກຄູສອນດ້ວຍກັນ/ຜູ້ມີປະສົບປະການ) ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມໄດ້ຮັບການຝຶກອົບຮົມ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ); ໄດ້ຮັບການຮ່ວມໂມງສອນ (ນິເທດພາຍໃນຈາກຜູ້ອຳນວຍການໂຮງຮຽນ,ຄູສອນດ້ວຍກັນ); ແລກປ່ຽນຖອດຖອນບົດຮຽນ (ໂຮງຮຽນ, ກຸ່ມໂຮງຮຽນ, ຄູນິເທດຂັ້ນເມືອງ, ຂັ້ນແຂວງ); ໄດ້ຮັບການນິເທດພາຍນອກ (ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ກະຊວງສຶກສາທິການ ແລະ ກິລາ). ເນື່ອງຈາກວ່າ ການຝຶກອົບຮົມ ຫຼື ການສ້າງແມ່ນບັນດາກິດຈະກຳທີ່, ໂດຍພື້ນຖານແລ້ວ, ແມ່ນແນ່ໃສ່ການຍົກທັກສະ, ຄວາມຮູ້ ແລະ ການປັບທັດສະນະຄະຕິເພື່ອໃຫ້ສາມາດປະຕິບັດວຽກງານໃນອາຊີບ, ໃນກຸ່ມອາຊີບ, ຂະແໜງການ ຫຼື ໃນຕຳແໜ່ງໃດໜຶ່ງ. (ກົມຈັດຕັ້ງ ແລະ ພະນັກງານ; ປີ 2004; ໜ້າ 65)

10. ຄູສອນມີການວັດ ແລະ ປະເມີນຜົນທີ່ເໝາະສົມເຂົ້າໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ; ໃຫ້ກິດຈະກຳເຮັດເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ; ກວດກາ/ສອບເສັງຫຼາຍຄັ້ງ; ຖາມ-ຕອບປາກເປົ່າເອົາຄະແນນ ແລະ ຄະແນນມີສ່ວນຮ່ວມ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມກວດກາທ້າຍບົດ, ກວດກາປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ; ວັດກ່ອນການສອນ, ໃນລະຫວ່າງການຈັດກິດຈະກຳການຮຽນການສອນ, ຫຼັງການຮຽນການສອນ; ດ້ວຍຫຼາຍຮູບແບບ (ທີ່ເໝາະສົມ) ແລະ ໃຫ້ກິດຈະກຳເປັນກຸ່ມ, ໃຫ້ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມກວດກາທ້າຍບົດ, ປະຈຳເດືອນ, ສອບເສັງປະຈຳພາກ, ສອບເສັງປະຈຳປີ; ກວດກາ/ສອບເສັງຫຼາຍຄັ້ງ; ຄະແນນມີສ່ວນຮ່ວມ; ໃຫ້ກິດຈະກຳເປັນກຸ່ມ, ວຽກບ້ານ, ກວດເບິ່ງວຽກບ້ານ, ກວດປຶ້ມ; ຖາມ-ຕອບປາກເປົ່າເອົາຄະແນນ. ເນື່ອງຈາກວ່າ ການປະເມີນຜົນສຳເລັດຂອງການຈັດຂະບວນການຮຽນທີ່ເນັ້ນນັກຮຽນເປັນໃຈກາງນັ້ນເປັນການປະເມີນທີ່ເນັ້ນຜົນທີ່ເກີດຂຶ້ນກັບນັກຮຽນເປັນສຳຄັນ ໂດຍການປະເມີນກ່ຽວກັບການພັດທະນາຂອງຜູ້ຮຽນ. ການສັງເກດພຶດຕະກຳການຮ່ວມກິດຈະກຳການຮຽນ ແລະ ການທົດສອບຄວບຄູ່ກັນ ເພື່ອຄົ້ນພົບສັກກະຍະພາບ, ຈຸດເດັ່ນ, ຈຸດດ້ອຍຂອງນັກຮຽນ ເພື່ອການພັດທະນາ ແລະ ກວດສອບວ່າຂະບວນການຮຽນໄດ້ພັດທະນານັກຮຽນຕາມຈຸດປະສົງການຮຽນທີ່ກຳນົດ ຫຼືບໍ່. ນອກຈາກນັ້ນ, ຜົນການຮຽນຂອງນັກຮຽນຈະເປັນຕົວຊີ້ວັດປະສິດທິພາບການສອນຂອງຄູ. (ກະຊວງສຶກສາທິການ ແລະ ກິລາ; ປີ

2019; ໜ້າ 13) ເຄື່ອງມືການປະເມີນຜົນສາມາດຊຸກຍູ້ ຫຼື ທ□າລາຍການຮຽນຮູ້ຂອງນັກຮຽນ. ໃນຫ້ອງຮຽນທົ່ວໄປ, ຄະແນນແມ່ນພື້ນຖານການຕີລາຄາການຮຽນຮູ້ຂອງນັກຮຽນ. ແຕ່ບົດສອບເສັງຂອງເຮົານັ້ນມັນຖືກຕ້ອງເໝາະສົມລະດັບໃດ ເພື່ອຮັບປະກັນວ່າຄະແນນແມ່ນຖືກຕ້ອງຕາມລະດັບການຮຽນຮູ້ຂອງນັກຮຽນ. (ກະຊວງສຶກສາທິການ ແລະ ກິລາ; ປີ 2014; ໜ້າ 104)

11. ຂໍ້ສະດວກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ນັກຮຽນມີການສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ , ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ນັກຮຽນມີການສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ; ນັກຮຽນໄດ້ຄົ້ນຄິດ, ຄົ້ນຄວ້າ, ຊອກຮູ້, ຊອກຫາຄຳຕອບ ແລະ ແກ້ໄຂບັນຫາ ດ້ວຍຕົນເອງ ແລະ ນັກຮຽນສາມາດສອນເພື່ອນຜູ້ທີ່ຮຽນອ່ອນຊ່ວຍຄູສອນໄດ້ ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມຄູມີແຕ່ໃຫ້ຄຳແນະນຳ ແລະ ຕິດຕາມ (ບໍ່ໄດ້ເວົ້າຫຼາຍ); ມີຫ້ອງຮຽນ, ປຶ້ມຕຳລາ, ອຸປະກອນ ແລະ ສື່ການສອນຄົບຖ້ວນ; ມີສົນທະນາແລກປ່ຽນບົດຮຽນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມກິດຈະກຳຕ່າງໆ (ກິດຈະກຳເປັນກຸ່ມ) ແລະ ມີການປະຕິບັດຕົວຈິງ. ເນື່ອງຈາກວ່າ ຜູ້ບໍລິຫານໂຮງຮຽນ ໄດ້ເຜີຍແຜ່ ແລະ ຄູສອນໄດ້ຈັດຕັ້ງປະຕິບັດຜັນຂະຫຍາຍ ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນ ເລກທີ 389/ສສກ ລົງວັນທີ 29 ມິນາ 2019 ເຂົ້າໃນການຈັດການຮຽນການສອນ ໂດຍຖືວ່າຜູ້ຮຽນທຸກຄົນມີຄວາມສາມາດຮຽນ ແລະ ພັດທະນາຕົນເອງໄດ້; ສອດຄ່ອງກັບຄວາມສາມາດ, ຄວາມຕ້ອງການ, ຄວາມສົນໃຈ ແລະ ພອນສະຫວັນຂອງຜູ້ຮຽນ; ນຳໃຊ້ວິທີສອນ, ເຕັກນິກການສອນ ແລະ ສື່ທີ່ຫຼາກຫຼາຍ ເຂົ້າໃນກິດຈະກຳການຮຽນການສອນ ເພື່ອໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນການຮຽນ ແລະ ໄດ້ລົງມືປະຕິບັດຕົວຈິງ; ເນັ້ນການຄິດວິເຄາະ, ການແກ້ບັນຫາ, ການປະດິດສ້າງ ແລະ ຄວາມສາມາດໃນການນຳໃຊ້ຄວາມຮູ້ທີ່ຮຽນມາໄປໃຊ້ໃນຊີວິດຕົວຈິງ; ຈັດກິດຈະກຳການຮຽນການສອນທັງຢູ່ໃນ ແລະ ນອກຫ້ອງຮຽນ; ຈັດກິດຈະກຳນອກຫຼັກສູດ ຫຼື ກິດຈະກຳເສີມການຮຽນຕ່າງໆ. ( ກະຊວງສຶກສາທິການ ແລະ ກິລາ; ປີ 2019; ໜ້າ 1-2)

12. ຂໍ້ຫຍຸ້ງຍາກໃນການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ເວລາໃນການສອນບໍ່ພໍ (ສອນຊ້ຳລົງ) ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ; ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ),ໄດ້ຄົ້ນຄ້ວາຫຼາຍ ແລະ ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ. ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ໄດ້ກະກຽມອຸປະກອນສຳລັບນັກຮຽນ, ອຸປະກອນບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ຄວາມຮູ້ຄວາມສາມາດຂອງຄູບໍ່ພຽງພໍ ການນຳໃຊ້ສື່ການສອນບາງອັນຍັງບໍ່ທັນເຂົ້າໃຈ (ບໍ່ເຂົ້າໃຈການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ); ລະດັບຄວາມຮູ້ຂອງນັກຮຽນບໍ່ເທົ່າກັນ, ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ຂຽນ, ຕິດໄລ່ເລກ ແລະ ງົບປະມານບໍລິຫານໂຮງຮຽນມາຮັບໃຊ້ການຮຽນການສອນຍັງບໍ່ພຽງພໍ ແລະ ຊັກຊ້າ ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມຄູຕ້ອງໄດ້ປະດິດສື່ການຮຽນການສອນທີ່ຫຼາກຫຼາຍ, ຕ້ອງໄດ້ກະກຽມອຸປະກອນສຳລັບນັກຮຽນ, ປຶ້ມຕຳລາ, ອຸປະກອນ/ສື່ບໍ່ພຽງພໍ/ບໍ່ທົ່ວເຖິງ (ເຕັກໂນໂລຊີ); ນັກຮຽນບໍ່ສົນໃຈ, ບໍ່ເອົາໃຈໃສ່ ແລະ ບໍ່ເຂົ້າໃຈຕໍ່ການຮຽນການສອນ (ນັກຮຽນອ່ອນທີ່ຮຽນຊ້າ, ນັກຮຽນເປັນຜູ້ນ້ອຍ ແລະ ເດັກພິເສດ); ເວລາໃນການສອນບໍ່ພໍ (ສອນຊ້ຳລົງ)

ອະທິບາຍຫຼາຍ, ເນື້ອໃນບົດຮຽນຊ້ຳ ສຳລັບການປະຕິບັດກິດຈະກຳ (ກິດຈະກຳຫຼາຍ) ແລະ ບົດຮຽນບາງວິຊາຫຼາຍ; ຄູໄດ້ກະກຽມແຕ່ງບົດສອນຫຼາຍ(ຍາກ),ໄດ້ຄົ້ນຄ້ວາຫຼາຍ; ຂາດຄວາມກ້າຫານບໍ່ມັກໃຫ້ຄຳຕອບ (ເອີ້ຍອີງໃສ່ໝູ່) ບໍ່ມີຄວາມສາມາດໃນການອ່ານ, ການຂຽນ, ຄິດໄລ່ເລກ. ເນື່ອງຈາກວ່າ ຫຼັກສູດຂອງຊັ້ນປະຖົມສຶກສາຂັ້ນຕົ້ນ (ປ.1 ແລະ ປ.2) ມີຫຼາຍວິຊາຮຽນ ແລະ ບໍ່ມີການສອນບຳລຸງ ເພື່ອຊ່ວຍນັກຮຽນອ່ອນ. ຄູສອນສຸມໃສ່ແຕ່ໃຫ້ສຳເລັດການສິດສອນຫຼັກສູດ ແທນທີ່ຈະກວດກາເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ເນື້ອໃນທີ່ສິດສອນຂອງຕົນເປັນບູລິມະສິດ, ທັງນີ້ກໍ່ຍ້ອນວ່າຄູສຶກສານິເທດແມ່ນໄດ້ກວດກາການແຕ່ງບົດສອນເປັນຫຼັກ. ເປັນທີ່ຮັບຮູ້ກັນວ່າ ການກວດກາແຜນການສອນແມ່ນວຽກທີ່ສຳຄັນ, ໃນຂະນະທີ່ການປ່ຽນແປງວິທີການສິດສອນ ເພື່ອຕອບສະໜອງຄວາມຕ້ອງການດ້ານການຮຽນຂອງນັກຮຽນ ຄູສອນຕ້ອງມີທັກສະວິຊາການທີ່ແນ່ນອນ ເຊິ່ງປະຈຸບັນທັງຄູສຶກສານິເທດ ແລະ ຄູສອນຍັງບໍ່ໄດ້ຮັບການຝຶກອົບຮົມ. ຄູສອນຫ້ອງຄວບຂາດການຊ່ວຍເຫຼືອດ້ານຫຼັກວິຊາຄູ. ການພິມປຶ້ມທົດແທນບໍ່ພຽງພໍ ແລະ ບໍ່ປົກກະຕິຕາມຄວາມຕ້ອງການ. ຄຸນນະພາບຂອງນັກຮຽນທີ່ຈົບປະຖົມສຶກສາ ບໍ່ທັນພຽງພໍທີ່ຈະສືບຕໍ່ເຂົ້າຮຽນໃນຊັ້ນມັດທະຍົມ, ພ້ອມນັ້ນຄວາມຮູ້ດ້ານວິຊາສະເພາະ ແລະ ທັກສະດ້ານວິຊາຄູຂອງຄູມັດທະຍົມແມ່ນຍັງບໍ່ພຽງພໍທີ່ຈະສອນຫຼັກສູດທີ່ມີຫຼາຍວິຊາຮຽນເກີນໄປ. ຄວາມຕ້ອງການຄູສອນທີ່ເປັນຊ່ຽວຊານສຳລັບທຸກໆວິຊາຮຽນແມ່ນບໍ່ສາມາດສະໜອງໃຫ້ໄດ້ຍ້ອນມີຄ່າໃຊ້ຈ່າຍສູງ. ນັກຮຽນປະລະຍ້ອນຫຼາຍສາເຫດ ເຊັ່ນ: ຄວາມທຸກຍາກ, ບ້ານຢູ່ຫ່າງໄກຈາກໂຮງຮຽນ, ຫຼັກສູດຍາວເກີນໄປ, ຊຶ່ງພວກເຂົາບໍ່ມີເວລາກະກຽມພຽງພໍ ແລະ ນັກຮຽນກໍ່ເຂົ້າໃຈວ່າເວລາຮຽນຈົບກໍ່ບໍ່ມີວຽກເຮັດທີ່ດີ. (ກະຊວງສຶກສາທິການ ແລະ ກິລາ; ປີ 2020; ໜ້າ 15)

13. ຜູ້ບໍລິຫານໂຮງຮຽນມີແນວທາງພັດທະນາ ຫຼື ວິທີແກ້ໄຂບັນຫາການສອນຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ພົບວ່າ ຍົກລະດັບ, ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ຈັດນິເທດພາຍໃນ, ຮ່ວມໂມງສອນ, ຖອດຖອນບົດຮຽນ, ແລກປ່ຽນບົດຮຽນບັນດາຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ); ຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປື້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ ແລະ ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັ່ນບົດສອນປະຈຳອາທິດ). ເມື່ອພິຈາລະນາເປັນຊັ້ນຮຽນ ພົບວ່າ ຜູ້ບໍລິຫານໂຮງຮຽນຊັ້ນປະຖົມຝຶກອົບຮົມ (ຍົກລະດັບ)ຄູໃຫ້ຫຼາຍຂຶ້ນ; ເຂົ້າຮ່ວມຊົ່ວໂມງສອນ, ແລກປ່ຽນຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ (ນິເທດພາຍໃນ); ຄົ້ນຄິດຜະລິດສື່/ຊອກຫາສື່/ນຳໃຊ້ສື່-ອຸປະກອນການສອນໃຫ້ຫຼາກຫຼາຍຂຶ້ນຕື່ມ (ສື່ເຕັກໂນໂລຊີ) ຕ້ອງມີປື້ມແບບຮຽນຕຳລາຮຽນໃຫ້ຄົບທຸກຄົນ; ຕິດຕາມ, ກວດກາຄູຂຶ້ນຫ້ອງບໍ່ໃຫ້ຂາດ (ຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງ, ເຊັ່ນບົດສອນປະຈຳອາທິດ) ແລະ ຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມຍົກລະດັບ, ຝຶກອົບຮົມຄູໃຫ້ຫຼາຍຂຶ້ນ; ຈັດນິເທດພາຍໃນ, ຮ່ວມໂມງສອນ, ແລກປ່ຽນຖອດຖອນບົດຮຽນກັບຄູ ແລະ ຜູ້ບໍລິຫານໂຮງຮຽນ (ຜູ້ມີປະສົບການ). ເນື່ອງຈາກວ່າ ການພັດທະນາແມ່ນການຍົກລະດັບໃຫ້ພະນັກງານ-ລັດຖະກອນມີຄຸນທາດການເມືອງ, ຄຸນສົມບັດ ສິນທຳປະຕິວັດ, ຄວາມຮູ້ດ້ານການເມືອງ, ການປົກຄອງ, ຄວາມຮູ້ດ້ານວິທະຍາສາດ, ວິທະຍາການສູງຂຶ້ນຢ່າງເປັນລະບົບ ເພື່ອສາມາດປະຕິບັດວຽກງານໃຫ້ມີປະສິດທິພາບ. (ສະພາແຫ່ງຊາດ; ປີ 2015; ໜ້າ 13) ການຝຶກອົບຮົມເປັນຂະບວນການຈັດກິດຈະກຳຕາມຄວາມຈຳເປັນ ເພື່ອພັດທະນາຄວາມຮູ້, ຄວາມເຂົ້າໃຈ, ທັກສະ ແລະ ຄຸນສົມບັດຂອງບຸກຄະລາກອນເພື່ອຈະໄດ້ນຳເອົາໄປໃຊ້ ຫຼື ແກ້ບັນຫາຂອງວຽກງານທີ່ກຳລັງປະຕິບັດຢູ່ໃຫ້ບັນລຸຄວາມສຳເລັດຕາມໜ້າທີ່ຂອງອົງການທີ່ກຳນົດໄວ້. (ຄະນະສຶກສາສາດ; ປີ 2008; ໜ້າ 1)

# ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2010).*ຄູ່ມືຄູການຈັດການຮຽນການສອນຊຸມປະຖົມສຶກສາ ເຫຼັ້ມທີ I.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2011).*ຄູ່ມືຄູການຈັດການຮຽນການສອນຊຸມປະຖົມສຶກສາ ເຫຼັ້ມທີ II.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2012).*ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2013).*ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນປະຖົມສຶກສາ.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2014).*ຄູ່ມືແນະນຳວິທີສິດສອນ.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2019).*ຄຳສັ່ງວ່າດ້ວຍການນຳໃຊ້ຮູບແບບການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງໃນໂຮງຮຽນສາມັນສຶກສາ.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2020).*ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາປະຈຳປີ 2019 ແລະ ແຜນການປະຈຳປີ 2020ຂອງຂະແໜງການຍ່ອຍ.* ນະຄອນຫຼວງວຽງຈັນ

ກະຊວງສຶກສາທິການ ແລະ ກິລາ. (2020).*ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025).* ນະຄອນຫຼວງວຽງຈັນ

ກົມຈັດຕັ້ງ ແລະ ພະນັກງານ. (2004).*ປະມວນຄຳສັບວິຊາການສຶກສາ.* ປະເທດໄທ

ກົມຈັດຕັ້ງ ແລະ ພະນັກງານ. (2013).*ບົດແນະນຳ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ.* ນະຄອນຫຼວງວຽງຈັນ

ກົມມັດທະຍົມສຶກສາ. (2010).*ປຶ້ມຄູ່ມືແນະນຳວິທີສິດສອນ.* ນະຄອນຫຼວງວຽງຈັນ

ກົມມັດທະຍົມສຶກສາ. (2013).*ຫຼັກການຄຸ້ມຄອງໂຮງຮຽນມັດທະຍົມສຶກສາ.* ນະຄອນຫຼວງວຽງຈັນ

ກົມອາຊີວະສຶກສາ. (2018).*ຄູ່ມືເຫຼັ້ມທີ II ໂມດູນການຮຽນການສອນແບບເນັ້ນສະມັດຖະພາບສຳລັບແນວຄິດການຮຽນການສອນເອົານັກຮຽນເປັນໃຈກາງ.* ນະຄອນຫຼວງວຽງຈັນ

ຄະນະສຶກສາສາດ. (2006). *ການປະເມີນຜົນການຮຽນການສອນ.* ນະຄອນຫຼວງວຽງຈັນ

ຄະນະສຶກສາສາດ. (2008). *ຄູ່ມືການຝຶກອົບຮົມທາງດ້ານການບໍລິຫານການສຶກສາ.* ນະຄອນຫຼວງວຽງຈັນ

ສະພາແຫ່ງຊາດ. (2015). *ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.* ນະຄອນຫລວງວຽງຈັນ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2010). *ຫຼັກສູດຊັ້ນປະຖົມສຶກສາ.* ນະຄອນຫລວງວຽງຈັນ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2010). *ຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ.* ນະຄອນຫລວງວຽງຈັນ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2011). *ຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ.* ນະຄອນຫລວງວຽງຈັນ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2019). *ເອກະສານສຳລັບຄົ້ນຄວ້າການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ.* ນະຄອນຫລວງວຽງຈັນ

ລັດຖະບານ. (2017). *ດຳລັດວ່າດ້ວຍການຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ.* ນະຄອນຫລວງວຽງຈັນ

Best, J. W., & Kahn, J. V. (1993). *Research in education* (7thed.). Boston: Allyn and Bacon.

## ເອກະສານຊ້ອນທ້າຍ

- ສຳເນົາຂໍເກັບລວບລວມຂໍ້ມູນເພື່ອຫາຄຸນນະພາບເຄື່ອງມື
- ສຳເນົາຂໍເກັບລວບລວມຂໍ້ມູນເພື່ອການວິໄຈ
- ເຄື່ອງມືທີ່ໃຊ້ໃນການວິໄຈ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ສະຖາບັນພັດທະນາການບໍລິຫານການສຶກສາ ເລກທີ /ສພບ.17

ນະຄອນຫຼວງວຽງຈັນ,ວັນທີ ມັງກອນ 2017

**ໜັງສືສະເໜີ**

**ຮຽນ:** ທ່ານຜູ້ອຳນວຍການໂຮງຮຽນ.................................................
(ໂດຍຜ່ານການຈັດຕັ້ງທີ່ກ່ຽວຂ້ອງ)

**ເລື່ອງ:** ຂໍອະນຸມັດເກັບກຳລວບລວມຂໍ້ມູນເພື່ອທົດລອງຄຸນນະພາບເຄື່ອງມືໃນການວິໄຈ

ອີງຕາມ: ແຜນການເຮັດວິໄຈຂອງສະຖາບັນພັດທະນາການບໍລິຫານການສຶກສາປະຈຳປີ 2017

ອີງຕາມ: ການສະເໜີຂອງພະແນກຂໍ້ມູນຂ່າວສານ, ວິໄຈ ແລະ ປະເມີນຜົນ

ສະຖາບັນພັດທະນາການບໍລິຫານການສຶກສາ ໄດ້ເຮັດໜັງສືສະເໜີນີ້ມາຍັງທ່ານຜູ້ອຳນວຍການໂຮງຮຽນ ....................................... ເພື່ອຂໍອະນຸມັດ ແລະ ອຳນວຍຄວາມສະດວກໃນການເກັບກຳລວບລວມຂໍ້ມູນເພື່ອທົດລອງຄຸນນະພາບເຄື່ອງມືໃນການວິໄຈ " ຄວາມຕ້ອງການຝຶກອົບຮົມຂອງຄູເປົ້າໝາຍທີ່ຈະເປັນຜູ້ບໍລິຫານໂຮງຮຽນສາມັນສຶກສາ " ນ□າຄູສອນຢູ່ໃນໂຮງຮຽນຂອງທ່ານ

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຜູ້ອຳນວຍການສະຖາບັນ,**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງສຶກສາທິການ ແລະ ກິລາ**

**ຫ້ອງການ** ເລກທີ 1192/ຫກ

ນະຄອນຫຼວງວຽງຈັນ,ວັນທີ 11 ເມສາ 2017

**ແຈ້ງການ**

**ຮຽນ**: ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ

**ເລື່ອງ**: ການລົງເກັບກຳຂໍ້ມູນພາກສະໜາມ ການວິໄຈ ກ່ຽວກັບ: ຄວາມຕ້ອງການຝຶກອົບຮົມໃຫ້ຄູສອນເປົ້າໝາຍທີ່ຈະເປັນຜູ້ບໍລິຫານໂຮງຮຽນສາມັນສຶກສາ

- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມລົງເກັບກຳຂໍ້ມູນພາກສະໜາມ ການວິໄຈ ກ່ຽວກັບ: ຄວາມຕ້ອງການຝຶກອົບຮົມໃຫ້ຄູສອນເປົ້າໝາຍທີ່ຈະເປັນຜູ້ບໍລິຫານໂຮງຮຽນສາມັນສຶກສາ ໃນ 7 ແຂວງ ສະບັບເລກທີ 485 /ສສກ. 14 ກັນຍາ 2016
- ອີງຕາມ ການແບ່ງປັນງົບປະມານຂອງລັດຖະບານປະຈຳສົກປີ 2015 – 2016

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງຊາບວ່າ: ສະຖາບັນພັດທະນາການບໍລິຫານການສຶກສາ ຈະລົງມາເກັບກຳຂໍ້ມູນ ການວິໄຈ ກ່ຽວກັບ: ຄວາມຕ້ອງການຝຶກອົບຮົມໃຫ້ຄູສອນເປົ້າໝາຍທີ່ຈະເປັນຜູ້ບໍລິຫານໂຮງຮຽນສາມັນສຶກສາ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

❖ **ຄະນະຮັບຜິດຊອບລົງເກັບກຳຂໍ້ມູນຄັ້ງນີ້ ປະກອບມີ**

1. ຄະນະອຳນວຍການສະຖາບັນພັດທະນາການບໍລິຫານການສຶກສາ 2 ທ່ານ
2. ຄະນະພະແນກ ຫຼື ວິຊາການສຶກສາທິການ ແລະ ກິລາແຂວງ 7 ທ່ານ
3. ຄະນະຫ້ອງການ ຫຼື ວິຊາການສຶກສາທິການ ແລະ ກິລາເມືອງ 7 ທ່ານ
4. ວິຊາການຈາກສະຖາບັນພັດທະນາການບໍລິຫານການສຶກສາ 10 ທ່ານ
5. ພະນັກງານຂັບລົດຈາກສະຖາບັນພັດທະນາການບໍລິຫານການສຶກສາ 2 ທ່ານ

❖ **ກຸ່ມເປົ້າໝາຍຜູ້ໃຫ້ຂໍ້ມູນ ແລະ ສະຖານທີ່ລົງເກັບກຳຂໍ້ມູນ**

1. ພະແນກສຶກສາທິການ ແລະ ກິລາແຂວງ ປະກອບມີ:

   1.1 ຫົວໜ້າ ຫຼື ຮອງຫົວໜ້າ ພະແນກສຶກສາທິການ ແລະ ກິລາແຂວງ 7 ທ່ານ

1.2 ຫົວໜ້າ ຫຼື ຮອງຫົວໜ້າຂະແໜງ ຈັດຕັ້ງ ແລະ ພະນັກງານ 7 ທ່ານ

1.3 ຫົວໜ້າ ຫຼື ຮອງຫົວໜ້າຂະແໜງມັດທະຍົມ 7 ທ່ານ

1.4 ຫົວໜ້າ ຫຼື ຮອງຫົວໜ້າຂະແໜງ ປະຖົມ - ອະນຸບານ 7 ທ່ານ

2. ຫ້ອງການສຶກສາທິການ ແລະ ກິລາ ເມືອງ ປະກອບມີ:

2.1 ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາ ເມືອງ 14 ທ່ານ

2.2 ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານ ຈັດຕັ້ງ ແລະ ພະນັກງານ 14 ທ່ານ

2.3 ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານ ສາມັນ 14 ທ່ານ

3. ໂຮງຮຽນມັດທະຍົມ ແລະ ໂຮງຮຽນປະຖົມຢູ່ ປະກອບມີ:

3.1 ອໍານວຍການ ຫຼື ຮອງອໍານວຍການໂຮງຮຽນ 56 ທ່ານ

3.2 ຄູສອນຜູ້ຈະເປັນເປົ້າໝາຍເປັນຜູ້ບໍລິຫານໂຮງຮຽນ 170 ທ່ານ

❖ **ໄລຍະເວລາຈັດຕັ້ງປະຕິບັດ**

- ເລີ່ມແຕ່ ວັນທີ 24 ເມສາ 2017 - 19 ພຶດສະພາ 2017

❖ **ວິທີດໍາເນີນການເກັບກໍາຂໍ້ມູນ**

- ເຂົ້າພົບຄະນະພະແນກສຶກສາທິການ ແລະ ກິລາແຂວງ ເພື່ອແຈ້ງຈຸດປະສົງ,ກຸ່ມເປົ້າໝາຍ ແລະ ສໍາພາດຜູ້ບໍລິຫານການສຶກສາຂັ້ນແຂວງ
- ເຂົ້າພົບຄະນະຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອແຈ້ງຈຸດປະສົງ ,ກຸ່ມເປົ້າໝາຍແລະ ສໍາພາດຜູ້ບໍລິຫານ ການສຶກສາຂັ້ນເມືອງ
- ທີມງານຂັ້ນສູນກາງ; ແຂວງ ແລະ ເມືອງ ລົງເກັບກໍາຂໍ້ມູນຕາມໂຮງຮຽນ ໂດຍສໍາພາດຜູ້ບໍລິຫານໂຮງຮຽນ ແລະ ຢາຍແບບຟອມໃຫ້ຄູອາຈານຕອບແບບຟອມ
- ສະຫຼຸບລາຍງານຜົນການເກັບກໍາຂໍ້ມູນໃຫ້ແຂວງຮັບຊາບ

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານ ເພື່ອກະກຽມ ແລະ ປະສານຫາພາກທີ່ກ່ຽວຂ້ອງຮັບຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ

**ຫົວໜ້າຫ້ອງການ**

## ແບບສອບຖາມ